ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 322 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 25 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 070/ສພຊ, ລົງວັນທີ 15 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 034/ຄປຈ, ລົງວັນທີ 12 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 070 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 15/11/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າຂອງ ວັນທີ 15 ພະຈິກ 2017.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊັບສິນທາງປັນຍາ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 38 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 15 ພະຈິກ 2017

# ກົດໝາຍ
# ວ່າດ້ວຍຊັບສິນທາງປັນຍາ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 (ປັບປຸງ) ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ ເພື່ອຊຸກຍູ້, ສົ່ງເສີມ ຫົວຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດພູມປັນຍາ, ການພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ ແລະ ການຖ່າຍທອດ ເຕັກໂນໂລຊີ ຢູ່ພາຍໃນ ແລະ ຈາກຕ່າງປະເທດ ຮັບປະກັນຜົນປະໂຫຍດອັນຊອບທຳ ຂອງເຈົ້າຂອງຊັບສິນທາງປັນຍາ ແລະ ຜົນປະໂຫຍດ ຂອງລັດ, ສັງຄົມ ແນໃສ່ສົ່ງເສີມການຄ້າ, ການລົງທຶນ ແລະ ຄວາມອາດສາມາດ ໃນການແຂ່ງຂັນຕາມກົນໄກເສດຖະກິດຕະຫຼາດ ຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ຫັນປະເທດເປັນອຸດສາຫະກຳ ແລະ ທັນສະໄໝ.

### ມາດຕາ 2 ຊັບສິນທາງປັນຍາ

ຊັບສິນທາງປັນຍາ ແມ່ນ ຜົນງານທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ຊຶ່ງເປັນຜູ້ປະດິດສ້າງ ແລະ ປະດິດຄິດແຕ່ງຂຶ້ນມາ.

### ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສິດຕໍ່ຊັບສິນທາງປັນຍາ** ໝາຍເຖິງ ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນທາງປັນຍາ;
2. **ຊັບສິນອຸດສາຫະກຳ** ໝາຍເຖິງ ຊັບສິນທາງປັນຍາ ໃນຂົງເຂດ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ, ການຄ້າ ແລະ ການບໍລິການ;

3. **ສິດທາງດ້ານຊັບສິນອຸດສາຫະກຳ** ໝາຍເຖິງ ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນອຸດສາຫະກຳ;

4. **ສິດທິບັດ** ໝາຍເຖິງ ເອກະສານຢັ້ງຢືນທີ່ເປັນທາງການຈາກການຈັດຕັ້ງລັດ ເພື່ອປົກປ້ອງການປະດິດສ້າງທີ່ໃໝ່, ມີຂັ້ນຕອນການປະດິດສ້າງ ແລະ ສາມາດນຳໃຊ້ເຂົ້າສູ່ການຜະລິດອຸດສາຫະກຳໄດ້;

5. **ການປະດິດສ້າງ** ໝາຍເຖິງ ການນຳໃຊ້ວິທີການທາງດ້ານເຕັກນິກ ເພື່ອສ້າງຜະລິດຕະພັນ ຫຼື ກຳມະວິທີການຜະລິດໃໝ່ ໃນການແກ້ໄຂບັນຫາສະເພາະໃດໜຶ່ງ;

6. **ອະນຸສິດທິບັດ** ໝາຍເຖິງ ເອກະສານຢັ້ງຢືນທີ່ເປັນທາງການຈາກການຈັດຕັ້ງລັດ ເພື່ອປົກປ້ອງສິ່ງປະດິດ;

7. **ສິ່ງປະດິດ** ໝາຍເຖິງ ຜົນງານການປະດິດໃໝ່ ທີ່ໄດ້ຈາກການປັບປຸງ ທາງດ້ານເຕັກນິກ ດ້ວຍການນຳໃຊ້ເຕັກນິກ ທີ່ບໍ່ສູງຄືການປະດິດສ້າງ ເພື່ອປັບປຸງຜະລິດຕະພັນ ຫຼື ກຳມະວິທີການຜະລິດໃໝ່;

8. **ແບບອຸດສາຫະກຳ** ໝາຍເຖິງ ຮູບແບບ ຫຼື ຮູບຮ່າງ ຂອງຜະລິດຕະພັນ ທີ່ສ້າງຂຶ້ນ ຊຶ່ງປະກອບດ້ວຍຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ;

9. **ເຄື່ອງໝາຍ** ໝາຍເຖິງ ສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າ ຫຼື ການບໍລິການຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ທີ່ແຕກຕ່າງຈາກສັນຍາລັກຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ;

10. **ເຄື່ອງໝາຍການຄ້າ** ໝາຍເຖິງ ເຄື່ອງໝາຍ ທີ່ໄດ້ກຳນົດໄວ້ໃນຂໍ້ ໙ ຂອງມາດຕານີ້ ເພື່ອນຳໃຊ້ກັບສິນຄ້າ ຫຼື ການບໍລິການ ທັງເປັນການຈຳແນກ ລະຫວ່າງ ສິນຄ້າ ຫຼື ການບໍລິການນີ້ ກັບສິນຄ້າ ຫຼື ການບໍລິການອື່ນ;

11. **ເຄື່ອງໝາຍລວມໝູ່** ໝາຍເຖິງ ເຄື່ອງໝາຍການຄ້າ ທີ່ນຳໃຊ້ຮ່ວມກັນໂດຍວິສາຫະກິດ ໃນກຸ່ມດຽວກັນ ຫຼື ໂດຍສະມາຊິກຂອງສະມາຄົມ, ສະຫະກອນ, ອົງການຈັດຕັ້ງໃດໜຶ່ງ ຂອງລັດ ຫຼື ເອກະຊົນ ຫຼື ກຸ່ມບຸກຄົນ;

12. **ເຄື່ອງໝາຍຮັບຮອງ** ໝາຍເຖິງ ເຄື່ອງໝາຍການຄ້າທີ່ເຈົ້າຂອງໄດ້ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ນຳໃຊ້ກັບສິນຄ້າ ຫຼື ການບໍລິການຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ ເພື່ອຢັ້ງຢືນຄຸນລັກສະນະ ທີ່ພົວພັນເຖິງທີ່ມາ, ວັດຖຸດິບ ແລະ ວິທີການຜະລິດສິນຄ້າ ຫຼື ວິທີການໃຫ້ການບໍລິການ, ຊະນິດ, ຄຸນນະພາບ, ຄວາມປອດໄພ ຫຼື ຄຸນລັກສະນະອື່ນຂອງສິນຄ້າ ຫຼື ການບໍລິການ;

13. **ເຄື່ອງໝາຍທີ່ມີຊື່ສຽງ** ໝາຍເຖິງ ເຄື່ອງໝາຍການຄ້າ ທີ່ຮັບຮູ້ກັນໂດຍທົ່ວໄປຢ່າງກວ້າງຂວາງ ລວມທັງເຄື່ອງໝາຍການຄ້າ ທີ່ມີການຮັບຮູ້ຈາກຜົນຂອງການສົ່ງເສີມເຄື່ອງໝາຍການຄ້າດັ່ງກ່າວ ຢູ່ໃນດິນແດນຂອງ ສປປລາວ;

14. **ວົງຈອນລວມ** ໝາຍເຖິງ ຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ຊຶ່ງສ່ວນປະກອບຕ່າງໆ ຂອງຜະລິດຕະພັນ ແມ່ນສ່ວນປະກອບທີ່ໃຊ້ການໄດ້ ແລະ ສ່ວນເຊື່ອມຕໍ່ບາງສ່ວນ ຫຼື ທັງໝົດ ຖືກເຊື່ອມຕໍ່ປະສານຮ່ວມເຂົ້າກັນຢູ່ໃນ ແລະ/ຫຼື ຢູ່ເທິງວັດຖຸເຄິ່ງຕົວນຳ ແລະ ຜະລິດຕະພັນນັ້ນ ມີຈຸດປະສົງປະຕິບັດໜ້າທີ່ທາງດ້ານເອເລັກໂຕຣນິກ;

15. **ວັດຖຸເຄິ່ງຕົວນຳ (Semiconductor)** ໝາຍເຖິງ ວັດຖຸທີ່ມີໜ້າທີ່ນຳກະແສໄຟຟ້າ ເຊື່ອມຕໍ່ລະຫວ່າງຕົວນຳ ກັບ ສະນວນກັນໄຟຟ້າ;

16. **ແບບຜັງວົງຈອນລວມ** ໝາຍເຖິງ ການຈັດວາງວົງຈອນລວມ ທີ່ສະແດງອອກໃນຮູບແບບສາມມິຕິໃດກໍຕາມ ຊຶ່ງຢ່າງໜ້ອຍມີສ່ວນປະກອບໜຶ່ງ ທີ່ໃຊ້ການໄດ້ ແລະ ສ່ວນເຊື່ອມຕໍ່ບາງສ່ວນ ຫຼື ທັງໝົດ ຂອງວົງ

ຈອນລວມ ຫຼື ການຈັດວາງວົງຈອນລວມໃນຮູບແບບສາມມິຕິເທົ່ານັ້ນ ເຮັດຂຶ້ນມາເປັນວົງຈອນລວມທີ່ມີຈຸດປະສົງສຳລັບການຜະລິດ;

17. **ຖິ່ນກຳເນີດ** ໝາຍເຖິງ ສັນຍາລັກ ທີ່ບົ່ງບອກ ທີ່ມາຂອງສິນຄ້າຈາກດິນແດນ, ເຂດ ຫຼື ທ້ອງຖິ່ນຂອງປະເທດໃດໜຶ່ງ ຊຶ່ງເປັນສິ່ງສຳຄັນພາໃຫ້ສິນຄ້າມີຄຸນນະພາບ ແລະ ມີຊື່ສຽງ ຫຼື ຄຸນລັກສະນະອື່ນ ທີ່ຕິດພັນກັບພູມສາດ;

18. **ພັນພືດ** ໝາຍເຖິງ ກຸ່ມຂອງພືດ ທີ່ມີລັກສະນະທາງພຶກສາຊາດ ຢ່າງດຽວກັນ ແລະ ບໍ່ທັນຮູ້ຈັກກັນທົ່ວໄປ ຊຶ່ງສາມາດກຳນົດຄຸນລັກສະນະຕ່າງໆ ທີ່ເປັນຜົນມາຈາກ ປະເພດພັນທຸກຳໃດໜຶ່ງ ຫຼື ຫຼາຍປະເພດພັນທຸກຳຮ່ວມກັນ, ມີຄວາມແຕກຕ່າງຈາກກຸ່ມອື່ນ ໃນພືດຊະນິດດຽວກັນ ຢ່າງໜ້ອຍໜຶ່ງຄຸນລັກສະນະ, ມີຄວາມສະໝໍ່າສະເໝີ ແລະ ມີຄວາມຄົງທີ່ ໃນເວລານຳໄປຂະຫຍາຍພັນ ໂດຍບໍ່ຄຳນຶງວ່າ ຈະຄົບຕາມເງື່ອນໄຂສຳລັບການໃຫ້ສິດການປົກປ້ອງກຸ່ມຂອງພືດດັ່ງກ່າວ ໃຫ້ແກ່ນັກປະສົມພັນ ຫຼື ບໍ່ກໍຕາມ;

19. **ສ່ວນຂະຫຍາຍພັນ** ໝາຍເຖິງ ພືດ ຫຼື ສ່ວນໃດສ່ວນໜຶ່ງ ຂອງພືດດັ່ງກ່າວ ທີ່ສາມາດນຳມາຂະຫຍາຍພັນເປັນພືດໃໝ່ ເຊັ່ນ ໜໍ່, ເຫງົ້າ, ແກ່ນ, ກິ່ງ;

20. **ນັກປະສົມພັນພືດ** ໝາຍເຖິງ ບຸກຄົນ ທີ່ປະສົມພັນ ຫຼື ຄົ້ນພົບ ແລະ ພັດທະນາພັນພືດ ຫຼື ບຸກຄົນ ທີ່ເປັນຜູ້ວ່າຈ້າງນັກປະສົມພັນພືດ ຫຼື ບຸກຄົນທີ່ມອບໝາຍວຽກໃຫ້ນັກປະສົມພັນພືດ ຫຼື ບຸກຄົນທີ່ຮ່ວມກັນປະສົມພັນພືດ ທີ່ໄດ້ກຳນົດໄວ້ໃນສັນຍາ ຕາມກົດໝາຍ ລວມທັງຜູ້ສືບທອດສິດ ຂອງບຸກຄົນທີ່ກ່າວມາເທິງນີ້;

21. **ສິດຕໍ່ພັນພືດ ຫຼື ສິດຂອງນັກປະສົມພັນພືດ** ໝາຍເຖິງ ສິດອອກໃຫ້ ໂດຍການຈັດຕັ້ງລັດ ເພື່ອປົກປ້ອງພັນພືດ ຕາມກົດໝາຍສະບັບນີ້;

22. **ລິຂະສິດ** ໝາຍເຖິງ ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕໍ່ຜົນງານປະດິດຄິດແຕ່ງຂອງຕົນເອງ ທາງດ້ານສິລະປະກຳ, ວັນນະກຳ ຫຼື ວິທະຍາສາດ;

23. **ສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ສິດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕໍ່ຜົນງານທາງດ້ານການສະແດງ, ການບັນທຶກສຽງ, ລາຍການກະຈາຍສຽງ-ແຜ່ພາບ ຫຼື ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ຫຼື ບໍ່ເຂົ້າລະຫັດ;

24. **ຜົນງານ** ໝາຍເຖິງ ການປະດິດຄິດແຕ່ງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ໃນຂົງເຂດສິລະປະກຳ, ວັນນະກຳ ແລະ ວິທະຍາສາດ ຊຶ່ງສະແດງອອກ ດ້ວຍຮູບແບບ ຫຼື ວິທີການໃດໜຶ່ງ;

25. **ຜົນງານທີ່ສືບເນື່ອງຈາກລິຂະສິດ** ໝາຍເຖິງ ຜົນງານທີ່ອີງໃສ່ໜຶ່ງ ຫຼື ຫຼາຍກວ່າໜຶ່ງຜົນງານທີ່ມີຢູ່ແລ້ວ ຊຶ່ງມີການແປ, ການປັບປຸງ, ການປະສານດົນຕີ, ການດັດແກ້, ການປ່ຽນຮູບ, ການໃຫ້ຄວາມໝາຍ ແລະ ການປ່ຽນແປງອື່ນໆ ຂອງຜົນງານທີ່ມີລິຂະສິດໃດໜຶ່ງ;

26. **ການເຜີຍແຜ່ສຳລັບຈຸດປະສົງຂອງລິຂະສິດ** ໝາຍເຖິງ ການນຳເອົາຜົນງານອອກ ສູ່ສາທາລະນະຊົນໂດຍໄດ້ຮັບການເຫັນດີຈາກຜູ້ປະດິດຄິດແຕ່ງຜົນງານ ຊຶ່ງມີຈຳນວນສຳເນົາພຽງພໍ ເພື່ອຕອບສະໜອງຄວາມຕ້ອງການທີ່ເໝາະສົມຂອງສາທາລະນະຊົນ ໂດຍຄຳນຶງເຖິງລັກສະນະຂອງຜົນງານ. ການສະແດງລະຄອນ, ດົນຕີປະກອບລະຄອນ, ຜົນງານການສ້າງຮູບເງົາ ຫຼື ຜົນງານດົນຕີ, ການເລົ່າຜົນງານວັນນະກຳໃນທີ່ສາທາລະນະ, ການສື່ສານດ້ວຍສາຍ ຫຼື ການກະຈາຍສຽງ-ແຜ່ພາບ ຂອງຜົນງານວັນນະກຳ ຫຼື ສິລະປະກຳ, ການວາງສະແດງຜົນງານສິລະປະ ແລະ ການກໍ່ສ້າງຂອງຜົນງານດ້ານສະຖາປັດຕະຍະກຳ ຈະບໍ່ຖືວ່າແມ່ນການເຜີຍແຜ່;

27. **ການເຜີຍແຜ່ສຳລັບຈຸດປະສົງຂອງສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ການນຳເອົາ ສຳເນົາການບັນທຶກການສະແດງ ຫຼື ການບັນທຶກສຽງ ອອກສູ່ສາທາລະນະຊົນ ໂດຍໄດ້ຮັບການເຫັນດີ ຈາກຜູ້ຖືສິດ ເພື່ອຕອບສະໜອງຄວາມຕ້ອງການທີ່ເໝາະສົມ ຂອງສາທາລະນະຊົນ;

28. **ການຜະລິດຊໍ້າສໍາລັບຈຸດປະສົງຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ** ໝາຍເຖິງ ການອັດສໍາເນົາຜົນງານ ຫຼື ການບັນທຶກສຽງ ຫຼື ສິ່ງທີ່ພົວພັນເຖິງສິດ ທີ່ກ່ຽວຂ້ອງກັບລິຂະສິດ ດ້ວຍວິທີການໃດໜຶ່ງ ລວມທັງການອັດສໍາເນົາຜົນງານ ຫຼື ການບັນທຶກສຽງ ຫຼື ສິດກ່ຽວຂ້ອງກັບລິຂະສິດ ແບບຖາວອນ ຫຼື ຊົ່ວຄາວ;

29. **ການບັນທຶກສຽງ** ໝາຍເຖິງ ການບັນທຶກສຽງ ຂອງການສະແດງ ຫຼື ຂອງສຽງອື່ນໆ ລົງໃສ່ອຸປະກອນບັນທຶກ ເຊັ່ນ ແຜ່ນສຽງ, ກະແຊັດ, ແຜ່ນເລເຊີດິສ, ແຜ່ນຊີດີຣອມ ຫຼື ການບັນທຶກສຽງ ດ້ວຍວິທີອື່ນໆ;

30. **ການກະຈາຍສຽງ-ແຜ່ພາບ** ໝາຍເຖິງ ການນໍາເອົາຜົນງານອອກສູ່ສາທາລະນະຊົນ ທາງວິທະຍຸກະຈາຍສຽງ ຫຼື ທາງໂທລະພາບ ຫຼື ດ້ວຍວິທີການອື່ນ ທີ່ຄ້າຍຄືກັນ ເຊັ່ນ ອິນເຕີເນັດ, ການສົ່ງຜ່ານສັນຍານດາວທຽມ, ການຮັບສົ່ງສັນຍານສຽງ ຫຼື ພາບ ແລະ ສຽງ ດ້ວຍລະບົບໃຊ້ສາຍ ຫຼື ບໍ່ໃຊ້ສາຍ;

31. **ສິລະປະປັບໃຊ້** ໝາຍເຖິງ ສິລະປະ ທີ່ໄດ້ມີການປັບປຸງ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍອື່ນ;

32. **ວັນບູລິມະສິດ** ໝາຍເຖິງ ວັນທີ່ຜູ້ຮ້ອງຂໍ ໄດ້ຍື່ນຂໍຈົດທະບຽນ ຢູ່ຕ່າງປະເທດ, ຢູ່ສໍານັກງານອື່ນ ຫຼື ຢູ່ ສປປ ລາວ ຊຶ່ງມີຜົນໃຊ້ໄດ້ກ່ອນໜ້ານີ້;

33. **ການສະແຫວງຫາຜົນປະໂຫຍດ** ໝາຍເຖິງ ການດໍາເນີນການ ຫຼື ການສະເໜີ ທີ່ຈະດໍາເນີນການໃດໜຶ່ງ ຢູ່ພາຍໃຕ້ການອະນຸຍາດຂອງຜູ້ຖືສິດ ໂດຍມີ ຫຼື ບໍ່ມີຄ່າຕອບແທນ ຫຼື ຜົນປະໂຫຍດອື່ນ.

### ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບຊັບສິນທາງປັນຍາ

ລັດ ຮັບຮູ້ ຊັບສິນທາງປັນຍາ ແລະ ໝາກຜົນ ຂອງການປະດິດສ້າງ, ການປະດິດຄິດແຕ່ງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ປົກປ້ອງສິດ ຜົນປະໂຫຍດຂອງເຈົ້າຂອງຊັບສິນທາງປັນຍາທີ່ບໍ່ຂັດກັບກົດໝາຍ, ວັດທະນະທໍາ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສຸຂານາໄມ ແລະ ສິ່ງແວດລ້ອມ.

ລັດ ຊຸກຍູ້ ແລະ ສົ່ງເສີມວຽກງານຊັບສິນທາງປັນຍາ ດ້ວຍການວາງນະໂຍບາຍ, ຍຸດທະສາດ, ກົດໝາຍ, ມາດຕະການ, ສະໜອງງົບປະມານ, ສ້າງໂຄງລ່າງພື້ນຖານ, ປະກອບ ແລະ ພັດທະນາຊັບພະຍາກອນມະນຸດ, ພາຫະນະ ແລະ ອຸປະກອນ.

ລັດ ຊຸກຍູ້ ປຸກລະດົມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃສ່ວຽກງານຊັບສິນທາງປັນຍາ ລວມທັງໂຄສະນາເຜີຍແຜ່ ວຽກງານດັ່ງກ່າວໃນຂອບເຂດທົ່ວປະເທດ.

### ມາດຕາ 5 (ປັບປຸງ) ຫຼັກການພື້ນຖານ ກ່ຽວກັບຊັບສິນທາງປັນຍາ

ຫຼັກການພື້ນຖານ ກ່ຽວກັບຊັບສິນທາງປັນຍາ ມີ ດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງ, ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບຮູ້, ເຄົາລົບ, ປົກປ້ອງ ແລະ ຮັບປະກັນຄວາມຍຸຕິທໍາຕໍ່ເຈົ້າຂອງຊັບສິນທາງປັນຍາ;
3. ປົກປ້ອງຊັບສິນອຸດສາຫະກໍາ ແລະ ພັນພືດໃໝ່ ທີ່ໄດ້ຮັບການຈົດທະບຽນຕາມກົດໝາຍ;
4. ປົກປ້ອງຜົນງານທາງດ້ານ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໂດຍທັນທີ;
5. ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງສິດ ຕໍ່ທຸກການສະແຫວງຫາຜົນປະໂຫຍດ ຈາກຊັບສິນທາງປັນຍາ;
6. ສອດຄ່ອງກັບສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ.

**ມາດຕາ 7 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊັບສິນທາງປັນຍາ ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ ຊຶ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເພື່ອພັດທະນາ ແລະ ຄຸ້ມຄອງວຽກງານຊັບສິນທາງປັນຍາ, ແລກປ່ຽນບົດຮຽນທາງດ້ານວິທະຍາສາດ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ພັດທະນາຊັບພະຍາກອນມະນຸດ ແລະ ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຊັບສິນທາງປັນຍາ

**ມາດຕາ 8 ໂຄງປະກອບຂອງຊັບສິນທາງປັນຍາ**

ຊັບສິນທາງປັນຍາ ປະກອບດ້ວຍ:

1. ຊັບສິນອຸດສາຫະກຳ;
2. ພັນພືດໃໝ່;
3. ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

**ມາດຕາ 9 (ປັບປຸງ) ຊັບສິນອຸດສາຫະກຳ**

ຊັບສິນອຸດສາຫະກຳ ປະກອບດ້ວຍ:

1. ສິດທິບັດ;
2. ອະນຸສິດທິບັດ;
3. ແບບອຸດສາຫະກຳ;
4. ເຄື່ອງໝາຍການຄ້າ;
5. ຊື່ການຄ້າ;
6. ແບບຜັງວົງຈອນລວມ;
7. ຖິ່ນກຳເນີດ;
8. ຄວາມລັບທາງການຄ້າ.

**ມາດຕາ 10 ພັນພືດໃໝ່**

ພັນພືດໃໝ່ ປະກອບດ້ວຍ:

1. ພັນພືດທີ່ມີຢູ່ທົ່ວໄປ ທີ່ໄດ້ຜ່ານການປັບປຸງ ໃຫ້ເປັນພັນພືດໃໝ່.
2. ພັນພືດ ທີ່ຄົ້ນພົບໃນທຳມະຊາດ ແລ້ວນຳມາພັດທະນາ ໃຫ້ເປັນພັນພືດໃໝ່.

**ມາດຕາ 11 ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ປະກອບດ້ວຍ:

1. ລິຂະສິດ ຕໍ່ຜົນງານທາງດ້ານສິລະປະກຳ, ວັນນະກຳ ຫຼື ວິທະຍາສາດ;

2. ສິດກ່ຽວຂ້ອງກັບລິຂະສິດ ຕໍ່ຜົນງານຂອງຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ແລະ ອົງການກະຈາຍສຽງ-ແຜ່ພາບ.

# ພາກທີ III

# ຊັບສິນອຸດສາຫະກຳ

## ໝວດທີ 1

## ເງື່ອນໄຂ ຂອງຊັບສິນອຸດສາຫະກຳ

**ມາດຕາ 12 (ປັບປຸງ) ຊັບສິນອຸດສາຫະກຳ ທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນ**

ຊັບສິນອຸດສາຫະກຳ ທີ່ສາມາດໄດ້ຮັບໃບຢັ້ງຢືນການຈົດທະບຽນ ມີ ດັ່ງນີ້:

1. ສິດທິບັດ;
2. ອະນຸສິດທິບັດ;
3. ແບບອຸດສາຫະກຳ;
4. ເຄື່ອງໝາຍການຄ້າ;
5. ແບບຜັງວົງຈອນລວມ;
6. ຖິ່ນກຳເນີດ.

ສຳລັບຊື່ການຄ້າ ແລະ ຄວາມລັບທາງການຄ້າ ບໍ່ໃຫ້ມີການຈົດທະບຽນ ແຕ່ຫາກໄດ້ຮັບການປົກປ້ອງ ພາຍໃຕ້ກົດໝາຍສະບັບນີ້.

**ມາດຕາ 13 (ປັບປຸງ) ເງື່ອນໄຂ ທີ່ສາມາດໄດ້ຮັບສິດທິບັດ**

ການປະດິດສ້າງ ທີ່ສາມາດໄດ້ຮັບສິດທິບັດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງແມ່ນການປະດິດສ້າງໃໝ່ ທີ່ບໍ່ເຄີຍມີມາກ່ອນ, ບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນ ດ້ວຍວາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ກ່ອນວັນທີ່ໄດ້ຮ້ອງຂໍວັນບຸລິມະສິດ ຂອງຄຳຮ້ອງຂໍຮັບສິດທິບັດ;

2. ຕ້ອງມີຂັ້ນຕອນການປະດິດສ້າງທີ່ສູງຂຶ້ນ ເມື່ອທຽບໃສ່ການປະດິດສ້າງທີ່ມີມາກ່ອນແລ້ວ;

3. ຕ້ອງນຳໃຊ້ໃຫ້ເປັນປະໂຫຍດໃນຂົງເຂດ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ, ການຄ້າ, ການບໍລິການ ແລະ ອື່ນໆ.

**ມາດຕາ 14 (ປັບປຸງ) ເງື່ອນໄຂ ທີ່ສາມາດໄດ້ຮັບອະນຸສິດທິບັດ**

ສິ່ງປະດິດ ທີ່ສາມາດໄດ້ຮັບອະນຸສິດທິບັດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງແມ່ນສິ່ງປະດິດໃໝ່ ຊຶ່ງຜ່ານມາບໍ່ໄດ້ເປັນທີ່ຮູ້ຈັກ ຫຼື ຖືກນຳໃຊ້ ໃນ ສປປ ລາວ ພາຍໃນ ໜຶ່ງປີ ກ່ອນວັນຍື່ນຄຳຮ້ອງຂໍອະນຸສິດທິບັດ;

2. ຕ້ອງມີການປັບປຸງເຕັກນິກໃໝ່ ທີ່ພົວພັນເຖິງຂັ້ນຕອນການສ້າງສິ່ງປະດິດ ຊຶ່ງມີຂັ້ນຕອນງ່າຍກວ່າຂັ້ນຕອນການປະດິດສ້າງນັ້ນ;

3. ຕ້ອງນຳໃຊ້ໃຫ້ເປັນປະໂຫຍດໃນຂົງເຂດ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ, ການຄ້າ, ການບໍລິການ ແລະ ອື່ນໆ.

## ມາດຕາ 15 (ປັບປຸງ) ເງື່ອນໄຂທີ່ສາມາດໄດ້ຮັບໃບຍັ້ງຢືນແບບອຸດສາຫະກຳ

ແບບ ທີ່ສາມາດໄດ້ຮັບໃບຍັ້ງຢືນແບບອຸດສາຫະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຕ້ອງເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນມາກ່ອນ ດ້ວຍວາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍການວາງສະແດງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບຸລິມະສິດ ຂອງຄຳຮ້ອງຂໍຈົດທະບຽນ;

2. ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ.

## ມາດຕາ 16 (ປັບປຸງ) ເງື່ອນໄຂ ທີ່ສາມາດໄດ້ຮັບໃບຍັ້ງຢືນເຄື່ອງໝາຍການຄ້າ

ເຄື່ອງໝາຍ ທີ່ສາມາດໄດ້ຮັບໃບຍັ້ງຢືນເຄື່ອງໝາຍການຄ້າ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເຄື່ອງໝາຍ ອາດເປັນສັນຍາລັກໃດໜຶ່ງ ຫຼື ຫຼາຍສັນຍາລັກລວມກັນ ທີ່ສາມາດຈຳແນກສິນຄ້າ ຫຼື ການບໍລິການຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ແຕກຕ່າງຈາກສັນຍາລັກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ. ສັນຍາລັກ ອາດລວມເອົາ ຄຳສັບ, ຊື່ບຸກຄົນ, ແບບ, ຕົວເລກ, ອົງປະກອບເປັນຮູບຮ່າງ, ຮູບຊົງ, ຮູບສາມມິຕິ, ຮູບທີ່ມີການເຄື່ອນໄຫວ ຫຼື ສິ່ງຫຸ້ມຫໍ່ ຂອງສິນຄ້າ ແລະ ການລວມກັນ ຂອງຫຼາຍສີ ເຊັ່ນດຽວກັບການລວມກັນ ຂອງສັນຍາລັກໃດໜຶ່ງນັ້ນ;

2. ເຄື່ອງໝາຍ ທີ່ບໍ່ຄືກັນກັບເຄື່ອງໝາຍການຄ້າ, ເຄື່ອງໝາຍທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ ທີ່ໄດ້ຈົດທະບຽນກ່ອນແລ້ວ ສຳລັບສິນຄ້າ ຫຼື ການບໍລິການ ອັນດຽວກັນ;

3. ເຄື່ອງໝາຍ ທີ່ບໍ່ຄ້າຍຄືກັນ ກັບເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນກ່ອນໜ້ານີ້ ຫຼື ເຄື່ອງໝາຍທີ່ມີຊື່ສຽງ ສຳລັບ ສິນຄ້າ ຫຼື ການບໍລິການ ອັນດຽວກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ ຊຶ່ງການນຳໃຊ້ເຄື່ອງໝາຍດັ່ງກ່າວ ອາດຈະພາໃຫ້ເກີດຄວາມສັບສົນ ເຖິງທີ່ມາຂອງສິນຄ້າ ຫຼື ການບໍລິການ ຫຼື ສ້າງຄວາມເຂົ້າໃຈຜິດວ່າເຄື່ອງໝາຍນັ້ນ ກ່ຽວຂ້ອງກັນ ຫຼື ກ່ຽວພັນກັບຜູ້ອື່ນ;

4. ເຄື່ອງໝາຍ ທີ່ບໍ່ມີລັກສະນະຕ້ອງຫ້າມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້.

ສຳລັບເຄື່ອງໝາຍການຄ້າໃດໜຶ່ງ ຈະຖືວ່າມີຊື່ສຽງ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເຄື່ອງໝາຍການຄ້າ ແມ່ນ ເຄື່ອງໝາຍດັ່ງທີ່ໄດ້ກຳນົດໄວ້ໃນວັກເທິງນີ້ ຊຶ່ງເປັນທີ່ຍອມຮັບກັນຢ່າງກວ້າງຂວາງ ໂດຍພາກສ່ວນທີ່ກ່ຽວຂ້ອງ ພາຍໃນດິນແດນ ຂອງ ສປປ ລາວ ຕາມທີ່ບົ່ງບອກສິນຄ້າ ຫຼື ການບໍລິການ ຂອງເຈົ້າຂອງເຄື່ອງໝາຍ ທີ່ຈະອ້າງວ່າເປັນເຄື່ອງໝາຍທີ່ມີຊື່ສຽງ;

2. ເຄື່ອງໝາຍການຄ້າ ທີ່ບໍ່ຂັດກັບເງື່ອນໄຂ ທີ່ຈະໄດ້ຮັບການຈົດທະບຽນ ຢູ່ ສປປ ລາວ;

3. ການພິຈາລະນາເຄື່ອງໝາຍໃດໜຶ່ງ ເປັນເຄື່ອງໝາຍການຄ້າທີ່ມີຊື່ສຽງນັ້ນ ຕ້ອງນຳເອົາຫຼັກຖານເທັດຈິງ ດັ່ງນີ້:

3.1. ສາທາລະນະຊົນ ໄດ້ຮັບຮູ້ເຖິງເຄື່ອງໝາຍ ໂດຍຜ່ານການຊື້ຂາຍ, ການນຳໃຊ້ເຄື່ອງໝາຍການຄ້າກັບ/ຫຼື ກ່ຽວຂ້ອງກັນກັບ ສິນຄ້າ ຫຼື ການບໍລິການ ຫຼື ຜ່ານການໂຄສະນາ;

3.2. ການຈໍລະຈອນແຈກຢາຍຜະລິດຕະພັນ, ສິນຄ້າ, ການບໍລິການ ທີ່ມີເຄື່ອງໝາຍການຄ້ານັ້ນ ໃນຂອບເຂດດິນແດນ ຢ່າງກວ້າງຂວາງ;

3.3. ບໍລິມາດ ຂອງການຂາຍສິນຄ້າ ຫຼື ການໃຫ້ບໍລິການ ຢ່າງຫຼວງຫຼາຍ;

3.4. ໄລຍະເວລານໍາໃຊ້ເຄື່ອງໝາຍການຄ້ານັ້ນ ຕ້ອງເປັນປົກກະຕິ ແລະ ຕໍ່ເນື່ອງ;

3.5. ຄວາມເຊື່ອໝັ້ນ ກ່ຽວພັນກັນກັບການນໍາໃຊ້ເຄື່ອງໝາຍການຄ້າ ກັບສິນຄ້າ ຫຼື ການບໍລິການ ໂດຍອີງຕາມຄຸນນະພາບ, ຄວາມນິຍົມ ຢ່າງກວ້າງຂວາງໃນສັງຄົມ;

3.6. ຜູ້ຊົມໃຊ້ ໄດ້ຢັ້ງຢືນ ແລະ ຮັບຮູ້ ຢູ່ພາຍໃນປະເທດ ກ່ຽວກັບການມີຊື່ສຽງ ຂອງເຄື່ອງໝາຍການຄ້າ ຢ່າງຫຼວງຫຼາຍ;

3.7. ການລົງທຶນເຂົ້າໃສ່ເຄື່ອງໝາຍການຄ້າ ມີມູນຄ່າສູງ ເປັນຕົ້ນ ການລົງທຶນເຂົ້າໃສ່ການໂຄສະນາ ເຜີຍແຜ່ ຫຼື ສ້າງພາບພົດຂອງເຄື່ອງໝາຍການຄ້າດັ່ງກ່າວ.

ເຄື່ອງໝາຍການຄ້າທີ່ມີຊື່ສຽງ ໄດ້ຮັບການປົກປ້ອງຕາມກົດໝາຍ ບໍ່ວ່າຈະໄດ້ຈົດທະບຽນໄວ້ແລ້ວ ຫຼື ບໍ່ ກໍຕາມ.

## ມາດຕາ 17 (ປັບປຸງ) ເງື່ອນໄຂ ທີ່ສາມາດໄດ້ຮັບໃບຢັ້ງຢືນແບບຜັງວົງຈອນລວມ

ສິ່ງ ທີ່ສາມາດໄດ້ຮັບໃບຢັ້ງຢືນແບບຜັງວົງຈອນລວມ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ເປັນແບບຜັງຕົ້ນສະບັບທີ່ບໍ່ກ໋ອບແບບຜັງຂອງບຸກຄົນອື່ນ ຊຶ່ງເປັນແບບທີ່ເກີດຈາກສະຕິປັນຍາຂອງຜູ້ປະດິດສ້າງ ແລະ ເປັນສິ່ງທີ່ໂດດເດັ່ນ ໃນວົງການນັກສ້າງແບບຜັງ ແລະ ຜູ້ຜະລິດວົງຈອນລວມ ໃນເວລາສ້າງແບບຜັງດັ່ງກ່າວ;

2. ເປັນແບບຜັງ ທີ່ມີການປະສານກັນ ລະຫວ່າງ ສ່ວນປະກອບ ແລະ ສ່ວນເຊື່ອມຕໍ່ ຊຶ່ງໂດຍທົ່ວໄປແລ້ວຈະຕ້ອງໄດ້ຮັບການປົກປ້ອງ ໂດຍສະເພາະ ໃນກໍລະນີທີ່ມີການຕອບສະໜອງເງື່ອນໄຂຂອງຂໍ້ 1;

3. ຍື່ນຄໍາຮ້ອງຂໍຈົດທະບຽນ ກ່ອນວັນທີ່ນໍາເອົາແບບຜັງວົງຈອນລວມ ໄປສະແຫວງຫາຜົນປະໂຫຍດທາງການຄ້າໃນທົ່ວໂລກ ໂດຍເຈົ້າຂອງສິດ ຫຼື ພາຍໃນເວລາ ສອງ ປີ ນັບແຕ່ວັນໄດ້ສະແຫວງຫາຜົນປະໂຫຍດເປັນຕົ້ນໄປ.

## ມາດຕາ 18 (ປັບປຸງ) ເງື່ອນໄຂ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກໍາເນີດ

ຜະລິດຕະພັນ ທີ່ສາມາດໄດ້ຮັບໃບຢັ້ງຢືນຖິ່ນກໍາເນີດ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ສິ່ງບົ່ງບອກໃຫ້ເຫັນ ທີ່ມາຂອງຜະລິດຕະພັນ ຈາກດິນແດນ, ເຂດ ຫຼື ທ້ອງຖິ່ນ ຂອງປະເທດໃດໜຶ່ງ;

2. ຖິ່ນກໍາເນີດທາງພູມສາດ ເປັນສ່ວນສໍາຄັນ ເຮັດໃຫ້ຜະລິດຕະພັນ ມີຄຸນນະພາບ ແລະ ມີຊື່ສຽງ ຫຼື ຄຸນລັກສະນະອື່ນ. ຄຸນນະພາບ, ຊື່ສຽງ ຫຼື ຄຸນລັກສະນະອື່ນນັ້ນ ແມ່ນອີງໃສ່ປັດໄຈຂອງທໍາມະຊາດ ທີ່ປະກອບດ້ວຍສະພາບຂອງດິນ, ອາກາດ, ນໍ້າ, ລະບົບນິເວດ, ເງື່ອນໄຂທໍາມະຊາດ ແລະ ປັດໄຈຂອງມະນຸດ ລວມທັງຄວາມຊໍານິຊໍານານ ແລະ ປະສົບການ ຂອງຜູ້ຜະລິດ ແລະ ກໍາມະວິທີການຜະລິດ ທີ່ມີມາແບບດັ້ງເດີມຂອງທ້ອງຖິ່ນນັ້ນ.

**ມາດຕາ 19 ຊື່ການຄ້າ**

ຊື່ການຄ້າ ແມ່ນ ຊື່ ຂອງວິສາຫະກິດ ທີ່ໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ. ຊື່ການຄ້າ ຈະເປັນ ຫຼື ບໍ່ເປັນສ່ວນໜຶ່ງ ຂອງເຄື່ອງໝາຍການຄ້າ ກໍຈະໄດ້ຮັບການປົກປ້ອງ ເຖິງວ່າບໍ່ໄດ້ຈົດທະບຽນກໍຕາມ.

**ມາດຕາ 20 (ປັບປຸງ) ຄວາມລັບທາງການຄ້າ**

ຄວາມລັບທາງການຄ້າ ແມ່ນ ຂໍ້ມູນທີ່ເປັນຄວາມລັບ ທີ່ບໍ່ສາມາດເປີດເຜີຍໄດ້ ກ່ຽວກັບສູດ, ກຳມະວິທີການຜະລິດ ຫຼື ຂໍ້ມູນໃດໜຶ່ງ ທີ່ມີຄຸນຄ່າທາງການຄ້າ ຊຶ່ງຍັງບໍ່ເປັນທີ່ຮູ້ຈັກໃນກຸ່ມບຸກຄົນ ຫຼື ຍັງບໍ່ທັນສາມາດເຂົ້າເຖິງໄດ້ຢ່າງງ່າຍດາຍ ສຳລັບບຸກຄົນທີ່ກ່ຽວຂ້ອງ ຢູ່ໃນວົງການກຳກັບຂໍ້ມູນປະເພດຕ່າງໆ.

## ໝວດທີ 2
## ສິ່ງທີ່ບໍ່ສາມາດຈົດທະບຽນເປັນຊັບສິນອຸດສາຫະກຳ

**ມາດຕາ 21 (ປັບປຸງ) ການປະດິດສ້າງ ຫຼື ສິ່ງປະດິດ ທີ່ບໍ່ສາມາດຮັບສິດທິບັດ ຫຼື ອະນຸສິດທິບັດ**

ການປະດິດສ້າງ ຫຼື ສິ່ງປະດິດ ທີ່ບໍ່ສາມາດຮັບສິດທິບັດ ຫຼື ອະນຸສິດທິບັດ ມີ ດັ່ງນີ້:

1. ການປະດິດສ້າງ ຫຼື ສິ່ງປະດິດ ທີ່ບໍ່ເປັນສິ່ງໃໝ່, ຖ້າຫາກສິ່ງນັ້ນ ເປັນສິ່ງທີ່ໄດ້ຖືກຄົ້ນພົບມາກ່ອນແລ້ວ ລວມທັງສິ່ງທີ່ມີຊີວິດ ແລະ ສ່ວນປະກອບສ່ວນໃດໜຶ່ງ ຂອງສິ່ງທີ່ມີຢູ່ຕາມທຳມະຊາດ;

2. ສິ່ງທີ່ບໍ່ແມ່ນການປະດິດສ້າງ ແລະ ບໍ່ເປັນອົງປະກອບ ເພື່ອການແກ້ໄຂທາງວິຊາການ ຖ້າຫາກເປັນພຽງແຕ່ ຫຼັກການ ຫຼື ທິດສະດີຂອງວິທະຍາສາດ, ສູດຄິດໄລ່ຄະນິດສາດ ຫຼື ກົດເກນຄິບຊູດ ເພື່ອດຳເນີນທຸລະກິດ ຫຼື ຫຼິ້ນເກມ ເທົ່ານັ້ນ ເຖິງແມ່ນວ່າສິ່ງເຫຼົ່ານັ້ນ ຈະມີອົງປະກອບທີ່ເປັນການປະດິດສ້າງ ຫຼື ສິ່ງປະດິດກໍຕາມ;

3. ວິທີການບົ່ງມະຕິພະຍາດ, ວິທີການປິ່ນປົວ ແລະ ວິທີການຜ່າຕັດ ເພື່ອປິ່ນປົວຄົນ ແລະ ສັດ;

4. ພືດ ແລະ ສັດ ໂດຍສະເພາະແມ່ນຂະບວນການທາງຊີວະວິທະຍາ ເພື່ອຜະລິດພືດ ແລະ ສັດ ເຖິງແມ່ນວ່າສິ່ງເຫຼົ່ານັ້ນ ຈະມີອົງປະກອບທີ່ເປັນການປະດິດສ້າງ ຫຼື ສິ່ງປະດິດ ກໍຕາມ ຍົກເວັ້ນຈຸລິນຊີເທົ່ານັ້ນ.

ສິດທິບັດ ຫຼື ອະນຸສິດທິບັດ ບໍ່ວ່າໃນກໍລະນີໃດ ຈະຖືກປະຕິເສດ ຖ້າຫາກ:

1. ຂັດກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິນລະທຳ, ທຳລາຍຊີວິດຂອງມະນຸດ, ສັດ ຫຼື ພືດ, ສຸຂະພາບ ຫຼື ກໍ່ຄວາມເສຍຫາຍທີ່ຮ້າຍແຮງ ຕໍ່ສິ່ງແວດລ້ອມ;

2. ຂັດກັບຄວາມໝັ້ນຄົງ ແລະ ສະຫງົບສຸກ ຂອງ ສປປ ລາວ.

**ມາດຕາ 22 ແບບ ທີ່ບໍ່ສາມາດຈົດທະບຽນແບບອຸດສາຫະກຳ**

ແບບ ທີ່ບໍ່ສາມາດຈົດທະບຽນແບບອຸດສາຫະກຳ ມີ ດັ່ງນີ້:

1. ແບບ ທີ່ມີຮູບຮ່າງພາຍນອກ ເກີດຈາກຮູບຮ່າງເຕັກນິກຂອງວັດຖຸ ຊຶ່ງໃນນັ້ນແບບໄດ້ຖືກນຳມາໃຊ້ ຫຼື ສ້າງໃຫ້ເປັນຮູບຮ່າງຂຶ້ນມາກ່ອນແລ້ວ;

2. ແບບ ທີ່ຂັດຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 23 (ປັບປຸງ) ເຄື່ອງໝາຍ ທີ່ບໍ່ສາມາດຈົດທະບຽນເຄື່ອງໝາຍການຄ້າ**

ເຄື່ອງໝາຍ ທີ່ບໍ່ສາມາດຈົດທະບຽນເຄື່ອງໝາຍການຄ້າ ມີ ດັ່ງນີ້:

1. ເຄື່ອງໝາຍ ທີ່ບໍ່ສາມາດຈຳແນກໄດ້ລະຫວ່າງ ສິນຄ້າ ຫຼື ການບໍລິການ ຂອງຜູ້ຮ້ອງຂໍຮັບສິດກັບເຄື່ອງໝາຍຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ;

2. ເຄື່ອງໝາຍ ທີ່ປະກອບດ້ວຍສັນຍາລັກ ຫຼື ສິ່ງບົ່ງບອກລັກສະນະ ທີ່ນຳໃຊ້ໃນທາງການຄ້າ ເພື່ອຊີ້ບອກຊະນິດ, ຄຸນນະພາບ, ປະລິມານ, ເຈດຈຳນົງ, ມູນຄ່າ, ຕົ້ນກຳເນີດຂອງສິນຄ້າ ຫຼື ເວລາຜະລິດ ຫຼື ເຄື່ອງໝາຍ ທີ່ໄດ້ກາຍເປັນທຳນຽມຂອງພາສາ ທີ່ໃຊ້ກັນໃນຂະນະນີ້ ຫຼື ດ້ວຍຄວາມສຸດຈະລິດ ແລະ ໄດ້ຖືກສ້າງເປັນທຳນຽມປະຕິບັດທາງການຄ້າ ຢູ່ ສປປ ລາວ;

3. ເຄື່ອງໝາຍ ທີ່ມີລັກສະນະພາໃຫ້ສາທາລະນະຊົນ ຫຼື ອົງການການຄ້າເຂົ້າໃຈຜິດ ຫຼື ເຄື່ອງໝາຍທີ່ມີລັກສະນະ ປອມແປງ ຫຼື ຫຼອກລວງ;

4. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກເຮັດໃຫ້ສາທາລະນະຊົນເຂົ້າໃຈຜິດ ກ່ຽວກັບຕົ້ນກຳເນີດ, ທາດແທ້, ຂະບວນການຜະລິດ, ຄຸນລັກສະນະ, ຄວາມເໝາະສົມກັບຈຸດປະສົງ ຂອງເຄື່ອງໝາຍນັ້ນ ຫຼື ປະລິມານ ຂອງສິນຄ້າ ແລະ ການບໍລິການ;

5. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງເຄື່ອງໝາຍຊາດ, ທຸງຊາດ, ກາໝາຍທາງການ, ສັນຍາລັກທາງວັດທະນະທຳ ຫຼື ຄຳຫຍໍ້ ຫຼື ຊື່ເຕັມ ຂອງຄົວເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງຂອງ ສປປ ລາວ ແລະ ຂອງຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງຂອງລັດ ທີ່ກ່ຽວຂ້ອງ;

6. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງເຄື່ອງໝາຍ ຂອງອົງການຈັດຕັ້ງສາກົນ ຫຼື ສັນຍາລັກທີ່ເກີດຈາກສົນທິສັນຍາສາກົນ, ກາປະທັບທາງການ ຫຼື ສັນຍາລັກ ຂອງລັດ ຫຼື ອົງການຈັດຕັ້ງສາກົນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກລັດ ຫຼື ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ;

7. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງ ຊື່, ຮູບ ຫຼື ຮູບທີ່ມີຄວາມຄ້າຍຄືກັນກັບ ບຸກຄົນທີ່ຍັງມີຊີວິດຢູ່ ໂດຍບໍ່ໄດ້ຮັບອະນຸຍາດ;

8. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງຮູບ, ຂອງສັນຍາລັກທາງວັດທະນະທຳ ຫຼື ອະນຸສອນສະຖານ, ປະຫວັດສາດ ຫຼື ຊື່ ຫຼື ຮູບ ຫຼື ຄວາມຄ້າຍຄືກັນກັບວິລະຊົນແຫ່ງຊາດ ຫຼື ຜູ້ນຳ ຫຼື ຮູບ ທີ່ເປັນການໝິ່ນປະໝາດ ຫຼື ຂັດກັບຮີດຄອງປະເພນີອັນດີງາມຂອງຊາດ;

9. ເຄື່ອງໝາຍ ທີ່ຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນແລ້ວ ສຳລັບສິນຄ້າ ແລະ ການບໍລິການອັນດຽວກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ;

10. ເຄື່ອງໝາຍ ທີ່ຄືກັນ ຫຼື ຄ້າຍຄືກັນກັບ ເຄື່ອງໝາຍທີ່ມີຊື່ສຽງສຳລັບສິນຄ້າ ແລະ ການບໍລິການອັນດຽວກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ;

11. ເຄື່ອງໝາຍ ທີ່ຄືກັນ ຫຼື ຄ້າຍຄືກັນກັບຊື່ການຄ້າ ສຳລັບທຸລະກິດທີ່ໃຫ້ການບໍລິການສິນຄ້າ ຫຼື ການບໍລິການອັນດຽວກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ;

12. ເຄື່ອງໝາຍທີ່ກ່າວມາເທິງນີ້ ຊຶ່ງອາດກໍ່ໃຫ້ເກີດຄວາມສັບສົນ ກ່ຽວກັບທີ່ມາຂອງສິນຄ້າ ຫຼື ການບໍລິການ ຫຼື ສະແດງໃຫ້ເຫັນຄວາມສຳພັນຢ່າງບໍ່ຖືກຕ້ອງກັບເຄື່ອງໝາຍການຄ້າທີ່ໄດ້ຈົດທະບຽນແລ້ວ ຫຼື ເຄື່ອງໝາຍທີ່ມີຊື່ສຽງ ຫຼື ຊື່ການຄ້າ;

13. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງ ຖິ່ນກຳເນີດ ຊຶ່ງໄດ້ສະແດງໃຫ້ເຫັນວ່າຜະລິດຕະພັນມີຕົ້ນກຳເນີດ ແຕ່ຕົວຈິງແລ້ວ ຜະລິດຕະພັນດັ່ງກ່າວ ບໍ່ໄດ້ມາຈາກຖິ່ນກຳເນີດນັ້ນແຕ່ຢ່າງໃດ;

14. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ຂອງຖິ່ນກຳເນີດ ເຖິງວ່າຜະລິດຕະພັນ ຈະມີຕົ້ນກຳເນີດແທ້ ແຕ່ເຮັດໃຫ້ສາທາລະນະຊົນເຂົ້າໃຈຜິດວ່າຜະລິດຕະພັນນັ້ນ ມີຕົ້ນກຳເນີດມາແຕ່ອານາເຂດອື່ນ;

15. ເຄື່ອງໝາຍ ທີ່ປະກອບ ຫຼື ມີສັນຍາລັກ ທີ່ສ້າງຄວາມເສື່ອມເສຍ ຫຼື ສະແດງໃຫ້ເຫັນຄວາມສຳພັນຢ່າງບໍ່ຖືກຕ້ອງກັບບຸກຄົນມີຊີວິດ ຫຼື ເສຍຊີວິດແລ້ວ, ສະຖາບັນ, ຄວາມເຊື່ອຖື ຫຼື ສັນຍາລັກຂອງຊາດ ຫຼື ເປັນການໝິ່ນປະໝາດ ຫຼື ທຳລາຍຊື່ສຽງ;

16. ເຄື່ອງໝາຍ ທີ່ມີລັກສະນະສ້າງຄວາມສັບສົນ ກ່ຽວກັບສະຖານທີ່ຜະລິດຜະລິດຕະພັນ ຫຼື ກິດຈະກຳທາງດ້ານອຸດສາຫະກຳ ຫຼື ການຄ້າ ຂອງຄູ່ແຂ່ງຂັນ;

17. ເຄື່ອງໝາຍ ທີ່ມີລັກສະນະທຳລາຍຄວາມເຊື່ອໝັ້ນ ກ່ຽວກັບສະຖານທີ່ຜະລິດ ຜະລິດຕະພັນ ຫຼື ກິດຈະກຳທາງດ້ານອຸດສາຫະກຳ ຫຼື ການຄ້າ ຂອງຄູ່ແຂ່ງຂັນ;

18. ເຄື່ອງໝາຍ ທີ່ຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

ລັກສະນະ ຂອງຜະລິດຕະພັນ ຫຼື ການບໍລິການ ບໍ່ແມ່ນເຫດຜົນໃນການປະຕິເສດການຈົດທະບຽນເຄື່ອງໝາຍການຄ້າ.

## ມາດຕາ 24 ສິ່ງທີ່ບໍ່ສາມາດຈົດທະບຽນແບບຜັງວົງຈອນລວມ

ສິ່ງທີ່ບໍ່ສາມາດຈົດທະບຽນແບບຜັງວົງຈອນລວມ ມີ ດັ່ງນີ້:

1. ຫຼັກການ, ກຳມະວິທີ, ລະບົບ ຫຼື ວິທີການປະຕິບັດງານ ຂອງວົງຈອນລວມ;
2. ຂໍ້ມູນຂ່າວສານ ຫຼື ຊອບແວ ທີ່ບັນຈຸຢູ່ໃນວົງຈອນລວມ.

## ມາດຕາ 25 (ປັບປຸງ) ຖິ່ນກຳເນີດທີ່ບໍ່ສາມາດຈົດທະບຽນ

ຖິ່ນກຳເນີດ ທີ່ບໍ່ສາມາດຈົດທະບຽນ ມີ ດັ່ງນີ້:

1. ຖິ່ນກຳເນີດ ທີ່ພາໃຫ້ເກີດຄວາມ ເຂົ້າໃຈຜິດ ຫຼື ສັບສົນ ກ່ຽວກັບທີ່ມາຂອງຜະລິດຕະພັນດັ່ງກ່າວ;
2. ຊື່ ຂອງຖິ່ນກຳເນີດ ທີ່ໄດ້ກາຍມາເປັນຊື່ຂອງຜະລິດຕະພັນ ທີ່ເປັນປະເພນີແລ້ວ ໃນ ສປປ ລາວ;
3. ຖິ່ນກຳເນີດ ກ່ຽວກັບ ຜະລິດຕະພັນ ເຫຼົ້າ, ກາເຟ, ຊາ ແລະ ເຫຼົ້າແວັງ ຊຶ່ງຊີ້ບອກລັກສະນະຄືກັນກັບຊື່ ທີ່ນຳໃຊ້ ເປັນປະເພນີມາແລ້ວ ຂອງສາຍພັນ ເຫຼົ້າ, ກາເຟ, ຊາ ແລະ ໝາກອະງຸ່ນ ທີ່ມີຢູ່ໃນ ສປປ ລາວ;
4. ຖິ່ນກຳເນີດ ຂອງປະເທດອື່ນ ທີ່ບໍ່ໄດ້ຮັບການປົກປ້ອງ ຫຼື ສິ້ນສຸດການປົກປ້ອງຢູ່ໃນປະເທດຕົ້ນກຳເນີດ ຫຼື ຢຸດຕິການນຳໃຊ້ ຢູ່ໃນປະເທດນັ້ນ;
5. ຖິ່ນກຳເນີດ ທີ່ຄືກັນ ຫຼື ຄ້າຍຄືກັນກັບ ເຄື່ອງໝາຍການຄ້າ ທີ່ໄດ້ຮັບການປົກປ້ອງແລ້ວ ຊຶ່ງພາໃຫ້ເກີດຄວາມເຂົ້າໃຈຜິດ ກ່ຽວກັບທີ່ມາຂອງຜະລິດຕະພັນດັ່ງກ່າວ;
6. ຖິ່ນກຳເນີດ ທີ່ອອກສຽງຄືກັນກັບຖິ່ນກຳເນີດ ທີ່ໄດ້ຮັບການປົກປ້ອງສຳລັບ ເຫຼົ້າ, ກາເຟ, ຊາ ແລະ ເຫຼົ້າແວັງ.

## ໝວດທີ 3
## ການປົກປ້ອງຊັບສິນອຸດສາຫະກຳ

### ມາດຕາ 26 (ປັບປຸງ) ບຸກຄົນ ທີ່ມີສິດໄດ້ຮັບການປົກປ້ອງຊັບສິນອຸດສາຫະກຳ

ບຸກຄົນ ທີ່ມີສິດໄດ້ຮັບການປົກປ້ອງຊັບສິນອຸດສາຫະກຳ ມີ ດັ່ງນີ້:

1. ພົນລະເມືອງລາວ ຫຼື ຜູ້ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສ້າງຕັ້ງຂຶ້ນພາຍໃຕ້ກົດໝາຍ ຂອງ ສປປ ລາວ;
2. ບຸກຄົນ ທີ່ມີສັນຊາດ ຂອງປະເທດໃດໜຶ່ງ ຊຶ່ງເປັນພາຄີຂອງສົນທິສັນຍາປາຣີ ຫຼື ຂໍ້ຕົກລົງສາກົນອື່ນ ກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ;
3. ບຸກຄົນ ທີ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຫຼື ຢູ່ໃນອານາເຂດ ຂອງປະເທດທີ່ເປັນພາຄີຂອງສົນທິສັນຍາປາຣີ ແລະ ຂໍ້ຕົກລົງສາກົນອື່ນ ກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ;
4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສະຖານທີ່ດຳເນີນການຄ້າ ແລະ ອຸດສາຫະກຳຕົວຈິງ ແລະ ມີປະສິດທິຜົນຢູ່ໃນອານາເຂດ ຂອງປະເທດໃດໜຶ່ງ ທີ່ເປັນພາຄີຂອງສົນທິສັນຍາປາຣີ ຫຼື ຂໍ້ຕົກລົງສາກົນອື່ນ ກ່ຽວກັບການປົກປ້ອງຊັບສິນອຸດສາຫະກຳ ທີ່ ສປປ ລາວ ເຂົ້າຮ່ວມເປັນພາຄີ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ່າງປະເທດ ທີ່ມີສິດໄດ້ຮັບການປົກປ້ອງດ້ານຊັບສິນອຸດສາຫະກຳ ກໍຈະໄດ້ຮັບການປະຕິບັດຢ່າງເທົ່າທຽມກັນກັບພົນລະເມືອງລາວ.

### ມາດຕາ 27 (ປັບປຸງ) ການຍື່ນຄຳຮ້ອງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຍື່ນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ອົງການຈົດທະບຽນຊັບສິນອຸດສາຫະກຳສາກົນ ທີ່ ສປປ ລາວ ເປັນພາຄີ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນອຸດສາຫະກຳ ຢູ່ ສປປ ລາວ ຕ້ອງໄດ້ມີສະຖານທີ່ດຳເນີນທຸລະກິດ ຫຼື ຜູ້ຕາງໜ້າ ທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ.

ຜູ້ຮ້ອງຂໍ ທີ່ບໍ່ມີສະຖານທີ່ດຳເນີນທຸລະກິດເພື່ອໃຊ້ເປັນບ່ອນຕິດຕໍ່ທາງການ ຫຼື ບໍ່ມີທີ່ຢູ່ອາໄສ ຢູ່ ສປປ ລາວ ຕ້ອງແຕ່ງຕັ້ງຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍຂອງຕົນ ຢູ່ ສປປ ລາວ ເພື່ອດຳເນີນທຸລະກຳທີ່ກ່ຽວຂ້ອງກັບວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ.

ສຳນວນຄຳຮ້ອງ ຕ້ອງປະກອບດ້ວຍເອກະສານຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 31 ຫາ ມາດຕາ 35 ຂອງກົດໝາຍສະບັບນີ້.

### ມາດຕາ 28 (ປັບປຸງ) ຫຼັກການໃນການພິຈາລະນາຄຳຮ້ອງ

ໃນກໍລະນີທີ່ມີການຍື່ນຫຼາຍຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳໃນເລື່ອງດຽວກັນ ແມ່ນ ໃຫ້ພິຈາລະນາຕາມຫຼັກການຄຳຮ້ອງທີ່ຍື່ນກ່ອນໝູ່ ໂດຍຖືເອົາວັນບູລິມະສິດ (ຖ້າຫາກມີ) ຫາກຄຳຮ້ອງດັ່ງກ່າວຄົບຖ້ວນຕາມເງື່ອນໄຂ.

**ມາດຕາ 29 (ປັບປຸງ) ວັນບູລິມະສິດ**

ຜູ້ຂໍ້ຮັບ ສິດທິບັດ, ອະນຸສິດທິບັດ, ການຈົດທະບຽນແບບອຸດສາຫະກໍາ ຫຼື ເຄື່ອງໝາຍການຄ້າໃດໜຶ່ງ ສາມາດຮຽກເອົາວັນບູລິມະສິດ ໂດຍອີງໃສ່ຄໍາຮ້ອງ ໜຶ່ງ ຫຼື ຫຼາຍສະບັບ ທີ່ໄດ້ຍື່ນກ່ອນໜ້ານີ້ຢູ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຫຼື ຕ່າງປະເທດ ຫຼື ຫ້ອງການຈົດທະບຽນຊັບສິນອຸດສາຫະກໍາອື່ນ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ຜູ້ທີ່ໄດ້ຮັບວັນບູລິມະສິດມາກ່ອນ ຢູ່ ສປປ ລາວ ຫຼື ຢູ່ຕ່າງປະເທດ ຫຼື ຫ້ອງການຈົດທະບຽນຊັບສິນອຸດສາຫະກໍາອື່ນ ຕາມສົນທິສັນຍາ ຫຼື ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃຫ້ຖືວ່າເປັນວັນບູລິມະສິດຂອງຜູ້ຮ້ອງຂໍສິດທິບັດ, ອະນຸສິດທິບັດ, ການຈົດທະບຽນແບບອຸດສາຫະກໍາ ຫຼື ເຄື່ອງໝາຍການຄ້າ ທີ່ມາຍື່ນຢູ່ ສປປ ລາວ.

ເມື່ອໄດ້ຮັບວັນບູລິມະສິດແລ້ວ ທຸກເອກະສານທີ່ກ່ຽວຂ້ອງກັບການຂໍ ສິດທິບັດ, ອະນຸສິດທິບັດ, ການຈົດທະບຽນແບບອຸດສາຫະກໍາ ຫຼື ເຄື່ອງໝາຍການຄ້າ ທີ່ຍື່ນມາຕາມພາຍຫຼັງ ກ່ອນວັນໝົດອາຍຸວັນບູລິມະສິດ ຈະບໍ່ຖືວ່າເປັນໂມຄະ ດ້ວຍເຫດຜົນຂອງການກະທໍາໃດໆ ທີ່ໄດ້ດໍາເນີນໃນໄລຍະເວລານັ້ນ ໂດຍສະເພາະການຍື່ນຄໍາຮ້ອງອື່ນ, ການພິມເຜີຍແຜ່ ຫຼື ການສະແຫວງຫາຜົນປະໂຫຍດຂອງການປະດິດສ້າງ, ການວາງຈໍາໜ່າຍຜະລິດຕະພັນ ຈາກແບບອຸດສາຫະກໍາ ຫຼື ການນໍາໃຊ້ເຄື່ອງໝາຍ ແລະ ການກະທໍາດັ່ງກ່າວ ບໍ່ສາມາດໃຫ້ສິດແກ່ບຸກຄົນທີສາມ ຫຼື ສິດໃນການນໍາໃຊ້ສ່ວນຕົວ.

ເມື່ອໄດ້ຍື່ນເອກະສານຂໍຮັບວັນບູລິມະສິດແລ້ວ ຜູ້ຮ້ອງຂໍຕ້ອງຍື່ນສໍາເນົາສໍານວນຄໍາຮ້ອງ ນັ້ນ ເພື່ອເປັນບ່ອນອີງ ໃຫ້ແກ່ການຂໍຮັບວັນບູລິມະສິດ ຢູ່ ສປປ ລາວ, ໃບຢັ້ງຢືນວັນບູລິມະສິດ ຕ້ອງມີການຢັ້ງຢືນຄວາມຖືກຕ້ອງ ຈາກບ່ອນທີ່ຮັບຄໍາຮ້ອງນັ້ນ ພ້ອມທັງສະແດງວັນທີຮັບຄໍາຮ້ອງດັ່ງກ່າວ. ສ່ວນສໍາເນົາສໍານວນຄໍາຮ້ອງດັ່ງກ່າວ ບໍ່ຈໍາເປັນຕ້ອງມີການຢັ້ງຢືນ ຄວາມຖືກຕ້ອງ ແລະ ສາມາດຍື່ນໄດ້ພາຍໃນ ສາມເດືອນ ນັບແຕ່ວັນຍື່ນຄໍາຮ້ອງຂໍຢູ່ ສປປ ລາວ ເປັນຕົ້ນໄປ ໂດຍບໍ່ໄດ້ເສຍຄ່າທໍານຽມ ແລະ ຄ່າບໍລິການ ແຕ່ຢ່າງໃດ.

ເມື່ອຄໍາຮ້ອງຂໍຮັບວັນບູລິມະສິດ ບໍ່ຖືກຕ້ອງຕາມເງື່ອນໄຂ ທີ່ຈະໄດ້ຮັບວັນບູລິມະສິດ, ການຮ້ອງຂໍວັນບູລິມະສິດດັ່ງກ່າວ ກໍຈະບໍ່ໄດ້ນໍາມາພິຈາລະນາ. ໃນກໍລະນີດັ່ງກ່າວ ຫຼື ບໍ່ມີການຮ້ອງຂໍວັນບູລິມະສິດ ຫຼື ໄດ້ຮັບຄໍາຮ້ອງຂໍວັນບູລິມະສິດ ພາຍຫຼັງວັນໝົດອາຍຸຂອງວັນບູລິມະສິດ, ການໃຫ້ວັນທີຍື່ນຄໍາຮ້ອງ ແມ່ນຈະຖືເອົາວັນທີຕົວຈິງ ທີ່ໄດ້ຍື່ນເອກະສານຢ່າງຄົບຖ້ວນ ຢູ່ ສປປ ລາວ.

ໄລຍະເວລາຂໍຮັບ ວັນບູລິມະສິດ ສໍາລັບສິດທິບັດ ແລະ ອະນຸສິດທິບັດ ແມ່ນ ສິບສອງ ເດືອນ ແລະ ສໍາລັບແບບອຸດສາຫະກໍາ ແລະ ເຄື່ອງໝາຍການຄ້າ ແມ່ນ ຫົກເດືອນ ນັບແຕ່ວັນໄດ້ຮັບວັນບູລິມະສິດ ເປັນຕົ້ນໄປ.

**ມາດຕາ 30 (ປັບປຸງ) ການປົກປ້ອງຊົ່ວຄາວ ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກໍາ ແລະ ເຄື່ອງໝາຍການຄ້າຢູ່ສະຖານທີ່ວາງສະແດງ**

ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກໍາ ແລະ ເຄື່ອງໝາຍການຄ້າ ທີ່ຕິດພັນກັບຜະລິດຕະພັນ ຫຼື ສິນຄ້າ ຫຼື ການບໍລິການ ຊຶ່ງໄດ້ວາງສະແດງຢ່າງເປັນທາງການ ຫຼື ຢູ່ສະຖານທີ່ວາງສະແດງ ທີ່ສາກົນຮັບຮູ້ ແມ່ນໄດ້ຮັບການປົກປ້ອງຊົ່ວຄາວ ຕາມການຮ້ອງຂໍຂອງເຈົ້າຂອງຜະລິດຕະພັນ ຫຼື ສິນຄ້າ ຫຼື ການບໍລິການ, ຄໍາຮ້ອງດັ່ງກ່າວ ຕ້ອງຍື່ນພາຍໃນ ຫົກ ເດືອນ ນັບແຕ່ວັນທີ່ໄດ້ວາງສະແດງຜະລິດຕະພັນ ຫຼື ສິນຄ້າ ຫຼື ການບໍລິການຢູ່ສະຖານທີ່ວາງສະແດງນັ້ນ.

ການປົກປ້ອງຊົ່ວຄາວ ຈະຖືເອົາວັນທໍາອິດ ທີ່ໄດ້ວາງສະແດງຜະລິດຕະພັນ ຫຼື ສິນຄ້າ ຫຼື ການບໍລິການນັ້ນ.

ການປົກປ້ອງຊົ່ວຄາວ ຈະບໍ່ຖືກນຳໃຊ້ເພື່ອຂະຫຍາຍເວລາ ໃນການຮ້ອງຂໍຮັບ ວັນບູລິມະສິດ.

**ມາດຕາ 31 (ປັບປຸງ) ສຳນວນຄຳຮ້ອງຂໍຮັບ ສິດທິບັດ ຫຼື ອະນຸສິດທິບັດ**

ສຳນວນຄຳຮ້ອງຂໍຮັບ ສິດທິບັດ ຫຼື ອະນຸສິດທິບັດ ຕ້ອງປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຮັບ ສິດທິບັດ ຫຼື ອະນຸສິດທິບັດ ຕາມແບບພິມ;
2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ບົດອະທິບາຍ ກ່ຽວກັບການເປີດເຜີຍ ການປະດິດສ້າງ ຫຼື ສິ່ງປະດິດຢ່າງຈະແຈ້ງ ແລະ ຄົບຖ້ວນ ເພື່ອໃຫ້ບຸກຄົນທີ່ມີຄວາມຮູ້ທົ່ວໄປ ໃນຂົງເຂດເຕັກໂນໂລຊີ ທີ່ກ່ຽວຂ້ອງກັບການປະດິດສ້າງ ຫຼື ສິ່ງປະດິດນັ້ນ ໃຫ້ສາມາດເຂົ້າໃຈ ແລະ ນຳໃຊ້ ໃຫ້ເປັນປະໂຫຍດ, ບົດອະທິບາຍດັ່ງກ່າວ ຈະຕ້ອງເປີດເຜີຍວິທີການທີ່ດີທີ່ສຸດ ຂອງການຜະລິດ ຫຼື ນຳໃຊ້ການປະດິດສ້າງ ຫຼື ສິ່ງປະດິດນັ້ນ;
4. ບົດອະທິບາຍກ່ຽວກັບຂໍ້ຮຽກຮ້ອງຂໍຮັບສິດ ທີ່ກຳນົດຫົວຂໍ້ທີ່ຈະປົກປ້ອງຢ່າງຈະແຈ້ງ;
5. ຮູບແຕ້ມ ໃນກໍລະນີຈຳເປັນ;
6. ບົດສັງເຂບ;
7. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ຄຳຮ້ອງ ຕ້ອງຄັດຕິດເອກະສານຂໍຮັບວັນບູລິມະສິດ (ຖ້າຫາກມີ) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

ສຳນວນຄຳຮ້ອງຂໍຮັບ ສິດທິບັດ ຫຼື ອະນຸສິດທິບັດ ໜຶ່ງຊຸດ ສາມາດໃຊ້ໄດ້ສະເພາະແຕ່ການປະດິດສ້າງ ຫຼື ສິ່ງປະດິດໜຶ່ງອັນເທົ່ານັ້ນ ຫຼື ກຸ່ມໜຶ່ງ ຂອງການປະດິດສ້າງ ຫຼື ສິ່ງປະດິດ ທີ່ພົວພັນເຖິງການປະກອບເປັນແນວຄວາມຄິດໃນການປະດິດອັນໜຶ່ງອັນດຽວ ຕາມການຈັດໝວດຂອງສາກົນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍ ຕ້ອງມີເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 3 ແລະ 7 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຮັບສິດທິບັດ ຫຼື ອະນຸສິດທິບັດ ຕ້ອງປະຕິບັດຕາມທຸກເງື່ອນໄຂໃຫ້ຄົບຖ້ວນ ພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 32 (ປັບປຸງ) ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ມີ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ຕາມແບບພິມ;
2. ໃບມອບສິດທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ຮູບແຕ້ມ ຫຼື ຮູບຖ່າຍ ຈຳນວນໜຶ່ງຮູບ ຫຼື ຫຼາຍຮູບ ທີ່ບົ່ງບອກເຖິງແບບອຸດສາຫະກຳຢ່າງຈະແຈ້ງ ທີ່ສະແດງໃຫ້ເຫັນລັກສະນະຮູບຊົງຂອງແບບນັ້ນ;
4. ບົດອະທິບາຍໂດຍສັງເຂບ ກ່ຽວກັບຊະນິດຂອງສິນຄ້າ ທີ່ກ່ຽວຂ້ອງກັບແບບອຸດສາຫະກຳ;
5. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ຄຳຮ້ອງ ຕ້ອງຄັດຕິດເອກະສານຂໍຮັບວັນບູລິມະສິດ (ຖ້າຫາກມີ) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ສາມາດໃຊ້ໄດ້ສະເພາະແບບອຸດສາຫະກຳດຽວ ຫຼື ໃນຊຸດດຽວກັນ ທີ່ກ່ຽວກັບແບບດັ່ງກ່າວ ສຳລັບໝວດດຽວກັນ ຕາມການຈັດໝວດຂອງສາກົນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍຕ້ອງມີເອກະສານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 3 ແລະ 5 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນແບບອຸດສາຫະກຳ ຕ້ອງປະຕິບັດຕາມທຸກເງື່ອນໄຂ ໃຫ້ຄົບຖ້ວນ ພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 33 (ປັບປຸງ) ສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າຕາມແບບພິມ;
2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ຮູບແຕ້ມ ຫຼື ຮູບຖ່າຍ ຫຼື ຕົວຢ່າງເຄື່ອງໝາຍ ທີ່ຈະແຈ້ງ;
4. ບົດອະທິບາຍ ກ່ຽວກັບສິນຄ້າທີ່ເຄື່ອງໝາຍການຄ້າຈະຖືກນຳໃຊ້ ຫຼື ການບໍລິການ ທີ່ກ່ຽວຂ້ອງ. ຖ້າວ່າຄຳຮ້ອງ ຫາກກ່ຽວຂ້ອງກັບ ເຄື່ອງໝາຍການຄ້າລວມໝູ່ ຫຼື ເຄື່ອງໝາຍຮັບຮອງນັ້ນ ຄຳຮ້ອງຕ້ອງບົ່ງບອກເຄື່ອງໝາຍດັ່ງກ່າວໄວ້ຢ່າງຊັດເຈນ ແລະ ປະກອບບົດອະທິບາຍ ກ່ຽວກັບການຈະນຳໃຊ້ເຄື່ອງໝາຍນັ້ນ;
5. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ຄຳຮ້ອງ ອາດຄັດຕິດເອກະສານຂໍຮັບວັນບູລິມະສິດ (ຖ້າຫາກມີ) ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍສະບັບນີ້.

ຄຳຮ້ອງຂໍຈົດທະບຽນໜຶ່ງສະບັບ ແມ່ນໃຊ້ໄດ້ສະເພາະແຕ່ເຄື່ອງໝາຍການຄ້າອັນດຽວເທົ່ານັ້ນ ແຕ່ສາມາດຂໍຈົດໄດ້ຫຼາຍໝວດຂອງສິນຄ້າ ຫຼື ການບໍລິການ ຕາມການຈັດໝວດຂອງສາກົນ ແຕ່ຕ້ອງໄດ້ຊຳລະຄ່າທຳນຽມ ແຕ່ລະໝວດຂອງສິນຄ້າ ຫຼື ການບໍລິການ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍ ຕ້ອງມີເອກະສານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 3 ແລະ 5 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນເຄື່ອງໝາຍການຄ້າ ຕ້ອງປະຕິບັດຕາມທຸກເງື່ອນໄຂ ໃຫ້ຄົບຖ້ວນພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 34 (ປັບປຸງ) ສຳນວນຄຳຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມ**

ສຳນວນຄຳຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຕາມແບບພິມ;
2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ບົດອະທິບາຍ ກ່ຽວກັບການນຳໃຊ້ໃນທາງການຄ້າເທື່ອທຳອິດຂອງ ແບບຜັງ ຫຼື ວົງຈອນລວມ ທີ່ເຊື່ອມຕໍ່ເຂົ້າກັນ;
4. ແຜນວາດ ຂອງແບບຜັງວົງຈອນລວມ ເພື່ອສາມາດຈຳແນກແບບຜັງ;

5. ບົດອະທິບາຍ ກ່ຽວກັບໜ້າທີ່ທາງດ້ານເອເລັກໂຕຣນິກ ທີ່ວົງຈອນລວມທຳງານ ຫຼື ຈຸດປະສົງເພື່ອເຮັດໃຫ້ວົງຈອນລວມທຳງານ ຖ້າຫາກວົງຈອນລວມ ໄດ້ຖືກນຳໄປຫາຜົນປະໂຫຍດໃນທາງການຄ້າແລ້ວ;

6. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ສຳນວນຄຳຮ້ອງ ຂໍຈົດທະບຽນແບບຜັງວົງຈອນລວມແຕ່ລະຊຸດ ສາມາດໃຊ້ໄດ້ສະເພາະ ແຕ່ແບບຜັງວົງຈອນລວມ ໜຶ່ງອັນ ເທົ່ານັ້ນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍ ຕ້ອງມີເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 3 ແລະ 6 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນແບບຜັງວົງຈອນລວມ ຕ້ອງປະຕິບັດຕາມທຸກເງື່ອນໄຂ ໃຫ້ຄົບຖ້ວນ ພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

### ມາດຕາ 35 (ປັບປຸງ) ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ

ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດ ຕາມແບບພິມ;
2. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
3. ຊື່ຂອງຖິ່ນກຳເນີດ ທີ່ຈະແຈ້ງ;
4. ບົດລາຍງານ ກ່ຽວກັບຂົງເຂດພູມສາດ ທີ່ຈະນຳໃຊ້ເປັນຖິ່ນກຳເນີດ;
5. ສິນຄ້າ ທີ່ກ່ຽວຂ້ອງກັບຖິ່ນກຳເນີດ ແລະ ວິທີການກວດກາທີ່ຈະນຳໃຊ້;
6. ບົດລາຍງານ ກ່ຽວກັບຈຸດເດັ່ນຂອງຖິ່ນກຳເນີດ ຊຶ່ງຜູ້ຮ້ອງຂໍສະເໜີໃຫ້ເປັນຖິ່ນກຳເນີດ ແລະ ຫຼັກຖານ ເພື່ອສະໜັບສະໜູນບົດລາຍງານນັ້ນ;
7. ຫຼັກຖານຢັ້ງຢືນການປົກປ້ອງຖິ່ນກຳເນີດ ຢູ່ໃນປະເທດຕົ້ນກຳເນີດ ໃນກໍລະນີທີ່ຄຳຮ້ອງຂໍຈົດທະບຽນນັ້ນ ໄດ້ອີງໃສ່ການປົກປ້ອງຢູ່ຕ່າງປະເທດ;
8. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ສຳນວນຄຳຮ້ອງຂໍຈົດທະບຽນຖິ່ນກຳເນີດແຕ່ລະຊຸດ ສາມາດໃຊ້ໄດ້ສະເພາະແຕ່ຖິ່ນກຳເນີດ ໜຶ່ງອັນເທົ່ານັ້ນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍ ຕ້ອງ ມີເອກະສານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 3, 5 ແລະ 8 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນຖິ່ນກຳເນີດ ຕ້ອງປະຕິບັດຕາມທຸກເງື່ອນໄຂໃຫ້ຄົບຖ້ວນ ພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

### ມາດຕາ 36 ການສະໜອງຂໍ້ມູນເພີ່ມເຕີມ

ໃນກໍລະນີ ທີ່ມີການຍື່ນຄຳຮ້ອງຂໍຈົດທະບຽນຢູ່ຕ່າງປະເທດ ແລະ ຄຳຮ້ອງຂໍດັ່ງກ່າວ ປະກອບດ້ວຍເນື້ອໃນອັນດຽວກັນ, ເປັນບາງສ່ວນ ຫຼື ທັງໝົດ ທີ່ຄືກັນກັບຄຳຮ້ອງຂໍທີ່ໄດ້ຍື່ນຢູ່ ສປປ ລາວ ນັ້ນ ຜູ້ຮ້ອງຂໍຈະເປີດເຜີຍການຂໍຈົດທະບຽນກ່ອນໜ້ານັ້ນກໍໄດ້.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອາດສະເໜີໃຫ້ຜູ້ຮ້ອງຂໍ ຫຼື ຜູ້ຮ້ອງຂໍອາດສະໜອງເອກະສານທີ່ກ່ຽວຂ້ອງດ້ວຍຕົນເອງ ໂດຍສະເພາະຜົນຂອງການຄົ້ນຫາ ຫຼື ບົດລາຍງານການກວດສອບ ຫຼື ສຳເນົາສິດທິບັດ ຫຼື ອະນຸສິດທິບັດ ຫຼື ໃບຢັ້ງຢືນການຈົດທະບຽນ ຊັບສິນອຸດສາຫະກຳ ທີ່ອອກໃຫ້ຢູ່ຕ່າງປະເທດກໍໄດ້.

**ມາດຕາ 37 ພາສາທີ່ໃຊ້ສຳລັບການປະກອບສຳນວນຄຳຮ້ອງ**

ສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ແລະ ເອກະສານຄັດຕິດອື່ນໆ ສາມາດຂຽນເປັນພາສາລາວ ຫຼື ອັງກິດກໍໄດ້. ຖ້າວ່າຄຳຮ້ອງ ຫຼື ເອກະສານ ທີ່ໄດ້ຂຽນເປັນພາສາອັງກິດນັ້ນ ຜູ້ຮ້ອງຂໍບັງຕ້ອງຍື່ນສະບັບແປເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນ ເກົ້າສິບວັນ ຫຼັງຈາກວັນໄດ້ຍື່ນຄຳຮ້ອງ.

**ມາດຕາ 38 (ປັບປຸງ) ການກວດສອບສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳເບື້ອງຕົ້ນ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຈະດຳເນີນການກວດສອບສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳເບື້ອງຕົ້ນ ເພື່ອຮັບປະກັນວ່າຄຳຮ້ອງນັ້ນ ຄົບຖ້ວນຖືກຕ້ອງຕາມແບບຟອມ ແລະ ໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການແລ້ວ. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຈະແຈ້ງໃຫ້ຜູ້ຮ້ອງຂໍຮູ້ວ່າ ຄຳຮ້ອງນັ້ນພຽງພໍ ທີ່ຈະໄດ້ຮັບວັນທີທີ່ຍື່ນຄຳຮ້ອງແລ້ວ.

ຖ້າເຫັນວ່າຄຳຮ້ອງນັ້ນ ຫາກບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກໍຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງ ເພື່ອແກ້ໄຂ ພາຍໃນ ຫົກສິບວັນ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ.

**ມາດຕາ 39 (ປັບປຸງ) ການເຜີຍແຜ່ ຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ**

ພາຍຫຼັງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ດຳເນີນການກວດສອບ ສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດເບື້ອງຕົ້ນ ສຳເລັດແລ້ວ ກໍຈະເຜີຍແຜ່ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ໃນເດືອນທີ ສິບເກົ້າ ນັບແຕ່ວັນຍື່ນຄຳຮ້ອງ ຫຼື ວັນບຸລິມະສິດ ເປັນຕົ້ນໄປ.

ສຳລັບຄຳຮ້ອງຂໍຈົດທະບຽນ ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ ແລະ ຖິ່ນກຳເນີດ ຈະໄດ້ເຜີຍແຜ່ ພາຍຫຼັງສຳເລັດການກວດສອບເບື້ອງຕົ້ນ ເປັນຕົ້ນໄປ.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານຄຳຮ້ອງຂໍດັ່ງກ່າວ ພາຍໃນເວລາ ເກົ້າສິບວັນ ສຳລັບສິດທິບັດ ແລະ ອະນຸສິດທິບັດ; ຫົກສິບວັນ ສຳລັບແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ ແລະ ຖິ່ນກຳເນີດ ນັບແຕ່ວັນໄດ້ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ເປັນຕົ້ນໄປ.

**ມາດຕາ 40 (ປັບປຸງ) ການກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ**

ພາຍຫຼັງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ດຳເນີນການກວດສອບເບື້ອງຕົ້ນ ສຳນວນຄຳຮ້ອງຂໍຈົດທະບຽນສຳເລັດແລ້ວ ກໍຈະດຳເນີນການກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ ແລະ ຖິ່ນກຳເນີດ.

ສຳລັບສຳນວນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຈະບໍ່ໄດ້ກວດສອບເນື້ອໃນ.

**ມາດຕາ 41 (ປັບປຸງ) ການສະເໜີໃຫ້ກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ**

ຄຳຮ້ອງຂໍຮັບສິດທິບັດ ຈະຖືກກວດສອບເນື້ອໃນ ເພື່ອກຳນົດໃຫ້ຮູ້ວ່າ ມີຄວາມສອດຄ່ອງກັບເງື່ອນໄຂ ຂໍຮັບສິດທິບັດ ຫຼື ອະນຸສິດທິບັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້. ການກວດສອບເນື້ອໃນຈະອີງໃສ່ ການຄົ້ນຫາຂໍ້ມູນທາງດ້ານເຕັກນິກທີ່ມີຢູ່ແລ້ວ. ໃນກໍລະນີທີ່ຄຳຮ້ອງໄດ້ຜ່ານການຄົ້ນຫາ ຫຼື ກວດສອບໂດຍອົງ ການອື່ນມາກ່ອນແລ້ວ ຜູ້ຮ້ອງຂໍຕ້ອງນຳເອົາສຳເນົາຂອງບົດລາຍງານ ຈາກອົງການດັ່ງກ່າວ ແລະ ສະເໜີໃຫ້ກະ ຊວງວິທະຍາສາດ ແລະ ເຕັກໂນໂລຊີ ພິຈາລະນາການອອກສິດທິບັດ ຫຼື ອະນຸສິດທິບັດ ໂດຍບໍ່ຈຳເປັນຕ້ອງດຳ ເນີນການຄົ້ນຫາຂໍ້ມູນດັ່ງກ່າວຕື່ມອີກ.

ໃນກໍລະນີ ທີ່ຜູ້ຮ້ອງຂໍ ບໍ່ສາມາດສະໜອງບົດລາຍງານ ຜົນຂອງການກວດສອບເນື້ອໃນ ຂອງການປະ ດິດສ້າງ ຫຼື ສິ່ງປະດິດ ທີ່ກ່ຽວຂ້ອງກັບຄຳຮ້ອງ ທີ່ກຳລັງຂໍຈົດທະບຽນຢູ່ນັ້ນ ຜູ້ຮ້ອງຂໍສາມາດສະເໜີໃຫ້ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ກວດສອບເນື້ອໃນສຳນວນຄຳຮ້ອງຂໍດັ່ງກ່າວ. ກະຊວງວິທະຍາສາດແລະ ເຕັກ ໂນໂລຊີ ຈະດຳເນີນການກວດສອບເນື້ອໃນ ໃນໄລຍະເວລາ ສາມສິບສອງເດືອນ ສຳລັບການປະດິດສ້າງ ແລະ ສິບ ສອງເດືອນ ສຳລັບສິ່ງປະດິດ ໂດຍນັບແຕ່ວັນຍື່ນຄຳຮ້ອງ ຫຼື ວັນບຸລິມະສິດ ເປັນຕົ້ນໄປ. ການໃຊ້ຈ່າຍຕ່າງໆໃນ ການສະເໜີໃຫ້ກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດນັ້ນ ຈະຕົກ ເປັນພາລະຂອງຜູ້ຮ້ອງຂໍ, ສິ່ງມູນຄ່າໃນການກວດສອບເນື້ອໃນ ແມ່ນຂຶ້ນກັບການກຳນົດຂອງແຕ່ລະສຳນັກງານ ສິດທິບັດຂອງ ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນ ກ່ຽວກັບການກວດສອບສິດທິບັດ ທີ່ຈະດຳເນີນການກວດ ສອບເນື້ອໃນດັ່ງກ່າວ ຕາມແຕ່ລະໄລຍະ.

ສຳລັບການຂໍຈົດທະບຽນ ແບບອຸດສາຫະກຳ, ແບບຜັງວົງຈອນລວມ, ເຄື່ອງໝາຍການຄ້າ ແລະ ຖິ່ນ ກຳເນີດ ຈະບໍ່ມີການສະເໜີໃຫ້ກວດສອບເນື້ອໃນ.

**ມາດຕາ 42 (ປັບປຸງ) ການດັດແກ້ ແລະ ແຍກຄຳຮ້ອງ**

ໃນໄລຍະພິຈາລະນາຄຳຮ້ອງ ກ່ອນກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຈະອອກໃບຢັ້ງຢືນນັ້ນ ຜູ້ຮ້ອງຂໍສາມາດດັດແກ້ ຫຼື ແຍກຄຳຮ້ອງໄດ້ທຸກເວລາ ຕາມວິທີການ ດັ່ງນີ້:

1. ດັດແກ້ຄຳຮ້ອງໂດຍ ບໍ່ເສຍຄ່າທຳນຽມ ແລະ ຄ່າບໍລິການ;

2. ແຍກຄຳຮ້ອງ ເປັນສອງ ຫຼື ຫຼາຍຄຳຮ້ອງ ຫຼື ຍື່ນຄຳຮ້ອງຄືນໃໝ່ ໂດຍມີການດັດແກ້ ຫຼື ບໍ່ດັດແກ້ ແຕ່ຕ້ອງປະຕິບັດພາຍຫຼັງ ທີ່ໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ແລ້ວ;

3. ຍື່ນຄຳຮ້ອງຄືນໃໝ່ ກ່ຽວກັບການປ່ຽນຮູບແບບຂອງການຂໍປົກປ້ອງ ແຕ່ຕ້ອງຍື່ນພາຍຫຼັງທີ່ໄດ້ ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ແລ້ວ.

ການດັດແກ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງວັກ ໜຶ່ງ ຂອງມາດຕານີ້ ຈະຕ້ອງ:

1. ບໍ່ເປັນການໃຊ້ຂໍ້ມູນຂ່າວ ສານໃໝ່ດ້ານເຕັກນິກ ທີ່ບໍ່ໄດ້ອ້າງອີງໃນຄຳຮ້ອງສະບັບຕົ້ນ ໃນການຍື່ນ ຄຳຮ້ອງຄືນໃໝ່ ເພື່ອຮັບສິດທິບັດ, ອະນຸສິດທິບັດ ຫຼື ຈົດທະບຽນແບບຜັງວົງຈອນລວມ;

2. ບໍ່ປ່ຽນແປງຮູບຊົງທີ່ສຳຄັນຂອງແບບອຸດສາຫະກຳ ຫຼື ບໍ່ປ່ຽນແປງທາດແທ້ອັນສຳຄັນ ຂອງເຄື່ອງ ໝາຍ ຫຼື ຂອງແຫຼ່ງກຳເນີດໃດໜຶ່ງ.

ໃນກໍລະນີ ທີ່ຄຳຮ້ອງ ຖືກແຍກ ຫຼື ນຳມາຍື່ນໃໝ່ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 2 ຫຼື ຂໍ້ 3 ຂອງວັກ ໜຶ່ງ ຂອງມາດຕານີ້ ຄຳຮ້ອງເຫຼົ່ານັ້ນ ຕ້ອງໄດ້ຮັບວັນທີທີ່ຍື່ນຄຳຮ້ອງ ແລະ ວັນບຸລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນລະ ບຽບການ.

**ມາດຕາ 43 (ປັບປຸງ) ຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ທີ່ບໍ່ນຳມາພິຈາລະນາ**

ສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ທີ່ບໍ່ນຳມາພິຈາລະນາ ມີ ດັ່ງນີ້:

1. ສຳນວນຄຳຮ້ອງ ບໍ່ຄົບຖ້ວນ;
2. ຊັບສິນອຸດສາຫະກຳ ບໍ່ມີເງື່ອນໄຂຈະໄດ້ຮັບການປົກປ້ອງ;
3. ຜູ້ຍື່ນສຳນວນຄຳຮ້ອງ ບໍ່ມີສິດຂໍຈົດທະບຽນ;
4. ຜູ້ຍື່ນສຳນວນຄຳຮ້ອງ ບໍ່ໄດ້ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ສຳລັບ ຄຳຮ້ອງ ຫຼື ການຮັກສາອາຍຸການປົກປ້ອງ;
5. ຜູ້ຍື່ນສຳນວນຄຳຮ້ອງ ບໍ່ໄດ້ສະເໜີໃຫ້ກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດ ໃນໄລຍະເວລາທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້;
6. ຜູ້ຍື່ນສຳນວນຄຳຮ້ອງ ບໍ່ດັດແກ້ຂໍ້ 1, 3, 4 ແລະ 5 ເທິງນີ້ ພາຍໃນໄລຍະເວລາ ຕາມການແນະນຳຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 44 (ປັບປຸງ) ການຈົດທະບຽນ**

ພາຍຫຼັງການກວດສອບ ແລະ ພິຈາລະນາ ສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ທີ່ເຫັນວ່າຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຈະອອກສິດທິບັດ, ອະນຸສິດທິບັດ ຫຼື ໃບຢັ້ງຢືນການຈົດທະບຽນຊັບສິນອຸດສາຫະກຳ ໃຫ້ຜູ້ຮ້ອງຂໍ, ບັນທຶກລົງໃນປຶ້ມບັນທຶກການຈົດທະບຽນ ແລ້ວເຜີຍແຜ່ພືນຂອງການຈົດທະບຽນດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ.

ເມື່ອມີການຈົດທະບຽນແລ້ວ ບຸກຄົນທີສາມ ສາມາດສະເໜີຮ້ອງຂໍຍົກເລີກ ຫຼື ລົບລ້າງ ກ່ຽວກັບການຈົດທະບຽນດັ່ງກ່າວ ພາຍໃນເວລາ ຫ້າປີ ນັບແຕ່ວັນເຜີຍແຜ່ ໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ ເປັນຕົ້ນໄປ.

**ມາດຕາ 45 (ປັບປຸງ) ການສິ້ນສຸດສິດໃນຊັບສິນອຸດສາຫະກຳ**

ສິດທິບັດ, ອະນຸສິດທິບັດ ແລະ ການຈົດທະບຽນຊັບສິນອຸດສາຫະກຳອື່ນ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ອາຍຸການປົກປ້ອງໄດ້ສິ້ນສຸດລົງ;
2. ເຈົ້າຂອງຊັບສິນອຸດສາຫະກຳ ບໍ່ຕໍ່ອາຍຸການຈົດທະບຽນ ແລະ ບໍ່ຈ່າຍຄ່າທຳນຽມ ແລະ ຄ່າບໍລິການຕາມລະບຽບການ. ບໍ່ວ່າໃນກໍລະນີໃດສິດດັ່ງກ່າວ ຈະສິ້ນສຸດລົງໃນວັນສຸດທ້າຍຂອງໄລຍະການປົກປ້ອງໝົດອາຍຸ ແລະ ໃນວັນສຸດທ້າຍຂອງຄ່າທຳນຽມ ແລະ ຄ່າບໍລິການ ທີ່ໄດ້ຈ່າຍແລ້ວ;
3. ສິດທິບັດ, ອະນຸສິດທິບັດ ຫຼື ການຈົດທະບຽນ ເປັນໂມຄະ ຖ້າພົບເຫັນວ່າ ເງື່ອນໄຂເພື່ອຂໍປົກປ້ອງຢ່າງໜຶ່ງ ຫຼື ຫຼາຍຢ່າງ ບໍ່ຄົບຖ້ວນ; ໃນກໍລະນີການພົບເຫັນພຽງແຕ່ສ່ວນໃດສ່ວນໜຶ່ງ ຂອງຊັບສິນອຸດສາຫະກຳບໍ່ຖືກຕ້ອງຕາມເງື່ອນໄຂ ກໍຈະເປັນໂມຄະແຕ່ສະເພາະສ່ວນນັ້ນ ໂດຍນັບແຕ່ວັນອອກສິດທິບັດ, ອະນຸສິດທິບັດ ຫຼື ໃບຢັ້ງຢືນການຈົດທະບຽນ ເປັນຕົ້ນໄປ;
4. ສິດໃນຊັບສິນອຸດສາຫະກຳ ສຳລັບການບໍ່ສະແຫວງຫາຜົນປະໂຫຍດທາງການຄ້າ ຈະສິ້ນສຸດລົງຕາມຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ.

## ໝວດທີ 4
## ເຈົ້າຂອງສິດໃນຊັບສິນອຸດສາຫະກຳ

**ມາດຕາ 46 ເຈົ້າຂອງຊັບສິນອຸດສາຫະກຳ**

ພາຍຫຼັງທີ່ໄດ້ຮັບ ສິດທິບັດ, ອະນຸສິດທິບັດ ຫຼື ການຈົດທະບຽນ ຢ່າງຖືກຕ້ອງຕາມກົດໝາຍແລ້ວ ຜູ້ຮ້ອງຂໍຈະກາຍເປັນເຈົ້າຂອງຊັບສິນອຸດສາຫະກຳ.

ໃນກໍລະນີ ທີ່ມີການວ່າຈ້າງໃຫ້ປະດິດສ້າງ ຫຼື ອອກແບບຊັບສິນອຸດສາຫະກຳນັ້ນ ສິດໃນຊັບສິນອຸດສາຫະກຳດັ່ງກ່າວ ແມ່ນເປັນຂອງຜູ້ວ່າຈ້າງ ເວັ້ນເສຍແຕ່ມີການຕົກລົງກັນໄວ້ຢ່າງອື່ນ.

**ມາດຕາ 47 (ປັບປຸງ) ສິດ ຂອງເຈົ້າຂອງຊັບສິນອຸດສາຫະກຳ**

ເຈົ້າຂອງຊັບສິນອຸດສາຫະກຳ ມີສິດ ດັ່ງນີ້:

1. ໄດ້ຮັບປະໂຫຍດ ທີ່ໄດ້ມາຈາກການສະແຫວງຫາຜົນປະໂຫຍດຂອງຊັບສິນອຸດສາຫະກຳ;
2. ໂອນສິດທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ໃຫ້ຜູ້ອື່ນ ດ້ວຍການຂາຍ, ແລກປ່ຽນ, ໃຫ້ເຊົ່າ ຫຼື ມອບ;
3. ອະນຸຍາດໃຫ້ບຸກຄົນອື່ນ ສະແຫວງຫາຜົນປະໂຫຍດ ທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ ໃນຊັບສິນອຸດສາຫະກຳຂອງຕົນ;
4. ມອບການສືບທອດ ແລະ ໂອນກຳມະສິດ ຊັບສິນອຸດສາຫະກຳ ຂອງຕົນໃຫ້ຜູ້ອື່ນ;
5. ດຳເນີນການທາງດ້ານກົດໝາຍ ເພື່ອປົກປ້ອງຊັບສິນອຸດສາຫະກຳຂອງຕົນ ຈາກການລະເມີດຂອງຜູ້ອື່ນ.

## ໝວດທີ 5
## ອາຍຸການປົກປ້ອງຊັບສິນອຸດສາຫະກຳ

**ມາດຕາ 48 (ປັບປຸງ) ອາຍຸການປົກປ້ອງສິດທິບັດ**

ອາຍຸການປົກປ້ອງສິດທິບັດ ມີກຳນົດ ຊາວປີ ນັບແຕ່ວັນຍື່ນຄຳຮ້ອງຂໍຮັບເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງນັ້ນ ເຈົ້າຂອງສິດທິບັດ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການລ່ວງໜ້າ ແຕ່ລະປີ.

**ມາດຕາ 49 (ປັບປຸງ) ອາຍຸການປົກປ້ອງອະນຸສິດທິບັດ**

ອາຍຸການປົກປ້ອງອະນຸສິດທິບັດ ມີກຳນົດ ສິບປີ ນັບແຕ່ວັນຍື່ນຄຳຮ້ອງຂໍຮັບເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງນັ້ນ ເຈົ້າຂອງອະນຸສິດທິບັດ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການລ່ວງໜ້າ ແຕ່ລະປີ.

**ມາດຕາ 50 (ປັບປຸງ) ອາຍຸການປົກປ້ອງແບບອຸດສາຫະກຳ**

ອາຍຸການປົກປ້ອງແບບອຸດສາຫະກຳ ມີກຳນົດ ສິບຫ້າປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງນັ້ນ ເຈົ້າຂອງແບບອຸດສາຫະກຳ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ລ່ວງໜ້າເທື່ອລະ ຫ້າປີ.

**ມາດຕາ 51 (ປັບປຸງ) ອາຍຸການປົກປ້ອງເຄື່ອງໝາຍການຄ້າ**

ອາຍຸການປົກປ້ອງເຄື່ອງໝາຍການຄ້າ ມີກຳນົດ ສິບປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນເປັນຕົ້ນໄປ, ເມື່ອຄົບກຳນົດແລ້ວ ສາມາດຕໍ່ອາຍຸ ເທື່ອລະ ສິບປີ ໄດ້ຕະຫຼອດໄປ.

ເພື່ອຮັກສາອາຍຸການປົກປ້ອງນັ້ນ ເຈົ້າຂອງເຄື່ອງໝາຍການຄ້າ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ລ່ວງໜ້າເທື່ອລະ ສິບປີ.

**ມາດຕາ 52 (ປັບປຸງ) ອາຍຸການປົກປ້ອງແບບຜັງວົງຈອນລວມ**

ອາຍຸການ ປົກປ້ອງແບບຜັງວົງຈອນລວມ ມີກຳນົດ ສິບສອງປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງນັ້ນ ເຈົ້າຂອງແບບຜັງວົງຈອນລວມ ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ລ່ວງໜ້າ ແຕ່ລະປີ.

**ມາດຕາ 53 (ປັບປຸງ) ອາຍຸການປົກປ້ອງຖິ່ນກຳເນີດ**

ອາຍຸການປົກປ້ອງຖິ່ນກຳເນີດ ມີຕະຫຼອດໄປ ນັບແຕ່ວັນໄດ້ຮັບໃບປັ້ງປືນການຈົດທະບຽນເປັນຕົ້ນໄປ ແລະ ຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ເທື່ອດຽວ.

**ມາດຕາ 54 (ໃໝ່) ອາຍຸການປົກປ້ອງຊື່ການຄ້າ**

ອາຍຸການປົກປ້ອງ ຊື່ການຄ້າ ມີຕະຫຼອດໄປ ຈົນກວ່າເຈົ້າຂອງຊື່ການຄ້ານັ້ນ ຢຸດນຳໃຊ້.

**ມາດຕາ 55 ອາຍຸການປົກປ້ອງຄວາມລັບທາງການຄ້າ**

ອາຍຸການປົກປ້ອງ ຄວາມລັບທາງການຄ້າ ມີຕະຫຼອດໄປ ຈົນກວ່າຄວາມລັບທາງການຄ້າຈະຖືກເປີດເຜີຍ.

## ໝວດທີ 6
## ສິດ ແລະ ພັນທະ ຂອງເຈົ້າຂອງຊັບສິນອຸດສາຫະກຳ

**ມາດຕາ 56 ສິດຂອງເຈົ້າຂອງ ສິດທິບັດ ແລະ ອະນຸສິດທິບັດ**

ເຈົ້າຂອງສິດທິບັດ ມີສິດ ດັ່ງນີ້:

1. ໃນກໍລະນີ ທີ່ສິດທິບັດ ກ່ຽວຂ້ອງກັບຜະລິດຕະພັນ:

1.1. ສິດປ້ອງກັນ ບໍ່ໃຫ້ບຸກຄົນອື່ນຜະລິດ, ນຳເຂົ້າ, ສະເໜີຂາຍ, ຂາຍ ຫຼື ນຳໃຊ້ ຜະລິດຕະພັນ ທີ່ໄດ້ຮັບສິດທິບັດແລ້ວ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ;

1.2. ສິດປ້ອງກັນ ບໍ່ໃຫ້ບຸກຄົນອື່ນ ເກັບຮັກສາຜະລິດຕະພັນດັ່ງກ່າວ ເພື່ອສະເໜີ ຂາຍ, ຂາຍ ຫຼື ນຳໃຊ້ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ.

2. ໃນກໍລະນີທີ່ສິດທິບັດ ກ່ຽວຂ້ອງກັບຂະບວນການຜະລິດ:

2.1 ສິດປ້ອງກັນ ບໍ່ໃຫ້ບຸກຄົນອື່ນ ນຳໃຊ້ຂະບວນການຜະລິດດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ;

2.2 ສິດປ້ອງກັນ ບໍ່ໃຫ້ບຸກຄົນອື່ນດຳເນີນການໃດໆ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕໍ່ຜະລິດຕະພັນທີ່ເກີດໂດຍກົງ ຈາກຂະບວນການຜະລິດ ທີ່ໄດ້ຮັບສິດທິບັດແລ້ວ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ.

3. ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ບໍ່ແມ່ນເຈົ້າຂອງສິດທິບັດ ດຳເນີນການໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ ຢູ່ ສປປ ລາວ;

4. ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍ ຈາກການລະເມີດຂອງຜູ້ອື່ນ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍ ຈາກຄວາມເສຍຫາຍທີ່ຜູ້ອື່ນໄດ້ກໍ່ຂຶ້ນ;

5. ປ້ອງກັນ ບໍ່ໃຫ້ຜູ້ອື່ນລະແຫວງຫາຜົນປະໂຫຍດຈາກການປະດິດສ້າງ ທີ່ໄດ້ຮັບສິດທິບັດແລ້ວ, ສາມາດດຳເນີນການຮ້ອງຟ້ອງໄດ້ ພາຍຫຼັງໄດ້ຮັບສິດທິບັດແລ້ວ ຕໍ່ການລະເມີດທີ່ເກີດຂຶ້ນໃນຂະນະທີ່ຄຳຮ້ອງ ຢູ່ໃນໄລຍະພິຈາລະນາ ແລະ ການລະເມີດນັ້ນໄດ້ເກີດຂຶ້ນ ຫຼັງຈາກການພິມເຜີຍແຜ່ຄຳຮ້ອງຂໍຮັບສິດທິບັດ ຫຼື ຖ້າຜູ້ລະເມີດໄດ້ຮັບແຈ້ງການ ກ່ຽວກັບຄຳຮ້ອງຂໍຮັບສິດທິບັດ.

ສຳລັບເຈົ້າຂອງອະນຸສິດທິບັດ ມີສິດເຊັ່ນດຽວກັນກັບເຈົ້າຂອງສິດທິບັດ.

**ມາດຕາ 57 ສິດຂອງເຈົ້າຂອງແບບອຸດສາຫະກຳ**

ເຈົ້າຂອງແບບອຸດສາຫະກຳ ມີສິດປ້ອງກັນບຸກຄົນທີສາມ ບໍ່ໃຫ້ຜະລິດ, ຂາຍ ຫຼື ນຳເຂົ້າວັດຖຸ ທີ່ໃຊ້ແບບອຸດສາຫະກຳ ຫຼື ເປັນຮູບຊົງແບບອຸດສາຫະກຳ ຊຶ່ງເປັນການກ່າຍແບບ ຫຼື ການລອກຮຽນແບບຂອງແບບອຸດສາຫະກຳ ເພື່ອຈຸດປະສົງທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ.

ບົດບັນຍັດໃນຂໍ້ 3, ຂໍ້ 4 ແລະ ຂໍ້ 5 ຂອງມາດຕາ 56 ຂອງກົດໝາຍສະບັບນີ້ ຈະໄດ້ຮັບການປະຕິບັດເຊັ່ນດຽວກັນ ເຖິງວ່າການພິມເຜີຍແຜ່ຈະຖືກເລື່ອນອອກໄປກໍຕາມ ການຮ້ອງຟ້ອງຕໍ່ສານຈະບໍ່ເກີດຂຶ້ນ ເວັ້ນເສຍແຕ່ຂໍ້ມູນທີ່ກ່ຽວຂ້ອງ ໄດ້ຖືກແຈ້ງໃຫ້ຜູ້ຖືກຮ້ອງຟ້ອງຮູ້ກ່ອນໜ້ານີ້.

**ມາດຕາ 58 ສິດຂອງເຈົ້າຂອງເຄື່ອງໝາຍການຄ້າ**

ເຈົ້າຂອງເຄື່ອງໝາຍການຄ້າ ມີສິດ ດັ່ງນີ້:

1. ປ້ອງກັນບໍ່ໃຫ້ບຸກຄົນທີສາມ ນຳໃຊ້ເຄື່ອງໝາຍການຄ້າ, ເຄື່ອງໝາຍບໍລິການທີ່ຄືກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນກັບສິນຄ້າ ຫຼື ການບໍລິການ ຊຶ່ງຄືກັນ, ຄ້າຍຄືກັນ ຫຼື ກ່ຽວຂ້ອງກັນ ເຄື່ອງໝາຍການຄ້າ ຫຼື ເຄື່ອງໝາຍບໍລິການ ທີ່ຕົນໄດ້ຈົດທະບຽນແລ້ວ ຊຶ່ງການນຳໃຊ້ ອາດກໍ່ໃຫ້ເກີດຄວາມສັບສົນ. ການນຳໃຊ້ສັນຍາລັກທີ່ຄືກັນ ສຳລັບສິນຄ້າ ຫຼື ການບໍລິການທີ່ຄືກັນ ຈະຖືກສັນນິຖານວ່າ ເປັນການສ້າງຄວາມສັບສົນ;

2. ປ້ອງກັນບໍ່ໃຫ້ບຸກຄົນທີສາມ ຂາຍ ຫຼື ໂຄສະນາສິນຄ້າ ທີ່ຕິດເຄື່ອງໝາຍ ຫຼື ການນຳໃຊ້ເຄື່ອງໝາຍກັບການບໍລິການ ແລະ ການນຳເຂົ້າ ຫຼື ສົ່ງອອກສິນຄ້າທີ່ຕິດເຄື່ອງໝາຍດັ່ງກ່າວ;

3. ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍ ຈາກການລະເມີດຂອງຜູ້ອື່ນ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍ ຈາກຄວາມເສຍຫາຍ ທີ່ຜູ້ອື່ນໄດ້ກໍ່ຂຶ້ນ.

ສິດ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ ຕ້ອງບໍ່ສ້າງຄວາມເສຍຫາຍ ຕໍ່ສິດທີ່ມີກ່ອນໜ້ານີ້.

ສິດທີ່ໄດ້ກຳນົດໄວ້ເທິງນີ້ ຈະນຳມາປະຕິບັດເຊັ່ນດຽວກັນ ຕໍ່ເຄື່ອງໝາຍທີ່ມີຊື່ສຽງ ແລະ ຊື່ການຄ້າເຖິງວ່າຈະໄດ້ຈົດທະບຽນ ຫຼື ບໍ່ກໍຕາມ.

**ມາດຕາ 59 ສິດຂອງເຈົ້າຂອງແບບຜັງວົງຈອນລວມ**

ເຈົ້າຂອງແບບຜັງວົງຈອນລວມ ມີສິດປ້ອງກັນຜູ້ອື່ນ ທີ່ບໍ່ໄດ້ຮັບອະນຸຍາດ ດັ່ງນີ້:

1. ຜະລິດຊ້ຳ ແບບຜັງວົງຈອນລວມທັງໝົດ ເຖິງວ່າຈະບັນຈຸໄວ້ ໃນວົງຈອນລວມ ຫຼື ຢ່າງອື່ນກໍຕາມ;

2. ຜະລິດຊ້ຳວົງຈອນລວມ ສ່ວນໃດ ສ່ວນໜຶ່ງ ເຖິງວ່າຈະບັນຈຸ ໄວ້ໃນວົງຈອນລວມ ຫຼື ຢ່າງອື່ນກໍຕາມ ຍົກເວັ້ນການຜະລິດຊ້ຳສ່ວນໃດ ສ່ວນໜຶ່ງ ທີ່ບໍ່ຈຳເປັນຈະໃຫ້ຖືກຕ້ອງ ຕາມເງື່ອນໄຂຂອງຕົ້ນສະບັບ ທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 17 ຂອງກົດໝາຍສະບັບນີ້;

3. ນຳເຂົ້າ, ຂາຍ ຫຼື ຈຳໜ່າຍ ແບບຜັງ ທີ່ໄດ້ຮັບການປົກປ້ອງ ຫຼື ວົງຈອນລວມ ຊຶ່ງລວມເຂົ້າກັນຢູ່ໃນແບບຜັງ ທີ່ໄດ້ຮັບການປົກປ້ອງ ເພື່ອຈຸດປະສົງທາງການຄ້າ;

4. ນຳເຂົ້າ, ຂາຍ ຫຼື ຈຳໜ່າຍ ຊິ້ນສ່ວນທີ່ລວມເຂົ້າກັນ ຫຼື ວົງຈອນລວມ ຊຶ່ງລວມເຂົ້າກັນໃນແບບຜັງ ທີ່ໄດ້ຮັບການປົກປ້ອງ ເພື່ອຈຸດປະສົງທາງການຄ້າ ເມື່ອໃດທີ່ວົງຈອນລວມ ຍັງບັນຈຸຜັງວົງຈອນລວມທີ່ຖືກຜະລິດຊ້ຳຢ່າງຜິດກົດໝາຍ.

ການດຳເນີນການໃດໜຶ່ງ ກ່ຽວກັບວົງຈອນລວມ ທີ່ລວມເຂົ້າກັບແບບຜັງ ທີ່ຜະລິດຊ້ຳຢ່າງຜິດກົດໝາຍ ຫຼື ຊິ້ນສ່ວນໃດໜຶ່ງ ທີ່ລວມເຂົ້າກັບວົງຈອນລວມ ຊຶ່ງຜູ້ດຳເນີນການ ຫຼື ຜູ້ສັ່ງໃຫ້ດຳເນີນການດັ່ງກ່າວ ບໍ່ຮູ້ ແລະ ບໍ່ມີຄວາມສາມາດພຽງພໍທີ່ຈະຮູ້ ໃນເວລາໄດ້ຮັບວົງຈອນລວມ ຫຼື ຊິ້ນສ່ວນດັ່ງກ່າວ ທີ່ລວມເຂົ້າກັບວົງຈອນລວມນັ້ນ ຊຶ່ງລວມເຂົ້າກັບແບບຜັງທີ່ໄດ້ຜະລິດຊ້ຳຢ່າງຜິດກົດໝາຍ, ຖ້າວ່າພາຍຫຼັງໄລຍະທີ່ບຸກຄົນນັ້ນໄດ້ຮັບແຈ້ງວ່າແບບຜັງທີ່ໄດ້ຜະລິດຊ້ຳນັ້ນ ຜິດກົດໝາຍ, ບຸກຄົນນັ້ນ ອາດມີການກະທຳໃດໜຶ່ງ ທີ່ກ່ຽວຂ້ອງກັບສິນຄ້າ ທີ່ຢູ່ໃນການຄອບຄອງຂອງຕົນ ຫຼື ສິນຄ້າທີ່ໄດ້ສັ່ງໄວ້ແລ້ວ ກ່ອນໜ້ານັ້ນ ຈະບໍ່ຖືວ່າເປັນການລະເມີດກົດໝາຍ, ແຕ່ຜູ້ກ່ຽວຕ້ອງຮັບຜິດຊອບຈ່າຍຄ່າພາກຫຼວງຢ່າງສົມເຫດສົມຜົນ ໃຫ້ແກ່ເຈົ້າຂອງສິດໃນມູນຄ່າທີ່ໄດ້ຕົກລົງ ຕາມການເຈລະຈາກັນ ເພື່ອຂໍໃບອະນຸຍາດນຳໃຊ້ແບບຜັງດັ່ງກ່າວ.

ການຜະລິດຊ້ຳ ແບບຜັງວົງຈອນລວມ ເພື່ອຈຸດປະສົງສຳລັບການປະເມີນຜົນ, ການວິເຄາະ, ການຄົ້ນຄວ້າ ຫຼື ການສິດສອນສ່ວນຕົວນັ້ນ ຈະບໍ່ຖືວ່າເປັນການລະເມີດກົດໝາຍ.

ເຈົ້າຂອງສິດ ຈະບໍ່ມີສິດ ກ່ຽວກັບແບບຜັງຕົ້ນສະບັບ ທີ່ຄືກັນ ຊຶ່ງບຸກຄົນທີສາມໄດ້ສ້າງຂຶ້ນ ຢ່າງເປັນເອກະລາດແລ້ວ.

**ມາດຕາ ໖໐ (ປັບປຸງ) ສິດຂອງເຈົ້າຂອງທະບຽນຖິ່ນກຳເນີດ**

ເຈົ້າຂອງທະບຽນຖິ່ນກຳເນີດ ມີສິດ ດັ່ງນີ້:

1. ປ້ອງກັນບໍ່ໃຫ້ຜູ້ອື່ນ ນຳໃຊ້ຖິ່ນກຳເນີດ ຕໍ່ສິນຄ້າ ຫຼື ນຳເອົາຖິ່ນກຳເນີດເຂົ້າໃນເຄື່ອງໝາຍການຄ້າຂອງຕົນ ແລະ ປ້ອງກັນບໍ່ໃຫ້ຜູ້ອື່ນ ຂາຍ, ໂຄສະນາ, ນຳເຂົ້າ ຫຼື ສົ່ງອອກ ສິນຄ້າ ທີ່ນຳໃຊ້ຖິ່ນກຳເນີດ ຫຼື ນຳເອົາຖິ່ນກຳເນີດ ເຂົ້າໃນເຄື່ອງໝາຍການຄ້າດັ່ງກ່າວ;

2. ຄັດຄ້ານການນຳໃຊ້ຖິ່ນກຳເນີດໃນຂໍ້ 1 ເທິງນີ້ ທີ່ກ່ຽວຂ້ອງກັບ ເຫຼົ້າແວງ ຫຼື ເຫຼົ້າຂາວ ເຖິງວ່າການແປພາສາ ຫຼື ການນຳເອົາຄຳສັບ ເຊັ່ນ ປະເພດ, ຊະນິດ, ແບບທີ່ຮຽນແບບ ຫຼື ທີ່ຄ້າຍຄືກັບນີ້ມານຳໃຊ້ກໍຕາມ;

3. ປົກປ້ອງຖິ່ນກຳເນີດ ເພື່ອຕ້ານກັບການບົ່ງບອກຖິ່ນກຳເນີດ ຊຶ່ງມາຈາກດິນແດນ, ຂົງເຂດ ຫຼື ທ້ອງຖິ່ນດັ່ງກ່າວແທ້ ແຕ່ເຮັດໃຫ້ສາທາລະນະຊົນເຂົ້າໃຈຜິດວ່າເປັນສິນຄ້າທີ່ມາຈາກດິນແດນອື່ນ;

4. ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍ ຈາກການລະເມີດຂອງຜູ້ອື່ນ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍຈາກຄວາມເສຍຫາຍ ທີ່ຜູ້ອື່ນໄດ້ກໍ່ຂຶ້ນ.

ມີແຕ່ຜູ້ຜະລິດ ທີ່ດໍາເນີນທຸລະກິດຢູ່ໃນເຂດພູມສາດ ທີ່ຖືກກໍານົດໃຫ້ເປັນຖິ່ນກໍາເນີດເທົ່ານັ້ນ ຈຶ່ງສາມາດນໍາໃຊ້ຖິ່ນກໍາເນີດ ທີ່ໄດ້ຈົດທະບຽນ ຕໍ່ ຫຼື ກ່ຽວຂ້ອງກັບສິນຄ້າ ທີ່ພົວພັນເຖິງຖິ່ນກໍາເນີດ.

ການກະທໍາໃດໜຶ່ງ ທີ່ເປັນການລະເມີດສິດ ຕາມທີ່ໄດ້ກໍານົດໄວ້ໃນຂໍ້ 1 ຫຼື ຂໍ້ 2 ຂອງມາດຕານີ້ ລວມທັງການນໍາໃຊ້ທຸກພາຫະນະເພື່ອກໍານົດ ຫຼື ນໍາສະເໜີສິນຄ້າ ທີ່ບົ່ງບອກ ຫຼື ແນະນໍາແຫຼ່ງທີ່ມາຂອງສິນຄ້າ ຊຶ່ງບໍ່ແມ່ນຖິ່ນກໍາເນີດທີ່ແທ້ຈິງ ແລະ ເຮັດໃຫ້ສາທາລະນະຊົນຫຼົງເຊື່ອວ່າ ມາຈາກຖິ່ນກໍາເນີດນັ້ນ ກໍຈະຖືວ່າເປັນການແຂ່ງຂັນທີ່ບໍ່ເປັນທໍາ.

ສິດທີ່ໄດ້ກໍານົດໄວ້ໃນຂໍ້ 1 ແລະ ຂໍ້ 2 ຂອງມາດຕານີ້ ຈະປະຕິບັດຕໍ່ການບົ່ງບອກທີ່ມາຂອງສິນຄ້າ ທີ່ຄ້າຍຄື ຫຼື ອ່ານອອກສຽງຄືກັນ ກັບຖິ່ນກໍາເນີດທີ່ໄດ້ຮັບການປົກປ້ອງ ຊຶ່ງພາໃຫ້ເຂົ້າໃຈຜິດ.

## ມາດຕາ 61 ສິດຂອງເຈົ້າຂອງຄວາມລັບທາງການຄ້າ

ເຈົ້າຂອງຄວາມລັບທາງການຄ້າ ມີສິດ ດັ່ງນີ້:

1. ປ້ອງກັນບໍ່ໃຫ້ຜູ້ອື່ນ ເປີດເຜີຍ, ຄອບຄອງ ຫຼື ນໍາໃຊ້ ຂໍ້ມູນຄວາມລັບທາງການຄ້າ ທີ່ຢູ່ໃນການຄວບຄຸມ ກວດກາ ຂອງຕົນຢ່າງຖືກຕ້ອງ ແລະ ທີ່ມີລັກສະນະຂັດກັບ ພຶດຕິກໍາທາງການຄ້າທີ່ສຸດຈະລິດ, ຍົກເວັ້ນ:

1.1. ການຄົ້ນພົບຂໍ້ມູນດ້ວຍວິທີວິສະວະກໍາຢ້ອນກັບ (reverse engineering), ການທົດສອບໃນຫ້ອງທົດລອງ ຫຼື ການວິເຄາະ ຫຼື ວິທີການທີ່ຄ້າຍຄືກັນ;

1.2. ການຄອບຄອງຂໍ້ມູນ ໂດຍປາສະຈາກພັນທະ ໃນການຮັກສາຄວາມລັບ ຫຼື ດ້ວຍການໄວ້ເນື້ອເຊື່ອໃຈ.

2. ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍຈາກການລະເມີດຂອງຜູ້ອື່ນ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍ ຈາກຄວາມເສຍຫາຍ ທີ່ຜູ້ອື່ນໄດ້ກໍ່ຂຶ້ນ;

3. ບໍ່ອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລັກ ຫຼື ບັກຍອກຄວາມລັບທາງການຄ້າ;

4. ເປີດເຜີຍ, ຖອດຖອນ ຫຼື ນໍາໃຊ້ ຄວາມລັບທາງການຄ້າ ຫຼື ມອບສິດໃຫ້ຜູ້ອື່ນ ເປີດເຜີຍ, ຖອດຖອນ ຫຼື ນໍາໃຊ້ ໂດຍອາດກໍານົດເນື້ອໃນ ແລະ ເງື່ອນໄຂຕ່າງໆ ເພື່ອຮັກສາຄວາມລັບ;

5. ຄວບຄຸມ ກວດກາ ບຸກຄົນ ທີ່ຮູ້ຄວາມລັບທາງການຄ້າ ຈາກການຈ້າງງານ ຫຼື ສັນຍາ ຫຼື ຂໍ້ຕົກລົງອື່ນ ຊຶ່ງມີພັນທະຮັກສາຄວາມລັບດັ່ງກ່າວ ຈົນກວ່າຈະມີການເປີດເຜີຍ ເຖິງວ່າການຈ້າງງານ ຫຼື ສັນຍາ ຫຼື ຂໍ້ຕົກລົງໄດ້ສິ້ນສຸດລົງກ່ອນກໍຕາມ.

ຄວາມລັບທາງການຄ້າ ບໍ່ຈໍາເປັນຕ້ອງຈົດທະບຽນ.

## ມາດຕາ 62 ການປົກປ້ອງການທົດລອງ ຫຼື ຂໍ້ມູນອື່ນ

ໃນກໍລະນີ ມີການອະນຸຍາດດ້ານການຕະຫຼາດ ກ່ຽວກັບຜະລິດຕະພັນການຢາ ຫຼື ສານເຄມີ ກະສິກໍາ ທີ່ນໍາໃຊ້ສານເຄມີໃໝ່ ເປັນເງື່ອນໄຂກ່ຽວກັບການສະໜອງຂໍ້ມູນການທົດລອງ ຫຼື ຂໍ້ມູນອື່ນ ທີ່ບໍ່ໄດ້ຖືກເປີດເຜີຍ ແລະ ໄດ້ມາດ້ວຍການໃຊ້ຄວາມພະຍາຍາມຢ່າງຫຼວງຫຼາຍ ຊຶ່ງຈະຕ້ອງຖືກປົກປ້ອງຕໍ່ການນໍາໃຊ້ທາງການຄ້າທີ່ບໍ່ເປັນທໍາ ແລະ ຕໍ່ການເປີດເຜີຍ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງຂໍ້ມູນດັ່ງກ່າວ. ເຖິງຢ່າງໃດກໍຕາມ ຂໍ້ມູນເຫຼົ່ານັ້ນ ອາດຈະຖືກເປີດເຜີຍ ເພື່ອປົກປ້ອງສາທາລະນະຊົນເທົ່າທີ່ຈໍາເປັນ. ບຸກຄົນທີ່ບໍ່ແມ່ນຜູ້ສະໜອງຂໍ້ມູນ ບໍ່ມີສິດນໍາໃຊ້ຂໍ້ມູນດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດ ໃນການຂໍອະນຸຍາດຜະລິດຕະພັນຂອງຕົນ ຕະຫຼອດໄລຍະ ຫ້າປີ ນັບແຕ່ວັນທີ ທີ່ ສປປ ລາວ ໄດ້ອອກໃບອະນຸຍາດ ໃຫ້ແກ່ບຸກຄົນທີ່ສ້າງຂໍ້ມູນນັ້ນ ເພື່ອນໍາຜະລິດຕະພັນອອກສູ່ຕະຫຼາດ.

ການກະທຳທີ່ເປັນການລະເມີດມາດຕານີ້ ຈະຖືວ່າເປັນການແຂ່ງຂັນທີ່ບໍ່ເປັນທຳ. ເຈົ້າຂອງຂໍ້ມູນທີ່ກຳນົດໄວ້ໃນມາດຕານີ້ ມີສິດນຳໃຊ້ມາດຕະການຕ່າງໆ ເຊັ່ນ ຮ້ອງຟ້ອງຕໍ່ສານ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນການແຂ່ງຂັນທີ່ບໍ່ເປັນທຳ ຫຼື ດຳເນີນການອື່ນໆ ຊຶ່ງອາດຈະເກີດການແຂ່ງຂັນທີ່ບໍ່ເປັນທຳ, ເວັ້ນເສຍແຕ່ກົດໝາຍ ໄດ້ກຳນົດໄວ້ເປັນຢ່າງອື່ນ.

**ມາດຕາ 63 ພັນທະ ຂອງເຈົ້າຂອງຊັບສິນອຸດສາຫະກຳ**

ເຈົ້າຂອງຊັບສິນອຸດສາຫະກຳ ມີພັນທະ ດັ່ງນີ້:

1. ເປັນເຈົ້າການໃນການປົກປ້ອງ ແລະ ຄຸ້ມຄອງ ສິດຂອງຕົນ ດ້ວຍການຕິດຕາມກວດກາ ການນຳໃຊ້ຊັບສິນອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. ເປັນເຈົ້າການຊຸກຍູ້ ແລະ ສົ່ງເສີມ ໃຫ້ສັງຄົມໄດ້ນຳໃຊ້ຊັບສິນອຸດສາຫະກຳຂອງຕົນ ບົນພື້ນຖານທຸກຝ່າຍຕ່າງໄດ້ຮັບຜົນປະໂຫຍດ;

3. ເປັນເຈົ້າການ ໃນການແຈ້ງຂໍ້ມູນ ກ່ຽວກັບການລະເມີດຊັບສິນອຸດສາຫະກຳຂອງຕົນ ໃຫ້ແກ່ອົງການຈັດຕັ້ງລັດ ທີ່ມີໜ້າທີ່ຮັບຜິດຊອບຕໍ່ວຽກງານດັ່ງກ່າວ;

4. ເສຍພັນທະໃຫ້ລັດ ທີ່ໄດ້ມາຈາກການສະແຫວງຫາຜົນປະໂຫຍດ, ການໃຫ້ເຊົ່າ, ການໂອນ ຫຼື ການສືບທອດຊັບສິນອຸດສາຫະກຳ ຫຼື ການທີ່ໄດ້ຮັບຜົນປະໂຫຍດອື່ນ ຕາມກົດໝາຍ;

5. ເປັນເຈົ້າການປະສານງານ ໃນການແກ້ໄຂການລະເມີດຊັບສິນອຸດສາຫະກຳຂອງຕົນ.

## ໝວດທີ 7
## ການຈຳກັດ ຕໍ່ສິດທາງດ້ານຊັບສິນອຸດສາຫະກຳ

**ມາດຕາ 64 ການນຳໃຊ້ ສິດທິບັດ ຫຼື ອະນຸສິດທິບັດ ໂດຍບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ສາມາດອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຜະລິດ, ນຳໃຊ້ ຫຼື ນຳເຂົ້າ ການປະດິດສ້າງ ຫຼື ສິ່ງປະດິດ ທີ່ໄດ້ຮັບສິດທິບັດ ຫຼື ອະນຸສິດທິບັດ ຕາມຄຳສັ່ງຂອງນາຍົກລັດຖະມົນຕີ ໂດຍບໍ່ຈຳເປັນຕ້ອງໄດ້ຮັບອະນຸຍາດລ່ວງໜ້າ ຈາກເຈົ້າຂອງ ສິດທິບັດ ຫຼື ອະນຸສິດທິບັດ ບົນເງື່ອນໄຂ:

1. ການອະນຸຍາດ ມີກໍລະນີ ດັ່ງນີ້:

1.1. ໃນສະພາບການສຸກເສີນຂອງຊາດ ຫຼື ໃນສະພາວະສຸກເສີນ ທີ່ຮ້າຍແຮງ ແລະ ຮີບດ່ວນທີ່ສຸດ ເຊັ່ນ ໄພພິບັດ, ໂລກລະບາດ ຫຼື ສົງຄາມ;

1.2. ເພື່ອໃຫ້ລັດຖະບານ ນຳໃຊ້ໃນທາງທີ່ບໍ່ແມ່ນການຄ້າ ເພື່ອຜົນປະໂຫຍດຂອງ ສາທາລະນະຊົນໂດຍສະເພາະ ກ່ຽວກັບການປ້ອງກັນຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ອາຫານ ຫຼື ສາທາລະນະສຸກ ຫຼື ເພື່ອຄວາມຕ້ອງການອັນຈຳເປັນຮີບດ່ວນອື່ນ;

1.3. ເພື່ອແກ້ໄຂພຶດຕິກຳຕ້ານການແຂ່ງຂັນ ພາຍຫຼັງການຕັດສິນຂອງສານ ແລະ ສານ ເຫັນວ່າການສະແຫວງຫາຜົນປະໂຫຍດ ຈາກການປະດິດສ້າງ ຫຼື ສິ່ງປະດິດ ທີ່ໄດ້ຮັບການປົກປ້ອງນັ້ນ ແມ່ນມີຄວາມຈຳເປັນເພື່ອແກ້ໄຂພຶດຕິກຳຕ້ານການແຂ່ງຂັນ;

1.4. ເພື່ອຕອບສະໜອງຄວາມຕ້ອງການຢ່າງພຽງພໍ ໃນການນຳໃຊ້ການປະດິດສ້າງ ຫຼື ສິ່ງປະດິດ ຢູ່ ສປປ ລາວ ໃນກໍລະນີ ທີ່ເຈົ້າຂອງບໍ່ສາມາດຕອບສະໜອງໄດ້.

2. ການອະນຸຍາດນຳໃຊ້ແຕ່ລະຄັ້ງ ຕ້ອງພິຈາລະນາຕາມຄວາມເໝາະສົມສະເພາະຂອບເຂດ ແລະ ໄລຍະເວລາ ການນຳໃຊ້ດັ່ງກາວ ຈະຕ້ອງຈຳກັດຢູ່ໃນຈຸດປະສົງ ທີ່ໄດ້ຮັບອະນຸຍາດເທົ່ານັ້ນ. ເຈົ້າຂອງສິດ ມີສິດຄັດຄ້ານການອະນຸຍາດດັ່ງກ່າວ ແລະ ສະເໜີ ເງື່ອນໄຂທາງເລືອກ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການພາຍໃນ ສຳລັບການປະຕິດສ້າງ ຫຼື ສິ່ງປະດິດ;

3. ການນຳໃຊ້ດັ່ງກ່າວ ບໍ່ເປັນສິດຜູກຂາດ ແລະ ບໍ່ສາມາດໂອນໄດ້, ຍົກເວັ້ນແຕ່ໃນກຸ່ມວິສາຫະກິດຂອງຕົນ ຫຼື ມີເຈດຕະນາທີ່ດີໃນການນຳໃຊ້;

4. ການອະນຸຍາດ ຕ້ອງກຳນົດໃຫ້ເຈົ້າຂອງສິດໄດ້ຮັບຄ່າຕອບແທນຢ່າງພຽງພໍ ຕາມແຕ່ລະກໍລະນີ ໂດຍພິຈາລະນາຕາມມູນຄ່າເສດຖະກິດຂອງການອະນຸຍາດນັ້ນ. ຄຳສັ່ງອະນຸຍາດ ຕ້ອງກຳນົດຄ່າທົດແທນ ຫຼື ມີວິທີການກຳນົດມູນຄ່າດັ່ງກ່າວ ແລະ ເງື່ອນໄຂ ໃນການຊຳລະ. ເຈົ້າຂອງສິດ ມີສິດສະເໜີເງື່ອນໄຂ ສຳລັບຄ່າຕອບແທນ, ກຳນົດວິທີການໃຫ້ຄ່າຕອບແທນ ແລະ ເງື່ອນໄຂສຳລັບການຊຳລະ. ເພື່ອແກ້ໄຂພຶດຕິກຳໃນການຕ້ານການແຂ່ງຂັນ ໃຫ້ຄຳນຶງເຖິງການກຳນົດມູນຄ່າຕອບແທນ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1.3 ຂອງມາດຕານີ້;

5. ເຈົ້າຂອງສິດ ມີສິດສະເໜີຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ພິຈາລະນາຄືນ ໃໝ່ກ່ຽວກັບຄ່າຕອບແທນ ທີ່ບໍ່ສົມເຫດສົມຜົນ ຫຼື ກໍລະນີທີ່ບໍ່ສົມຄວນ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນທີ່ໄດ້ຮັບແຈ້ງການເປັນຕົ້ນໄປ;

6. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງອອກແຈ້ງການໃຫ້ເຈົ້າຂອງສິດ ໂດຍທັນທີຕໍ່ທຸກຄຳສັ່ງກ່ຽວກັບການອະນຸຍາດ ແລະ ຄ່າຕອບແທນທີ່ຕ້ອງຊຳລະ ໃຫ້ເຈົ້າຂອງສິດ;

7. ສຳລັບ ການອະນຸຍາດພາຍໃຕ້ຂໍ້ 1.1, 1.2 ຫຼື 1.4 ຂອງມາດຕານີ້:

7.1. ທຸກການນຳໃຊ້ດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດ ສຳລັບການສະໜອງສິນຄ້າ ທີ່ສຳຄັນ ສູ່ຕະຫຼາດພາຍໃນ ຂອງ ສປປ ລາວ;

7.2. ການນຳໃຊ້ດັ່ງກ່າວ ຈະຖືວ່າໄດ້ຮັບອະນຸຍາດ ຖ້າວ່າກ່ອນການນຳໃຊ້ນັ້ນ ຜູ້ສະເໜີນຳໃຊ້ ໄດ້ພະຍາຍາມຂໍອະນຸຍາດຈາກເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ບົນພື້ນຖານການກຳນົດ ແລະ ເງື່ອນໄຂທາງການຄ້າ ທີ່ສົມເຫດສົມຜົນ ແຕ່ຄວາມພະຍາຍາມຂໍອະນຸຍາດດັ່ງກ່າວ ບໍ່ສຳເລັດຜົນ ໃນໄລຍະເວລາທີ່ຄວນ;

7.3. ເງື່ອນໄຂຂອງຂໍ້ 7.2 ຂອງມາດຕານີ້ ອາດຖືກຍົກເວັ້ນ ໃນກໍລະນີ ທີ່ມີສະພາບການສຸກເສີນຂອງຊາດ ຫຼື ສະພາວະສຸກເສີນທີ່ຮ້າຍແຮງ ແລະ ຮີບດ່ວນທີ່ສຸດ ຊຶ່ງໃນກໍລະນີນີ້ ຕ້ອງໄດ້ແຈ້ງໃຫ້ເຈົ້າຂອງສິດຊາບໂດຍໄວເທົ່າທີ່ຈະໄວໄດ້;

7.4. ເງື່ອນໄຂຂອງຂໍ້ 7.2 ຂອງມາດຕານີ້ ອາດຖືກຍົກເວັ້ນ ໃນກໍລະນີການນຳໃຊ້ ເພື່ອສາທາລະນະຊົນ ໂດຍບໍ່ແມ່ນທາງການຄ້າ. ໃນກໍລະນີ ລັດຖະບານ ຫຼື ຜູ້ຮັບເໝົາ ຮູ້ໂດຍທີ່ບໍ່ໄດ້ຄົ້ນຫາ ຫຼື ມີຫຼັກຖານທີ່ຈະຮູ້ໄດ້ວ່າ ສິດທິບັດ ຫຼື ອະນຸສິດທິບັດ ທີ່ຍັງມີຜົນໃຊ້ໄດ້ນັ້ນ ຖືກນຳໃຊ້ ຫຼື ຈະຖືກນຳໃຊ້ໂດຍລັດຖະບານ ຫຼື ເພື່ອລັດຖະບານ ຊຶ່ງຕ້ອງໄດ້ແຈ້ງໃຫ້ເຈົ້າຂອງສິດຊາບໃນທັນໃດ;

8. ຄວາມສັກສິດທາງດ້ານກົດໝາຍຂອງທຸກຂໍ້ຕົກລົງ ກ່ຽວກັບການອະນຸຍາດໃຫ້ນຳໃຊ້ ແລະ ຄ່າຕອບແທນ ທີ່ໄດ້ກຳນົດໄວ້ນັ້ນ ເມື່ອມີຄວາມບໍ່ພໍໃຈຕໍ່ຂໍ້ຕົກລົງດັ່ງກ່າວ ເຈົ້າຂອງສິດ ມີສິດສະເໜີຄັດຄ້ານຕໍ່ອົງການຍຸຕິທຳ ພາຍໃນເວລາ ຫົກສິບວັນ ຫຼັງຈາກໄດ້ຮັບແຈ້ງການເປັນຕົ້ນໄປ;

9. ໃນກໍລະນີ ທີ່ບຸກຄົນທີສາມ ຮ້ອງຂໍອະນຸຍາດ ໂດຍອີງຕາມຂໍ້ 1.4 ຂອງມາດຕານີ້ ການຮ້ອງຂໍດັ່ງກ່າວ ຍັງຕ້ອງມີເງື່ອນໄຂ ດັ່ງນີ້:

9.1. ການຮ້ອງຂໍ ບໍ່ໃຫ້ຍື່ນກ່ອນ ສີ່ປີ ນັບແຕ່ວັນທີ່ທີ່ຍື່ນຄຳຮ້ອງຂໍຮັບສິດທິບັດ ຫຼື ບໍ່ໃຫ້ຍື່ນກ່ອນສາມປີ ຫຼັງຈາກວັນທີ່ໄດ້ຮັບສິດທິບັດ ແລ້ວແຕ່ກໍລະນີ ໃນໄລຍະທີ່ຍັງບໍ່ທັນໝົດອາຍຸ;

9.2. ຜູ້ຮ້ອງຂໍດັ່ງກ່າວ ຕ້ອງສະເໜີຫຼັກຖານ ກ່ຽວກັບຄວາມຕ້ອງການ ການປະດິດສ້າງ ຫຼື ສິ່ງປະດິດ ທີ່ໄດ້ຮັບສິດທິບັດ ຫຼື ອະນຸສິດທິບັດ ບໍ່ພຽງພໍ ຢູ່ ສປປ ລາວ ບໍ່ວ່າ ການຜະລິດພາຍໃນ ຫຼື ການນໍາເຂົ້າ ແລະ ຜູ້ຮ້ອງຂໍ ມີຄວາມສາມາດສະໜອງການປະດິດສ້າງ ຫຼື ສິ່ງປະດິດ ຕາມເງື່ອນໄຂທີ່ສົມເຫດສົມຜົນ ຖ້າຄໍາຮ້ອງຂໍການອະນຸຍາດ ຫາກໄດ້ຮັບອະນຸມັດ. ຫຼັກຖານດັ່ງກ່າວ ຕ້ອງນໍາມາພິຈາລະນາເຖິງຄວາມຈໍາເປັນ ໃນການຈ່າຍຄ່າຕອບແທນ ໃຫ້ແກ່ເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ.

9.3. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງແຈ້ງໃຫ້ເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ກ່ຽວກັບການຮ້ອງຂໍນັ້ນ ພາຍໃນເວລາ ເກົ້າສິບວັນ ແລະ ຕ້ອງໃຫ້ໂອກາດເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ສະເໜີຫຼັກຖານ (ຖ້າຫາກມີ) ເພື່ອໃຫ້ເຫດຜົນທີ່ຮອບຄອບ ເຖິງຄວາມບໍ່ສາມາດຕອບສະໜອງໃນການນໍາໃຊ້ ການປະດິດສ້າງ ຫຼື ສິ່ງປະດິດ;

9.4. ການອະນຸຍາດດັ່ງກ່າວ ຈະຖືກປະຕິເສດ ຖ້າວ່າເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ໃຫ້ເຫດຜົນທີ່ຮອບຄອບ ເຖິງຄວາມສາມາດຕອບສະໜອງ ໃນການນໍາໃຊ້ການປະດິດສ້າງ ຫຼື ສິ່ງປະດິດຂອງຕົນ ຢູ່ ສປປ ລາວ;

10. ໃນກໍລະນີໃດກໍຕາມ ການອະນຸຍາດດັ່ງກ່າວ ຕ້ອງບໍ່ຕັດສິດ ຂອງເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ກ່ຽວກັບສິດເພື່ອສືບຕໍ່ສະແຫວງຫາຜົນປະໂຫຍດ ຈາກການປະດິດສ້າງ ຫຼື ສິ່ງປະດິດຂອງຕົນ;

11. ການອະນຸຍາດດັ່ງກ່າວ ສາມາດດັດແກ້ໄດ້ ໂດຍພິຈາລະນາເຖິງສະພາບການສຸກເສີນ ທີ່ຍັງມີຢູ່ ຫຼື ສະພາບການສຸກເສີນອັນໃໝ່ທີ່ເກີດຂຶ້ນ ບົນເງື່ອນໄຂບົດບັນຍັດ ແລະ ການປົກປ້ອງທີ່ໄດ້ກໍານົດໄວ້;

12. ການອະນຸຍາດນໍາໃຊ້ດັ່ງກ່າວ ຕ້ອງສິ້ນສຸດລົງ ເມື່ອເວລາທີ່ສະພາບການນັ້ນໄດ້ຢຸດເຊົາລົງ ແລະ ຈະບໍ່ເກີດຄືນອີກ ຫຼື ໃນກໍລະນີ ທີ່ຜູ້ໄດ້ຮັບອະນຸຍາດ ບໍ່ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ ໃນຄໍາສັ່ງໃຫ້ນໍາໃຊ້ການປະດິດສ້າງ ຫຼື ສິ່ງປະດິດບົນເງື່ອນໄຂການປົກປ້ອງຢ່າງພຽງພໍຕໍ່ຜົນປະໂຫຍດອັນຮອບຄອບ ຂອງຜູ້ທີ່ໄດ້ຮັບອະນຸຍາດ:

12.1. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດກວດຄືນ ຄວາມເປັນຈິງ ທີ່ເກີດຂຶ້ນຕາມການຮ້ອງຂໍຂອງເຈົ້າຂອງສິດ ຫຼື ພາກສ່ວນທີ່ກ່ຽວຂ້ອງອື່ນ ຂອງສະຖານະການ ຊຶ່ງເປັນພື້ນຖານໃຫ້ແກ່ການອະນຸຍາດດັ່ງກ່າວ;

12.2. ຖ້າເຫັນວ່າ ສະຖານະການທີ່ເປັນພື້ນຖານໃຫ້ແກ່ການອະນຸຍາດນັ້ນ ໄດ້ຢຸດເຊົາລົງ ແລະ ຈະເກີດຄືນອີກ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອາດຈະອອກຄໍາສັ່ງ ທີ່ສົມເຫດສົມຜົນ ເພື່ອປົກປ້ອງຜົນປະ ໂຫຍດອັນຮອບຄອບຂອງຜູ້ທີ່ໄດ້ຮັບອະນຸຍາດ;

12.3. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີສິດປະຕິເສດການສິ້ນສຸດ ການອະນຸຍາດ ເມື່ອເງື່ອນໄຂທີ່ເຮັດໃຫ້ເກີດການອະນຸຍາດດັ່ງກ່າວ ຫາກຈະກັບຄືນມາອີກ.

**ມາດຕາ 65 ການບໍ່ນໍາໃຊ້ເຄື່ອງໝາຍການຄ້າ**

ການບໍ່ນໍາໃຊ້ເຄື່ອງໝາຍການຄ້າ ມີກໍລະນີ ດັ່ງນີ້:

1. ເຄື່ອງໝາຍການຄ້າ ບໍ່ໄດ້ຖືກນໍາໃຊ້ຢ່າງຕໍ່ເນື່ອງ ພາຍໃນໄລຍະເວລາ ຫ້າປີ;
2. ເຄື່ອງໝາຍການຄ້າໄດ້ຖືກນໍາໃຊ້ ເປັນພຽງແຕ່ໃນນາມເທົ່ານັ້ນ ຫຼື ເຈົ້າຂອງໄດ້ນໍາໃຊ້ດ້ວຍຄວາມບໍ່ບໍລິສຸດໃຈ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຂໍຍົກເລີກ ຫຼື ລຶບລ້າງ ການຈົດທະບຽນເຄື່ອງໝາຍການຄ້າທີ່ບໍ່ໄດ້ນໍາໃຊ້. ໃນການຂໍຍົກເລີກ ຫຼື ລຶບລ້າງນັ້ນ ເຈົ້າ

ຂອງມີສິດສະແດງເຫດຜົນ ຊີ້ແຈງການບໍ່ໄດ້ນໍາໃຊ້ເຄື່ອງໝາຍດັ່ງກ່າວ. ເຫດສຸດວິໄສ ຈະຖືວ່າເປັນເຫດຜົນພຽງພໍ ສໍາລັບການບໍ່ໄດ້ນໍາໃຊ້ເຄື່ອງໝາຍນັ້ນ.

ເຄື່ອງໝາຍການຄ້າໃດໜຶ່ງ ຈະຖືວ່າຖືກນໍາໃຊ້ ກໍຕໍ່ເມື່ອຫາກຖືກນໍາໃຊ້ຕໍ່ ຫຼື ກ່ຽວຂ້ອງກັບສິນຄ້າ ແລະ ການບໍລິການ ທີ່ເຄື່ອງໝາຍການຄ້າດັ່ງກ່າວ ໄດ້ຖືກຈົດທະບຽນໄວ້ ໂດຍເຈົ້າຂອງ ຫຼື ຜູ້ອື່ນ ທີ່ໄດ້ຮັບອະນຸຍາດ ແລະ ຢູ່ພາຍໃຕ້ການຄວບຄຸມກວດກາ ຂອງເຈົ້າຂອງ.

**ມາດຕາ 66 ເງື່ອນໄຂແບບຜັງວົງຈອນລວມ**

ໃນກໍລະນີ ທີ່ໄດ້ນໍາໃຊ້ແບບຜັງວົງຈອນລວມ ເພື່ອຫາຜົນປະໂຫຍດທາງການຄ້າແລ້ວ ບໍ່ວ່າຢູ່ພາຍໃນ ຫຼື ນອກປະເທດ ຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມດັ່ງກ່າວ ຕ້ອງຍື່ນພາຍໃນເວລາ ສອງປີ ນັບແຕ່ວັນໄດ້ນໍາໃຊ້ແບບຜັງວົງຈອນລວມ ເພື່ອຫາຜົນປະໂຫຍດທາງການຄ້າ ຄັ້ງທໍາອິດ ຫຼື ນັບແຕ່ວັນປະດິດສ້າງ ເປັນຕົ້ນມາ. ໃນກໍລະນີໃດກໍຕາມ ໄລຍະເວລາແມ່ນບໍ່ໃຫ້ເກີນ ສິບຫ້າປີ ນັບແຕ່ວັນປະດິດສ້າງ.

**ມາດຕາ 67 (ປັບປຸງ) ການສະແຫວງຫາຜົນປະໂຫຍດຈາກຖິ່ນກໍາເນີດ**

ໃນກໍລະນີ ທີ່ເຈົ້າຂອງທະບຽນຖິ່ນກໍາເນີດ ບໍ່ສາມາດປະຕິບັດຕາມເງື່ອນໄຂຂອງການຈົດທະບຽນໄດ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດສະເໜີຕໍ່ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຂໍໂຈະການສະແຫວງຫາຜົນປະໂຫຍດ ຈາກການນໍາໃຊ້ຖິ່ນກໍາເນີດ ທີ່ໄດ້ຈົດທະບຽນ. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງແຈ້ງໃຫ້ເຈົ້າຂອງທະບຽນດັ່ງກ່າວ ປະຕິບັດຕາມເງື່ອນໄຂ ແລະ ຕາມເວລາທີ່ໄດ້ກໍານົດໄວ້, ຖ້າຫາກບໍ່ປະຕິບັດແລ້ວ ກໍຈະຖືກສັ່ງໂຈະການສະແຫວງຫາຜົນປະໂຫຍດຈາກການນໍາໃຊ້ຖິ່ນກໍາເນີດດັ່ງກ່າວ.

# ພາກທີ IV
# ພັນພືດໃໝ່
## ໝວດທີ 1
## ເງື່ອນໄຂຂອງພັນພືດໃໝ່

**ມາດຕາ 68 ປະເພດ ແລະ ຊະນິດ ຂອງພັນພືດ**

ປະເພດ ແລະ ຊະນິດຕ່າງໆ ຂອງພັນພືດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 69 (ປັບປຸງ) ເງື່ອນໄຂການຈົດທະບຽນພັນພືດໃໝ່**

ພັນພືດທີ່ຈະນໍາມາຈົດທະບຽນເປັນພັນພືດໃໝ່ ໃຫ້ມີເງື່ອນໄຂ ດັ່ງນີ້:

1. ຕ້ອງໃໝ່;
2. ຕ້ອງແຕກຕ່າງ;
3. ຕ້ອງສະໝໍ່າສະເໝີ;
4. ຕ້ອງຄົງຕົວ.

ນອກຈາກສີ່ເງື່ອນໄຂ ທີ່ໄດ້ກໍານົດໄວ້ເທິງນີ້ ການຈົດທະບຽນ ຍັງຕ້ອງໄດ້ພິຈາລະນາການກໍານົດຊື່ ຂອງພັນພືດໃໝ່ນັ້ນ.

**ມາດຕາ 70 (ປັບປຸງ) ຄວາມໃໝ່**

ພັນພືດຈະຖືວ່າໃໝ່ ຖ້າໃນເວລາຍື່ນຄຳຮ້ອງຂໍສິດ ຂອງນັກປະສົມພັນພືດນັ້ນ ສ່ວນຂະຫຍາຍພັນ ຫຼື ຜົນເກັບກ່ຽວ ຍັງບໍ່ໄດ້ຖືກວາງຂາຍ ຫຼື ແຈກຢາຍໃຫ້ຜູ້ອື່ນ ນຳໃຊ້ໂດຍນັກປະສົມພັນພືດ ຫຼື ດ້ວຍການເຫັນດີ ຂອງຜູ້ກ່ຽວ ໃນການສະແຫວງຫາຜົນປະໂຫຍດຈາກພັນພືດນັ້ນ ພາຍໃນເວລາ:

1. ໜຶ່ງປີລົງມາ ກ່ອນວັນຍື່ນຄຳຮ້ອງ ໃນດິນແດນ ຂອງ ສປປ ລາວ;

2. ສີ່ປີລົງມາ ກ່ອນວັນຍື່ນຄຳຮ້ອງ ຫຼື ຫົກປີລົງມາ ສຳລັບພືດຢືນຕົ້ນ ຫຼື ຕົ້ນໝາກອະງຸ່ນ ໃນດິນແດນ ຂອງປະເທດອື່ນ.

**ມາດຕາ 71 (ປັບປຸງ) ຄວາມແຕກຕ່າງ**

ພັນພືດ ຈະຕ້ອງແຕກຕ່າງທາງດ້ານຄຸນລັກສະນະໃໝ່ຢ່າງຈະແຈ້ງ ຈາກພັນພືດອື່ນ ຊຶ່ງເປັນທີ່ຮັບຮູ້ກັນທົ່ວໄປ ໃນເວລາຍື່ນຄຳຮ້ອງຂໍຈົດທະບຽນ.

ພັນພືດທີ່ໄດ້ຮັບການຈົດທະບຽນເປັນພັນພືດໃໝ່ ຢູ່ປະເທດໃດໜຶ່ງ ຈະຖືວ່າເປັນພັນພືດ ຊຶ່ງເປັນທີ່ຮັບຮູ້ກັນທົ່ວໄປ.

**ມາດຕາ 72 ຄວາມສະໝໍ່າສະເໝີ**

ພັນພືດ ທີ່ມີການປ່ຽນແປງນັ້ນ ອາດມາຈາກຮູບການສະເພາະຂອງການນຳມາຂະຫຍາຍພັນ ແຕ່ຕ້ອງມີຮູບຮ່າງສະໝໍ່າສະເໝີ ຢ່າງເຕັມສ່ວນຕະຫຼອດໄປ ໃນຄຸນລັກສະນະຕ່າງໆ ຂອງພັນພືດນັ້ນ.

**ມາດຕາ 73 ຄວາມຄົງທີ່**

ພັນພືດ ຈະຕ້ອງຄົງທີ່ ຖ້າຄຸນລັກສະນະຂອງພັນພືດນັ້ນ ຫາກບໍ່ມີການປ່ຽນແປງ ພາຍຫຼັງການຂະຫຍາຍພັນຄືນໃໝ່ ຫຼື ໃນຕອນທ້າຍ ຂອງແຕ່ລະຮອບວຽນ ໃນກໍລະນີທີ່ມີຮອບວຽນສະເພາະ ຂອງການຂະຫຍາຍພັນນັ້ນ.

**ມາດຕາ 74 (ປັບປຸງ) ການກຳນົດຊື່ຂອງພັນພືດໃໝ່**

ການກຳນົດຊື່ຂອງພັນພືດໃໝ່ ໃຫ້ປະຕິບັດ ດັ່ງນີ້:

1. ແຕ່ລະພັນພືດ ຕ້ອງໄດ້ມີການກຳນົດຊື່ ເພື່ອໃຫ້ກາຍເປັນຊື່ທົ່ວໄປຂອງພືດນັ້ນ, ສິດຈາກການຈົດທະບຽນຊື່ຂອງພັນພືດ ຕ້ອງບໍ່ແຕະຕ້ອງການນຳໃຊ້ຊື່ຢ່າງເສລີ ກ່ຽວກັບພັນພືດດັ່ງກ່າວ ເຖິງວ່າອາຍຸຂອງສິດຂອງນັກປະສົມພັນພືດຈະສິ້ນສຸດລົງແລ້ວ ກໍຕາມ;

2. ການກຳນົດຊື່ ຈະຕ້ອງຈຳແນກພັນພືດໄດ້, ຕ້ອງບໍ່ເຮັດໃຫ້ມີການເຂົ້າໃຈຜິດ ຫຼື ສ້າງຄວາມສັບສົນກ່ຽວກັບຄຸນລັກສະນະ, ຄຸນຄ່າ ຫຼື ເອກະລັກຂອງພັນພືດ ຫຼື ເອກະລັກຂອງນັກປະສົມພັນພືດ, ຈະຕ້ອງແຕກຕ່າງຈາກທຸກການກຳນົດຊື່ພັນພືດຊະນິດດຽວກັນ ຫຼື ຊະນິດໃກ້ຄຽງກັນ ທີ່ມີມາແລ້ວ ໃນດິນແດນ ຂອງ ສປປ ລາວ ຫຼື ຕ່າງປະເທດ;

3. ການກຳນົດຊື່ຂອງພັນພືດ ຈະຕ້ອງໄດ້ຈົດທະບຽນ ໃນເວລາດຽວກັນກັບການອອກສິດ ໃຫ້ນັກປະສົມພັນພືດ ໂດຍສອດຄ່ອງກັບເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບການ;

4. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ສະເໜີຂາຍ ຫຼື ວາງຈຳໜ່າຍ ສ່ວນຂະຫຍາຍພັນຂອງພັນພືດທີ່ໄດ້ຮັບການປົກປ້ອງ ໃນດິນແດນ ຂອງ ສປປ ລາວ ຕ້ອງນຳໃຊ້ການກຳນົດຊື່ ຂອງພັນພືດນັ້ນ ເຖິງວ່າອາຍຸການ

ຂອງສິດຂອງນັກປະດິດສ້າງນັ້ນ ຈະສິ້ນສຸດລົງແລ້ວກໍຕາມ, ເວັ້ນເສຍແຕ່ ສິດກ່ອນໜ້າໄດ້ເກີດຂຶ້ນກ່ອນການນໍາໃຊ້ຊື່ດັ່ງກ່າວ ຂອງມາດຕານີ້;

5. ເມື່ອພັນພືດໃດໜຶ່ງ ຖືກນໍາສະເໜີຂາຍ ຫຼື ວາງຈໍາໜ່າຍ ແມ່ນອະນຸຍາດ ໃຫ້ເອົາເຄື່ອງໝາຍການຄ້າ, ຊື່ການຄ້າ ຫຼື ສິ່ງທີ່ຊີ້ບອກທີ່ຄ້າຍຄື ປະກອບໃສ່ຊື່ພັນພືດ ທີ່ໄດ້ຈົດທະບຽນແລ້ວ ແຕ່ຊື່ນັ້ນຈະຕ້ອງເປັນສິ່ງທີ່ຮູ້ໄດ້ງ່າຍ.

## ໝວດທີ 2
## ການຈົດທະບຽນພັນພືດໃໝ່

### ມາດຕາ 75 ສິດຍື່ນຄໍາຮ້ອງຂໍຈົດທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຍື່ນຄໍາຮ້ອງຂໍຈົດທະບຽນ ມີ ດັ່ງນີ້:

1. ນັກປະດິດພັນພືດ ສາມາດຍື່ນຄໍາຮ້ອງຂໍສິດຕໍ່ພັນພືດ ທີ່ໄດ້ມາຈາກການປະດິດພັນ;

2. ໃນກໍລະນີ ມີສອງຄົນ ຫຼື ຫຼາຍກວ່ານັ້ນ ຮ່ວມກັນປະດິດພັນພືດ ບຸກຄົນດັ່ງກ່າວ ສາມາດຍື່ນຄໍາຮ້ອງຂໍສິດຮ່ວມກັນຕໍ່ພັນພືດ ທີ່ໄດ້ມາຈາກການປະດິດພັນນັ້ນ. ຖ້າຫາກບໍ່ມີການຕົກລົງກັນສະເພາະ ກ່ຽວກັບ ພູດການເປັນເຈົ້າຂອງ ໃຫ້ຖືວ່າພວກກ່ຽວເປັນເຈົ້າຂອງພັນພືດນັ້ນ ໃນພູດສະເໝີກັນ;

3. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ່າງປະເທດ ກໍມີສິດຍື່ນຄໍາຮ້ອງຂໍຈົດທະບຽນຄືກັນກັບຄົນລາວ ໃນດິນແດນ ຂອງ ສປປ ລາວ. ສໍາລັບຜູ້ທີ່ບໍ່ມີທີ່ຢູ່ອາໄສ ຫຼື ສະຖານ ທີ່ດໍາເນີນທຸລະກິດ ຢູ່ ສປປ ລາວ ນັ້ນ ໃຫ້ແຕ່ງຕັ້ງຕົວແທນຂອງຕົນ ຊຶ່ງມີທີ່ຢູ່ຖາວອນ ຢູ່ ສປປ ລາວ ດໍາເນີນການແທນ.

### ມາດຕາ 76 (ປັບປຸງ) ວັນບູລິມະສິດ

ການຮ້ອງຂໍເອົາວັນບູລິມະສິດ ມີ ດັ່ງນີ້:

1. ນັກປະດິດພັນພືດ ທີ່ໄດ້ຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ໃນປະເທດພາຄີໃດໜຶ່ງຂອງສົນທິສັນຍາສາກົນ ກ່ຽວກັບການປົກປ້ອງພັນພືດໃໝ່ ທີ່ ສປປ ລາວ ເປັນພາຄີ ຈະໄດ້ຮັບວັນບູລິມະສິດໃນການຍື່ນຄໍາຮ້ອງຂໍສິດຂອງນັກປະດິດພັນພືດຊະນິດດຽວກັນ ຢູ່ ສປປ ລາວ ໃນໄລຍະເວລາ ສິບສອງເດືອນ ນັບແຕ່ວັນຍື່ນຄໍາຮ້ອງຂໍຄັ້ງທໍາອິດເປັນຕົ້ນໄປ;

2. ຖ້າວ່າໄດ້ຍື່ນຄໍາຮ້ອງຂໍທໍາອິດນັ້ນ ຢູ່ໃນປະເທດ ຫຼື ອົງການຈັດຕັ້ງລະຫວ່າງລັດຖະບານ ທີ່ບໍ່ແມ່ນພາຄີຂອງສົນທິສັນຍາສາກົນກ່ຽວກັບການປົກປ້ອງພັນພືດໃໝ່ທີ່ ສປປ ລາວ ເປັນພາຄີ ຜູ້ຮ້ອງຂໍ ຈະໄດ້ຮັບວັນບູລິມະສິດ ກໍຕໍ່ເມື່ອປະເທດ ຫຼື ອົງການຈັດຕັ້ງນັ້ນ ໃຫ້ສິດໃນການປົກປ້ອງພັນພືດຕໍ່ນັກປະດິດພັນພືດຈາກ ສປປ ລາວ;

3. ຜູ້ຍື່ນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ສາມາດຮຽກຮ້ອງເອົາວັນບູລິມະສິດ ໂດຍອີງໃສ່ຄໍາຮ້ອງໜຶ່ງ ຫຼື ຫຼາຍສະບັບ ທີ່ໄດ້ຍື່ນກ່ອນໜ້ານີ້ຢູ່ຫ້ອງການຈົດທະບຽນພັນພືດໃໝ່ຂອງ ສປປ ລາວ ຫຼື ຕ່າງປະເທດ ຫຼື ອົງການຈັດຕັ້ງສາກົນທີ່ ສປປ ລາວ ເປັນພາຄີ ພາຍໃນເວລາ ສາມເດືອນ ນັບແຕ່ວັນຍື່ນຄໍາຮ້ອງ ຢູ່ ສປປ ລາວ, ຜູ້ກ່ຽວຕ້ອງສະໜອງສໍາເນົາເອກະສານທີ່ໄດ້ປະກອບໃນສໍານວນຄໍາຮ້ອງຄັ້ງທໍາອິດ, ສໍາເນົາຄໍາຮ້ອງທີ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງຈາກອົງການທີ່ກ່ຽວຂ້ອງ ພ້ອມດ້ວຍຕົວຢ່າງ ຫຼື ຫຼັກຖານທີ່ຊີ້ບອກວ່າ ພັນພືດທີ່ກໍານົດໃນສອງຄໍາຮ້ອງນັ້ນ ແມ່ນອັນດຽວກັນ;

4. ນັກປະສົມພັນພືດ ຕ້ອງສະໜອງຂໍ້ມູນ ແລະ ເອກະສານທີ່ຈຳເປັນ ໃຫ້ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອໃຫ້ມີການກວດສອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້ ພາຍໃນໄລຍະເວລາ ສອງປີ ຫຼັງຈາກສິ້ນສຸດໄລຍະເວລາຂອງວັນບຸລິມະສິດ ຫຼື ໃນເວລາທີ່ເໝາະສົມ ໃນກໍລະນີຄຳຮ້ອງຂໍຄັ້ງທຳອິດນັ້ນ ໄດ້ຖືກປະຕິເສດ ຫຼື ຖອນ;

5. ໃນກໍລະນີ ທີ່ມີເຫດການໃດໜຶ່ງເກີດຂຶ້ນ ເຊັ່ນ ການຍື່ນຄຳຮ້ອງອື່ນ ຫຼື ການເຜີຍແຜ່ ຫຼື ການນຳໃຊ້ພັນພືດ ທີ່ກຳນົດໄວ້ໃນຄຳຮ້ອງຄັ້ງທຳອິດ ໃນໄລຍະເວລາທີ່ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕ້ອງບໍ່ເປັນເຫດຜົນໃນການປະຕິເສດຄຳຮ້ອງຖັດມາ. ເຫດການດັ່ງກ່າວ ຕ້ອງບໍ່ເປັນສາເຫດໃນການໃຫ້ສິດແກ່ບຸກຄົນທີສາມ.

### ມາດຕາ 77 ສຳນວນຄຳຮ້ອງຂໍຈົດທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດຮ້ອງຂໍເອົາສິດຕໍ່ພັນພືດທີ່ໄດ້ມາຈາກການປະສົມພັນ ສາມາດຍື່ນຄຳຮ້ອງຂໍຈົດທະບຽນພັນພືດ ນຳກະຊວງວິທະຍາສາດ ແລະ ເຕັກໂນໂລຊີ. ທຸກຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງກຳນົດແຕ່ພັນພືດຊະນິດດຽວເທົ່ານັ້ນ. ຄຳຮ້ອງສຳລັບການປົກປ້ອງພັນພືດ ແລະ ເອກະສານຄັດຕິດອື່ນໆ ສາມາດເຮັດເປັນພາສາລາວ ຫຼື ອັງກິດກໍໄດ້. ຖ້າວ່າຄຳຮ້ອງ ຫຼື ເອກະສານທີ່ໄດ້ເຮັດເປັນພາສາອັງກິດນັ້ນ ຜູ້ຮ້ອງຂໍຍັງຕ້ອງຍື່ນສະບັບແປເປັນພາສາລາວ ໂດຍໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ພາຍໃນເວລາ ເກົ້າສິບວັນ ຫຼັງຈາກວັນໄດ້ຍື່ນຄຳຮ້ອງ.

ສຳນວນຄຳຮ້ອງຂໍຈົດທະບຽນ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງຂໍສິດຕໍ່ພັນພືດທີ່ໄດ້ມາຈາກການປະສົມພັນ ຕາມແບບພິມ;
2. ຊື່ນັກປະສົມພັນພືດ, ຖ້າຜູ້ຮ້ອງຂໍບໍ່ແມ່ນນັກປະສົມພັນພືດ ຕ້ອງມີໜັງສືຢັ້ງຢືນຄວາມເປັນເຈົ້າຂອງ;
3. ໃບມອບສິດ ທີ່ບົ່ງບອກຊື່ ແລະ ທີ່ຢູ່ ຂອງຜູ້ຕາງໜ້າ ຢູ່ ສປປ ລາວ ໃນກໍລະນີ ທີ່ຍື່ນຄຳຮ້ອງຜ່ານຜູ້ຕາງໜ້າ;
4. ໜັງສືສະເໜີການກຳນົດຊື່ໃໝ່;
5. ບົດອະທິບາຍ ຄຸນລັກສະນະຂອງພັນພືດ ກ່ຽວກັບຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ ແລະ ອະທິບາຍ ກ່ຽວກັບການຈັດລຳດັບແນວພັນ ແລະ ຂັ້ນຕອນການເພາະປູກ;
6. ຕົວຢ່າງສ່ວນຂະຫຍາຍພັນພືດ ຫຼື ໜັງສືຢັ້ງຢືນ ກ່ຽວກັບສ່ວນຂະຫຍາຍພັນພືດ;
7. ໃບຢັ້ງຢືນບ່ອນທີ່ສາມາດຊອກຫາຂໍ້ມູນທີ່ຈຳເປັນ ໃນການກຳນົດເງື່ອນໄຂຂອງຄວາມແຕກຕ່າງ, ຄວາມສະໝໍ່າສະເໝີ ແລະ ຄວາມຄົງຕົວ;
8. ຂໍ້ມູນອື່ນ ທີ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກຳນົດ;
9. ໃບຮັບເງິນຄ່າທຳນຽມ ແລະ ຄ່າບໍລິການ.

ຄຳຮ້ອງຂໍຈົດທະບຽນ ອາດລວມເອົາການຮ້ອງຂໍເອົາວັນບຸລິມະສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 76 ຂອງກົດໝາຍສະບັບນີ້.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮັບຄຳຮ້ອງ ແລະ ໃຫ້ວັນທີ ທີ່ຍື່ນຄຳຮ້ອງ ຊຶ່ງຢ່າງໜ້ອຍ ຕ້ອງມີເອກະສານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 5 ແລະ 9 ຂອງວັກໜຶ່ງ ເທິງນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຕ້ອງການຈົດທະບຽນພັນພືດໃໝ່ ຕ້ອງປະຕິບັດຕາມທຸກເງື່ອນໄຂໃຫ້ຄົບຖ້ວນ ພາຍໃນໄລຍະເວລາ ຕາມການກຳນົດຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

**ມາດຕາ 78 (ໃໝ່) ການກວດສອບ ສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ເບື້ອງຕົ້ນ**

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງດຳເນີນການກວດສອບ ສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ເບື້ອງຕົ້ນ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 77 ຂອງກົດໝາຍສະບັບນີ້. ຖ້າເຫັນວ່າສຳນວນຄຳຮ້ອງຂໍ ຖືກຕ້ອງ ແລະ ຄົບຖ້ວນແລ້ວ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຢັ້ງຢືນວັນທີຍື່ນຄຳຮ້ອງຂໍໃຫ້ຜູ້ຍື່ນຄຳຮ້ອງຂໍ.

ໃນກໍລະນີ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ກໍຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງຂໍ ເພື່ອແກ້ໄຂ ພາຍໃນເວລາ ຫົກສິບວັນ ນັບແຕ່ວັນແຈ້ງ ເປັນຕົ້ນໄປ.

**ມາດຕາ 79 (ໃໝ່) ການເຜີຍແຜ່ຄຳຮ້ອງຂໍຈົດທະບຽນພັນພືດໃໝ່**

ພາຍຫຼັງ ໄດ້ດຳເນີນການກວດສອບເບື້ອງຕົ້ນ ສຳເລັດແລ້ວ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງເອົາຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ແລະ ບົດສັງເຂບ ລົງໃນຈົດໝາຍເຫດທາງລັດຖະການກ່ຽວກັບການຈົດທະບຽນພັນພືດໃໝ່.

ບຸກຄົນທີສາມ ສາມາດສະເໜີຄັດຄ້ານການຂໍຈົດທະບຽນດັ່ງກ່າວ ພາຍໃນເວລາ ເກົ້າສິບວັນ ນັບແຕ່ວັນໄດ້ເຜີຍແຜ່ເປັນຕົ້ນໄປ.

**ມາດຕາ 80 (ປັບປຸງ) ການກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່**

ສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຕ້ອງໄດ້ກວດສອບເນື້ອໃນ ເພື່ອໃຫ້ສອດຄ່ອງກັບເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 69 ຫາ 73 ຂອງກົດໝາຍສະບັບນີ້.

ໃນການກວດສອບ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງໄດ້ປະສານງານກັບໜ່ວຍງານທົດລອງພັນພືດທີ່ກ່ຽວຂ້ອງ ດຳເນີນການທົດລອງປູກພັນພືດ ຫຼື ດຳເນີນການທົດລອງອື່ນທີ່ຈຳເປັນ ຊຶ່ງຜູ້ຮ້ອງຂໍ ຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ໃນການທົດລອງປູກ ຫຼື ພິຈາລະນາຜົນຂອງການທົດລອງການປູກ ຫຼື ການທົດລອງອື່ນທີ່ໄດ້ດຳເນີນຜ່ານມາແລ້ວ ຊຶ່ງມູນຄ່າໃນການດຳເນີນການທົດລອງປູກ ຫຼື ພິຈາລະນາຜົນຂອງການທົດລອງການປູກ ຫຼື ການທົດລອງອື່ນ ແມ່ນຂຶ້ນກັບການກຳນົດຂອງແຕ່ລະສູນທົດລອງກະສິກຳ ຢູ່ທັງພາຍໃນ ແລະ ຕ່າງປະເທດ ຕາມແຕ່ລະໄລຍະ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ອາດຈະຮຽກຮ້ອງໃຫ້ນັກປະສົມພັນພືດ ສະໜອງຂໍ້ມູນ, ເອກະສານ ຫຼື ສ່ວນຂະຫຍາຍພັນ ຫຼື ຜົນເກັບກ່ຽວ ທັງໝົດ ທີ່ເຫັນວ່າຈຳເປັນ.

ໃນກໍລະນີ ທີ່ໄດ້ຍື່ນຄຳຮ້ອງຂໍ ຢູ່ ປະເທດອື່ນ ຫຼື ອົງການຈັດຕັ້ງລະຫວ່າງລັດຖະບານ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຮຽກຮ້ອງເອົາສຳເນົາຄຳຮ້ອງ ແລະ ບົດລາຍງານການກວດສອບ ທີ່ໄດ້ຮັບການຮັບຮອງຈາກອົງການປົກປ້ອງພັນພືດໃນປະເທດນັ້ນ ຫຼື ອົງການຈັດຕັ້ງດັ່ງກ່າວນັ້ນ ແລະ ນຳມາພິຈາລະນາ ໃນການຈົດທະບຽນ. ຜູ້ຮ້ອງຂໍ ສາມາດເພີ່ມເຕີມ ຫຼື ດັດແກ້ສຳນວນຄຳຮ້ອງໄດ້ທຸກເວລາ ກ່ອນການອອກໃບຢັ້ງຢືນ, ຫຼັງຈາກມີການຮັບຮອງການດັດແກ້ ຈາກກະຊວງວິທະຍາສາດ ແລະ ເຕັກໂນໂລຊີແລ້ວ, ການດັດແກ້ດັ່ງກ່າວ ກໍຈະມີຜົນຍ້ອນຫຼັງ ແຕ່ບໍ່ໃຫ້ມີຜົນກະທົບເຖິງສິດຂອງບຸກຄົນທີສາມ.

**ມາດຕາ 81 (ໃໝ່) ການຈົດທະບຽນ**

ພາຍຫຼັງການກວດສອບເນື້ອໃນແລ້ວ ຫາກເຫັນວ່າສຳນວນຄຳຮ້ອງຂໍຈົດທະບຽນພັນພືດໃໝ່ ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຈົດທະບຽນ

ແລະ ອອກໃບຢັ້ງຢືນການຈົດທະບຽນພັນພືດໃໝ່ໃຫ້ຜູ້ຮ້ອງຂໍ, ບັນທຶກການຈົດທະບຽນ ແລ້ວເປີຍແຜ່ພົນຂອງການຈົດທະບຽນດັ່ງກ່າວ ລົງໃນຈົດໝາຍເຫດທາງລັດຖະການ ກ່ຽວກັບການຈົດທະບຽນພັນພືດໃໝ່.

## ໝວດທີ 3
## ສິດ ແລະ ພັນທະ ຂອງເຈົ້າຂອງພັນພືດໃໝ່

**ມາດຕາ 82 (ປັບປຸງ) ສິດເຈົ້າຂອງພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ມີສິດ ດັ່ງນີ້:

1. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ:
   1.1 ຜະລິດ, ຜະລິດຊ້ຳ ຫຼື ຜະລິດເພີ່ມ;
   1.2 ສ້າງເງື່ອນໄຂ ເພື່ອຂະຫຍາຍພັນ;
   1.3 ສະເໜີຂາຍ;
   1.4 ຂາຍ ຫຼື ຈຳໜ່າຍ;
   1.5 ສົ່ງອອກ;
   1.6 ນຳເຂົ້າ;
   1.7 ເກັບຮັກສາໄວ້ ເພື່ອຈຸດປະສົງຂອງຂໍ້ 1.1 ຫາ ຂໍ້ 1.6 ເທິງນີ້.
2. ວາງເງື່ອນໄຂ ແລະ ຂໍ້ຈຳກັດ ໃນການອະນຸຍາດຂອງຕົນ;
3. ປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍ ຈາກການລະເມີດຂອງຜູ້ອື່ນ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍຈາກຄວາມເສຍຫາຍ ທີ່ຜູ້ອື່ນໄດ້ກໍ່ຂຶ້ນ.

ການກະທຳ ທີ່ໄດ້ກຳນົດໄວ້ໃນຂໍ້ 1.1 ຫາ ຂໍ້ 1.7 ຂອງມາດຕານີ້ ກ່ຽວກັບຜົນເກັບກ່ຽວ ລວມທັງໝົດຕົ້ນພືດ ຫຼື ສ່ວນໃດໜຶ່ງຂອງຕົ້ນພືດ ທີ່ໄດ້ມາໂດຍບໍ່ໄດ້ຮັບອະນຸຍາດ ຈາກການນຳໃຊ້ສ່ວນຂະຫຍາຍພັນຂອງພັນພືດທີ່ໄດ້ຮັບການປົກປ້ອງນັ້ນ ຕ້ອງຂໍອະນຸຍາດຈາກນັກປະສົມພັນພືດ, ເວັ້ນເສຍແຕ່ນັກປະສົມພັນພືດ ມີໂອກາດທີ່ເໝາະສົມໃນການນຳໃຊ້ສິດຂອງຕົນ ກ່ຽວກັບສ່ວນຂະຫຍາຍພັນດັ່ງກ່າວ. ບົດບັນຍັດທີ່ໄດ້ກຳນົດໄວ້ໃນວັກນີ້ ຈະນຳໃຊ້ເຊັ່ນດຽວກັບ ຕໍ່ຜະລິດຕະພັນ ທີ່ໄດ້ມາໂດຍກົງຈາກຜົນເກັບກ່ຽວ ທີ່ໄດ້ຮັບການປົກປ້ອງ.

ບົດບັນຍັດ ທີ່ໄດ້ກຳນົດໄວ້ໃນວັກ ໜຶ່ງ ແລະ ສອງ ຂອງມາດຕານີ້ ຈະນຳໃຊ້ເຊັ່ນດຽວກັບຕໍ່ພັນພືດ ດັ່ງນີ້:

1. ພັນພືດ ຊຶ່ງຕົ້ນຕໍໄດ້ມາຈາກພັນພືດທີ່ໄດ້ຮັບການປົກປ້ອງ ໂດຍພັນພືດທີ່ໄດ້ຮັບການປົກປ້ອງນັ້ນໃນຕົວມັນເອງແມ່ນບໍ່ໄດ້ມາຈາກພັນພືດອື່ນ;
2. ພັນພືດ ທີ່ບໍ່ສາມາດຈຳແນກໄດ້ຢ່າງຈະແຈ້ງເຖິງຄວາມແຕກຕ່າງ ຈາກພັນພືດທີ່ໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍສະບັບນີ້;
3. ພັນພືດ ທີ່ມີການຜະລິດຈາກການນຳໃຊ້ຄືນ ຂອງພັນພືດທີ່ໄດ້ຮັບການປົກປ້ອງ.

ເຈົ້າຂອງພັນພືດ ສາມາດໄດ້ສິດຕໍ່ພັນພືດທີ່ໄດ້ມາຈາກພັນທຸກຳສ່ວນໃຫຍ່ຂອງພັນພືດດັ້ງເດີມ ເຊັ່ນ ການຄັດເລືອກພັນພືດທີ່ມີໃນທຳມະຊາດ, ການເຮັດໃຫ້ພັນພືດກາຍພັນ, ການເພາະລ້ຽງເນື້ອເຍື່ອ (Somaclonal variant), ການຄັດເລືອກພັນພືດທີ່ແຕກຕ່າງປະສົມກັບພັນພືດດັ້ງເດີມ, ການປ່ຽນແປງພັນທາງວິສະວະກຳພັນທຸກຳ.

ເຈົ້າຂອງພັນພືດ ມີສິດດຳເນີນການແຕ່ພຽງຜູ້ດຽວ ຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນວັກ ໜຶ່ງ ຫາ ສີ່ ຂອງມາດຕານີ້. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຈະດຳເນີນການໄດ້ ກໍຕໍ່ເມື່ອໄດ້ຮັບອະນຸຍາດຈາກເຈົ້າຂອງພັນພືດ, ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ.

### ມາດຕາ 83 (ປັບປຸງ) ອາຍຸການປົກປ້ອງພັນພືດໃໝ່

ອາຍຸການປົກປ້ອງພັນພືດໃໝ່ ສຳລັບພືດຢືນຕົ້ນ ແລະ ຕົ້ນໝາກອະງຸ່ນ ແມ່ນມີກຳນົດ ຊາວຫ້າປີ ນັບແຕ່ວັນມອບສິດໃຫ້ແກ່ນັກປະສົມພັນພືດເປັນຕົ້ນໄປ ແລະ ພັນພືດໃໝ່ປະເພດອື່ນ ແມ່ນມີກຳນົດ ຊາວປີ ນັບແຕ່ວັນມອບສິດໃຫ້ແກ່ນັກປະສົມພັນພືດເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງພັນພືດໃໝ່ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການລ່ວງໜ້າ ແຕ່ລະປີ.

### ມາດຕາ 84 ການປົກປ້ອງຊົ່ວຄາວ

ໃນໄລຍະເວລາ ລະຫວ່າງການຍື່ນເຜີຍແຜ່ຄຳຮ້ອງຂໍສິດຂອງນັກປະສົມພັນພືດ ກັບການຮັບສິດນັ້ນ ເຈົ້າຂອງສິດຈະໄດ້ຮັບການປົກປ້ອງຊົ່ວຄາວ ດ້ວຍຄ່າຕອບແທນຢ່າງເໝາະສົມ ຈາກບຸກຄົນອື່ນ ທີ່ໄດ້ດຳເນີນການໃດໜຶ່ງ ໃນໄລຍະເວລາດັ່ງກ່າວ ແລະ ຕ້ອງໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້.

### ມາດຕາ 85 ພັນທະ ຂອງເຈົ້າຂອງພັນພືດໃໝ່

ເຈົ້າຂອງພັນພືດໃໝ່ ມີພັນທະດັ່ງດຽວກັນກັບພັນທະ ຂອງເຈົ້າຂອງຊັບສິນອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້.

## ໝວດທີ 4
## ການຍົກເວັ້ນ ແລະ ການຈຳກັດ ຕໍ່ສິດຂອງເຈົ້າຂອງພັນພືດໃໝ່

### ມາດຕາ 86 (ປັບປຸງ) ການຍົກເວັ້ນ ຕໍ່ສິດຂອງນັກປະສົມພັນພືດ

ສິດຂອງນັກປະສົມພັນພືດ ຈະຖືກຍົກເວັ້ນ ເມື່ອມີ:

1. ການກະທຳ ເພື່ອຈຸດປະສົງສ່ວນຕົວ ຫຼື ບໍ່ມີຈຸດປະສົງທາງການຄ້າ;
2. ການກະທຳ ເພື່ອການຄົ້ນຄວ້າທົດລອງ;
3. ການກະທຳ ເພື່ອປັບປຸງພັນພືດອື່ນ ແລະ ຍົກເວັ້ນ ບົດບັນຍັດໃນວັກ 3 ຂອງມາດຕາ 82 ຂອງກົດໝາຍສະບັບນີ້ ຫາກຖືກນຳໃຊ້, ຜະລິດ ຫຼື ຜະລິດຊ້ຳ, ການສ້າງເງື່ອນໄຂ ເພື່ອຂະຫຍາຍພັນ, ການສະເໜີຂາຍ ຫຼື ການຂາຍ ຫຼື ການຈຳໜ່າຍພັນພືດ ທີ່ກ່ຽວກັບພັນພືດອື່ນ.

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຈຳກັດສິດຕາມຄວາມເໝາະສົມ ແລະ ໃຫ້ການປົກປ້ອງຜົນປະໂຫຍດທີ່ຖືກຕ້ອງ ຂອງນັກປະສົມພັນພືດ ຕາມກົດໝາຍ ຈຳກັດສິດຂອງນັກປະສົມພັນພືດທີ່ກ່ຽວຂ້ອງກັບແຕ່ລະພັນພືດ ເພື່ອອະນຸຍາດໃຫ້ຊາວກະສິກອນນຳໃຊ້, ເພື່ອການຂະຫຍາຍພັນ ຢູ່ໃນເນື້ອທີ່ດິນຂອງຕົນເອງ, ຊາວກະສິກອນ ສາມາດນຳໃຊ້ຜະລິດຕະພັນ ທີ່ເກັບກ່ຽວມາຈາກ ການປູກພັນພືດທີ່ໄດ້ຮັບການປົກປ້ອງ ຫຼື ພັນພືດ ທີ່ໄດ້ກຳນົດໄວ້ໃນຂໍ້ 1 ຫຼື 2 ຂອງວັກ 3 ມາດຕາ 82 ຂອງກົດໝາຍສະບັບນີ້.

**ມາດຕາ 87 ການສິ້ນສຸດສິດຂອງນັກປະສົມພັນພືດ**

ສິດຂອງນັກປະສົມພັນພືດ ຈະສິ້ນສຸດລົງ ກ່ຽວກັບສ່ວນໃດໜຶ່ງ ຂອງພັນພືດທີ່ໄດ້ຮັບການ ປົກປ້ອງ ຫຼື ສ່ວນໃດໜຶ່ງ ທີ່ໄດ້ຈາກສ່ວນດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 82 ວັກ ສາມ ຂອງກົດໝາຍສະບັບນີ້ ຊຶ່ງໄດ້ ຂາຍ ຫຼື ຈຳໜ່າຍ ຢູ່ໃນດິນແດນ ຂອງ ສປປ ລາວ ໂດຍນັກປະສົມພັນພືດ ຫຼື ຕາມການເຫັນດີຂອງຜູ້ກ່ຽວ ຍົກ ເວັ້ນການກະທຳ ດັ່ງນີ້:

1. ກ່ຽວກັບການຂະຫຍາຍພັນພືດດັ່ງກ່າວຕື່ມອີກ;
2. ກ່ຽວກັບການສົ່ງອອກສ່ວນຂະຫຍາຍຂອງພັນພືດ ໄປຍັງປະເທດ ທີ່ບໍ່ປົກປ້ອງປະເພດ ຫຼື ຊະນິດພັນພືດດັ່ງກ່າວ ເວັ້ນເສຍແຕ່ການສົ່ງອອກສ່ວນນັ້ນ ແມ່ນເພື່ອການບໍລິໂພກ.

ເພື່ອຈຸດປະສົງຂອງວັກ ໜຶ່ງ ມາດຕານີ້ ສ່ວນຂະຫຍາຍ ຂອງພັນພືດ ໝາຍເຖິງ:

1. ສ່ວນຂະຫຍາຍພັນທຸກຊະນິດ;
2. ຜົນເກັບກ່ຽວ ລວມທັງໝົດຕົ້ນພືດ ຫຼື ສ່ວນໃດໜຶ່ງ ຂອງຕົ້ນພືດ;
3. ຜະລິດຕະພັນໃດໜຶ່ງ ທີ່ໄດ້ມາໂດຍກົງຈາກຜົນເກັບກ່ຽວ.

**ມາດຕາ 88 (ປັບປຸງ) ມາດຕະການຄຸ້ມຄອງທາງການຄ້າ**

ນັກປະສົມພັນພືດ ເຖິງວ່າໄດ້ຮັບສິດແລ້ວ ໃນເວລາສະແຫວງຫາຜົນປະໂຫຍດ ກໍຍັງຕ້ອງປະຕິບັດ ຕາມມາດຕະການຄຸ້ມຄອງຂອງຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ກ່ຽວກັບ:

1. ພັນພືດໃໝ່ທີ່ສ້າງຜົນກະທົບ ທາງກົງ ຫຼື ທາງອ້ອມ ທີ່ຮ້າຍແຮງຕໍ່ສຸຂະພາບ ແລະ ສະພາບແວດລ້ອມ;
2. ພັນພືດໃໝ່ທີ່ໄດ້ຈາກການປັບແຕ່ງພັນທຸກຳ ຊຶ່ງບໍ່ໄດ້ມີການປະເມີນ ກ່ຽວກັບຄວາມປອດໄພ, ສິ່ງແວດລ້ອມ ຫຼື ສຸຂະພາບ ຫຼື ມີການກະທຳໃດໜຶ່ງ ທີ່ເປັນການລະເມີດກົດໝາຍຂອງ ສປປ ລາວ.

**ມາດຕາ 89 (ປັບປຸງ) ສິດຂອງນັກປະສົມພັນພືດທີ່ເປັນໂມຄະ**

ສິດຂອງນັກປະສົມພັນພືດ ຈະເປັນໂມຄະ ໃນກໍລະນີ ດັ່ງນີ້:

1. ເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 70 ຫຼື 71 ຂອງກົດໝາຍສະບັບນີ້ ບໍ່ໄດ້ຮັບການປະຕິບັດ ໃນເວລາມອບສິດໃຫ້ແກ່ນັກປະສົມພັນພືດ;
2. ການສະໜອງຂໍ້ມູນ ແລະ ເອກະສານຕົ້ນຕໍ ທີ່ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບຄວາມເປັນຈິງຂອງນັກປະສົມພັນພືດ ໃຫ້ແກ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃນເວລາພິຈາລະນາການຈົດທະບຽນ;
3. ການມອບສິດນັກປະສົມພັນພືດ ໃຫ້ແກ່ບຸກຄົນທີ່ບໍ່ມີສິດ ເວັ້ນເສຍແຕ່ສິດດັ່ງກ່າວ ໄດ້ໂອນໃຫ້ບຸກຄົນທີ່ມີສິດ.

ສິດຂອງນັກປະສົມພັນພືດ ຈະບໍ່ຖືວ່າເປັນໂມຄະ ແລະ ໃຊ້ບໍ່ໄດ້ ນອກຈາກເຫດຜົນທີ່ໄດ້ກ່າວໄວ້ໃນ ວັກ ໜຶ່ງ ຂອງມາດຕານີ້.

**ມາດຕາ 90 ການຖອນສິດຂອງນັກປະສົມພັນພືດ**

ສິດຂອງນັກປະສົມພັນພືດ ອາດຖືກຖອນໃນກໍລະນີ ດັ່ງນີ້:

1. ບໍ່ສາມາດສືບຕໍ່ປະຕິບັດຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນມາດຕາ 72 ຫຼື 73 ຂອງກົດໝາຍສະບັບນີ້;

2. ບໍ່ໄດ້ສະໜອງຂໍ້ມູນ, ເອກະສານ ຫຼື ສ່ວນຂະຫຍາຍພັນພືດ ທີ່ຈໍາເປັນໃຫ້ເຈົ້າໜ້າທີ່ ເພື່ອກວດສອບການບໍາລຸງຮັກສາພັນພືດ;

3. ບໍ່ຈ່າຍຄ່າທໍານຽມ ແລະ ຄ່າບໍລິການ ເພື່ອເຮັດໃຫ້ສິດຂອງຕົນ ຍັງມີຜົນໃຊ້ໄດ້;

4. ບໍ່ໄດ້ສະເໜີຊື່ພັນພືດທີ່ເໝາະສົມອີກ ໃນກໍລະນີການກໍານົດຊື່ພັນພືດ ຖືກຍົກເລີກ ຫຼັງຈາກການມອບສິດໃຫ້.

ສິດຂອງນັກປະສົມພັນພືດ ຈະບໍ່ຖືກຖອນນອກຈາກເຫດຜົນທີ່ໄດ້ກ່າວໄວ້ໃນຂໍ້ 1 ຫາ 4 ຂອງມາດຕານີ້.

**ມາດຕາ 91 (ປັບປຸງ) ການຈໍາກັດສິດເພື່ອສາທາລະນະປະໂຫຍດ**

ໃນກໍລະນີ ມີຄວາມຈໍາເປັນເພື່ອຕອບສະໜອງຄວາມຕ້ອງການຂອງສັງຄົມ ລັດຖະບານ ສາມາດອອກແຈ້ງການອະນຸຍາດ ໃຫ້ນໍາໃຊ້ພັນພືດທີ່ໄດ້ຮັບການປົກປ້ອງ ໂດຍບໍ່ຈໍາເປັນຕ້ອງມີການອະນຸຍາດຈາກເຈົ້າຂອງສິດ ແຕ່ເຈົ້າຂອງສິດ ຈະໄດ້ຮັບຄ່າຕອບແທນທີ່ເປັນທໍາ.

# ພາກທີ V
# ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ
## ໝວດທີ 1
## ການປົກປ້ອງລິຂະສິດ

**ມາດຕາ 92 ຜົນງານທີ່ໄດ້ຮັບການປົກປ້ອງ**

ທຸກຜົນງານຂອງນັກປະພັນ ທີ່ມີການປະດິດຄິດແຕ່ງຂຶ້ນດ້ວຍຕົນເອງ ຢູ່ໃນຂົງເຂດສິລະປະກໍາ, ວັນນະກໍາ ແລະ ວິທະຍາສາດ ຈະໄດ້ຮັບການປົກປ້ອງເປັນລິຂະສິດ ເຖິງວ່າຜົນງານດັ່ງກ່າວ ຈະສະແດງອອກຢູ່ໃນລັກສະນະ ຫຼື ຮູບແບບໃດກໍຕາມ. ໂດຍສະເພາະລິຂະສິດ ຈະໄດ້ຮັບການຄຸ້ມຄອງສໍາລັບຜົນງານ ດັ່ງນີ້:

1. ຜົນງານດ້ານສິລະປະກໍາ ຕົ້ນຕໍ ມີ ດັ່ງນີ້:

1.1. ຮູບວາດ, ຮູບແຕ້ມ, ຮູບແກະສະຫຼັກ, ຮູບພິມຫີນ, ການເກັບຂີດລາຍພິມ ຫຼື ລາຍແພ ແລະ ຜົນງານວິຈິດຕະກໍາ ອື່ນໆ;

1.2. ຮູບປັ້ນ, ຮູບເຈືອດຫີນ ແລະ ຜົນງານປະຕິມາກໍາອື່ນໆ;

1.3. ການອອກແບບອາຄານ ຫຼື ສິ່ງປຸກສ້າງ, ການອອກແບບຕົບແຕ່ງພາຍໃນ, ພາຍນອກ ແລະ ຜົນງານສະຖາປັດຕະຍະກໍາ ອື່ນໆ;

1.4. ຮູບຖ່າຍດ້ວຍວິທີການເຕັກນິກຕ່າງໆ ແລະ ຜົນງານທີ່ສະແດງອອກ ດ້ວຍຂັ້ນຕອນອະນາລັອກ (analogous process);

1.5. ຮູບຈໍາລອງ, ແຜນທີ່, ແຜນຜັງ, ຮູບສະເກັດ ຫຼື ຮູບສາມມິຕິ ກ່ຽວກັບພູມສາດ, ພູມປະເທດ, ງານສະຖາປັດຕະຍະກໍາ ຫຼື ວິທະຍາສາດ;

1.6. ດົນຕີປະກອບບົດລະຄອນ, ແບບລະຄອນໄບ້ ຫຼື ລະຄອນຈັດສາ, ການອອກແບບທ່າຟ້ອນ, ທ່າເຕັ້ນ ແລະ ຜົນງານອື່ນ ທີ່ປະດິດຄິດແຕ່ງຂຶ້ນ ເພື່ອການສະແດງ;

1.7. ການປະກອບດົນຕີ ທີ່ມີ ຫຼື ບໍ່ມີ ເນື້ອຮ້ອງລວມຢູ່ນຳ ລວມເຖິງໂນຕເພງ ທີ່ໄດ້ແຍກ ແລະ ຮຽບຮຽງສຽງປະສານແລ້ວ;

1.8. ການບັນທຶກສຽງ;

1.9. ຜົນງານສິລະປະປັບໃຊ້;

1.10. ຟິມ ຫຼື ຜົນງານດ້ານຮູບເງົາອື່ນໆ ຫຼື ຜົນງານທີ່ສະແດງອອກ ດ້ວຍການລຳດັບພາບ ທີ່ສາມາດ ນຳອອກສາຍຕໍ່ເນື່ອງໄດ້ເປັນຮູບເງົາ ແລະ ສາມາດບັນທຶກລົງໃສ່ວັດສະດຸອື່ນໆ ທີ່ສາມາດນຳອອກສາຍຕໍ່ເນື່ອງໄດ້ ຄືກັນ ລວມທັງສຽງປະກອບໃນຜົນງານນັ້ນ.

2. ຜົນງານດ້ານວັນນະກຳ ຕົ້ນຕໍ ມີ ດັ່ງນີ້:

2.1. ປຶ້ມອ່ານ, ວິທະຍານິພົນ, ແຜ່ນພັບ, ວາລະສານ, ສິ່ງພິມ ແລະ ສິ່ງຂີດຂຽນອື່ນໆ;

2.2. ບົດປາຖະກະຖາ, ບົດຄຳເຫັນ, ສຸນທອນພົດ, ບົດຄຳສອນ, ບົດສອນ ແລະ ບົດເວົ້າອື່ນໆ ທີ່ ໄດ້ມີການບັນທຶກ;

2.3. ບົດລະຄອນ, ບົດເລື່ອງ, ບົດກະວີ;

2.4. ໂປຣແກຣມຄອມພິວເຕີ ແລະ ການລວບລວມຂໍ້ມູນ ລວມທັງພາສາຕົ້ນກຳເນີດ (source code) ແລະ ພາສາວັດຖຸ (object code).

3. ການລວບລວມຜົນງານ ສິລະປະກຳ ຫຼື ວັນນະກຳ ເປັນຕົ້ນ ສາລານຸກົມ, ການລວບລວມບົດປະພັນ ຫຼື ການລວບລວມຂໍ້ມູນດ້ວຍການຈັດລຽງ, ການຄັດເລືອກ, ການລວບລວມບັນດາຫົວຂໍ້ຕ່າງໆ ທີ່ປະກອບ ເຂົ້າກັນເປັນການປະດິດຄິດແຕ່ງທາງປັນຍາ.

**ຜົນງານໃດໜຶ່ງ ຈະຖືວ່າໄດ້ມີການປະດິດຄິດແຕ່ງຂຶ້ນ ກໍຕໍ່ເມື່ອໄດ້ບັນທຶກລົງໃນວັດຖຸທີ່ຈັບບາຍໄດ້.**

### ມາດຕາ 93 ຜົນງານທີ່ສືບເນື່ອງຈາກລິຂະສິດ

ຜົນງານທີ່ສືບເນື່ອງຈາກລິຂະສິດ ຈະໄດ້ຮັບການປົກປ້ອງ ຄືກັນກັບຜົນງານຕົ້ນສະບັບໂດຍປາສະຈາກ ການສ້າງຜົນເສຍຫາຍ ຕໍ່ເຈົ້າຂອງລິຂະສິດຕົ້ນສະບັບ ຊຶ່ງເປັນຜົນງານ ທີ່ນຳມາເປັນພື້ນຖານໃນການສ້າງຜົນງານ ສືບເນື່ອງ.

### ມາດຕາ 94 ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ

ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ ມີ ດັ່ງນີ້:

1. ຂ່າວປະຈຳວັນ ຫຼື ເຫດການຕົວຈິງທີ່ເກີດຂຶ້ນ ທີ່ມີລັກສະນະເປັນຂໍ້ມູນ ຂ່າວສານ;
2. ຄວາມຄິດ, ຂັ້ນຕອນ, ກຳມະວິທີ, ວິທີການປະຕິບັດ ຫຼື ຫຼັກການຄະນິດສາດ;
3. ບັນດານິຕິກຳຕ່າງໆ, ລະບຽບການປົກຄອງ, ເອກະສານທາງດ້ານຕຸລາການ ແລະ ເອກະສານເຫຼົ່ານັ້ນ ທີ່ແປເປັນທາງການ.

## ໝວດທີ 2
## ການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 95 (ປັບປຸງ) ຜູ້ໄດ້ຮັບຜົນປະໂຫຍດຈາກການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ**

ຜູ້ໄດ້ຮັບຜົນປະໂຫຍດຈາກການປົກປ້ອງສິດ ກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ຜູ້ສະແດງ ລວມມີນັກສະແດງ, ນັກຮ້ອງ, ນັກດົນຕີ, ນັກຟ້ອນ ແລະ ຜູ້ອື່ນໆ ທີ່ສະແດງ, ຮ້ອງເພງ, ເລົ່າ, ຫຼິ້ນ ໃນຮູບແບບ ຂອງຜົນງານດ້ານສິລະປະກຳ ແລະ ວັນນະກຳ ຫຼື ການສະແດງອອກທາງວັດທະນະທຳພື້ນບ້ານ;

2. ຜູ້ຜະລິດການບັນທຶກສຽງ ທີ່ໄດ້ບັນທຶກຄັ້ງທຳອິດ ຂອງການສະແດງໃດໜຶ່ງ ຫຼື ສຽງອື່ນໆ ຫຼື ການນຳສະເໜີບັນດາສຽງອື່ນໆ ທີ່ປະກອບໃນການສະແດງ;

3. ຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ ທີ່ໄດ້ມີການຮັບສົ່ງສັນຍານສຽງ ຫຼື ພາບ ແລະ ສຽງ ຜ່ານລະບົບໃຊ້ສາຍ ຫຼື ບໍ່ໃຊ້ສາຍ ສູ່ສາທາລະນະຊົນ.

**ມາດຕາ 96 (ປັບປຸງ) ສິດກ່ຽວຂ້ອງກັບລິຂະສິດ ທີ່ໄດ້ຮັບການປົກປ້ອງ**

ສິດກ່ຽວຂ້ອງກັບລິຂະສິດ ທີ່ໄດ້ຮັບການປົກປ້ອງ ມີ ດັ່ງນີ້:

1. ການສະແດງ:

1.1 ການສະແດງຢູ່ພາຍໃນ ຫຼື ຕ່າງປະເທດ ຂອງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ;

1.2 ການສະແດງ ຂອງຄົນຕ່າງປະເທດ ຢູ່ ສປປ ລາວ;

1.3 ການສະແດງ ທີ່ຖືກປົກປ້ອງພາຍໃຕ້ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

2. ການບັນທຶກສຽງ:

2.1 ການບັນທຶກສຽງ ທີ່ຜະລິດ ຢູ່ພາຍໃນ ຫຼື ຕ່າງປະເທດຂອງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ;

2.2 ການບັນທຶກສຽງ ຂອງຄົນຕ່າງປະເທດ ທີ່ຜະລິດ ຢູ່ ສປປ ລາວ;

2.3 ການບັນທຶກສຽງ ທີ່ຖືກປົກປ້ອງພາຍໃຕ້ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

3. ການກະຈາຍສຽງ-ແຜ່ພາບ:

3.1. ການກະຈາຍສຽງ-ແຜ່ພາບ ຢູ່ພາຍໃນ ຫຼື ຕ່າງປະເທດຂອງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຜູ້ບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ຫຼື ອົງການກະຈາຍສຽງ-ແຜ່ພາບ ທີ່ມີສຳນັກງານໃຫຍ່ ຢູ່ ສປປ ລາວ;

3.2. ການກະຈາຍສຽງ-ແຜ່ພາບ ທີ່ສົ່ງຈາກເຄື່ອງຮັບສົ່ງສັນຍານ ທີ່ຕັ້ງຢູ່ ສປປ ລາວ;

3.3. ການກະຈາຍສຽງ-ແຜ່ພາບ ທີ່ຖືກປົກປ້ອງພາຍໃຕ້ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

4. ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ແລະ ບໍ່ເຂົ້າລະຫັດ:

4.1. ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ແລະ ບໍ່ເຂົ້າລະຫັດຢູ່ພາຍໃນ ຫຼື ຕ່າງປະເທດຂອງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຄົນບໍ່ມີສັນຊາດ ທີ່ອາໄສຢູ່ເປັນປະຈຳໃນ ສປປ ລາວ;

4.2. ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ແລະ ບໍ່ເຂົ້າລະຫັດຂອງກົນຕ່າງປະເທດ ຢູ່ ສປປ ລາວ;

4.3. ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ແລະ ບໍ່ເຂົ້າລະຫັດ ທີ່ຖືກປົກປ້ອງພາຍໃຕ້ສົນທິສັນຍາ ແລະ ສົນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ການສະແດງ, ການບັນທຶກສຽງ ແລະ ລາຍການກະຈາຍສຽງ-ແຜ່ພາບ ຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ແລະ ບໍ່ເຂົ້າລະຫັດ ຕ້ອງໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, 2, 3 ແລະ 4 ຂອງມາດຕານີ້ ໂດຍບໍ່ແຕະຕ້ອງ ຕໍ່ຜົນງານທີ່ມີລິຂະສິດ.

## ໝວດທີ 3
## ການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 97 ການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ

ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ແມ່ນ ສິດທີ່ເກີດຂຶ້ນໂດຍທັນທີ ເມື່ອໄດ້ມີການປະດິດຄິດແຕ່ງຜົນງານນັ້ນຂຶ້ນມາ ໂດຍບໍ່ມີການຈົດທະບຽນ ແຕ່ສາມາດແຈ້ງສິດນັ້ນໄວ້ນຳ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນຫຼັກຖານ ຫຼື ເປັນຂໍ້ມູນໄວ້ ໂດຍສະເພາະເມື່ອມີການລະເມີດ ຫຼື ມີຂໍ້ຂັດແຍ່ງ.

### ມາດຕາ 98 ການບັນທຶກການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ

ເມື່ອໄດ້ຮັບຄຳຮ້ອງຂໍແຈ້ງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດແລ້ວ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງບັນທຶກການແຈ້ງດັ່ງກ່າວ ແລະ ອອກໃບຢັ້ງຢືນໃຫ້ ເພື່ອເປັນຫຼັກຖານ ຖ້າຄຳຮ້ອງດັ່ງກ່າວຫາກຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂທີ່ໄດ້ກຳນົດໄວ້. ໃບຢັ້ງຢືນການແຈ້ງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຕ້ອງບົ່ງບອກຊື່ເຈົ້າຂອງຜົນງານ, ຊື່ຜົນງານ ພ້ອມວັນເດືອນປີສ້າງຜົນງານ ແຕ່ບໍ່ເປັນການໃຫ້ສິດໃດໆ ແກ່ຜູ້ແຈ້ງ.

## ໝວດທີ 4
## ເຈົ້າຂອງລິຂະສິດ

### ມາດຕາ 99 ເຈົ້າຂອງລິຂະສິດ

ເຈົ້າຂອງລິຂະສິດ ໃນຜົນງານກ່ຽວກັບການປະພັນ ແມ່ນ ນັກປະພັນ. ເມື່ອມີການສ້າງຜົນງານຮ່ວມກັນ ກໍຈະໄດ້ຮັບສິດຮ່ວມກັນ ລະຫວ່າງຜູ້ປະດິດຄິດແຕ່ງດ້ວຍກັນ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ໃນກໍລະນີຜົນງານ ໄດ້ຖືກສ້າງຂຶ້ນດ້ວຍການວ່າຈ້າງ ເຈົ້າຂອງລິຂະສິດໃນຜົນງານດັ່ງກ່າວ ກໍແມ່ນຜູ້ວ່າຈ້າງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ເປັນຢ່າງອື່ນ.

ກຳມະສິດຕໍ່ລິຂະສິດ ແລະ ສິດດ້ານເສດຖະກິດ ສາມາດມອບໂອນ ດ້ວຍສັນຍາ ຫຼື ດ້ວຍການສືບທອດມູນມໍລະດົກ.

ຜູ້ໄດ້ຮັບສິດໃນລິຂະສິດ ແລະ ສິດດ້ານເສດຖະກິດ ຕາມສັນຍາ ລວມທັງສັນຍາວ່າຈ້າງແຮງງານເພື່ອສ້າງຜົນງານ ຫຼື ບັນທຶກສຽງ ກໍຈະສາມາດນຳໃຊ້ສິດເຫຼົ່ານັ້ນໄດ້ ໃນນາມຕົນເອງ ແລະ ກໍຈະມີສິດໄດ້ຮັບຜົນປະໂຫຍດຈາກສິດ ດັ່ງກ່າວ.

**ມາດຕາ 100 ຜູ້ປະກອບສ່ວນໃນຜົນງານການສະແດງ ຫຼື ຜົນງານດ້ານຮູບເງົາ**

ຜູ້ປະກອບສ່ວນ ຢ່າງມີຫົວຄິດປະດິດສ້າງ ໃນຜົນງານການສະແດງ ຫຼື ຜົນງານດ້ານຮູບເງົາ ຊຶ່ງມີຜູ້ອໍານວຍການສ້າງ, ບັນນາທິການ, ຜູ້ຂຽນຂຽງ, ນັກຮ້ອງ, ຜູ້ຄວບຄຸມການສະແດງ, ຜູ້ປະພັນ, ຜູ້ຈັດສາກ, ຜູ້ຄວບຄຸມສຽງ, ຜູ້ຄວບຄຸມແສງ, ຜູ້ອອກແບບສະຖານທີ່ຖ່າຍທໍາ, ຜູ້ຈັດການດ້ານເຄື່ອງມືຖ່າຍທໍາ, ຜູ້ຈັດການດ້ານເຕັກນິກ ແລະ ຜູ້ອື່ນໆ ທີ່ປະກອບສ່ວນ ໃນວຽກດັ່ງກ່າວ ຖືວ່າເປັນຜູ້ທີ່ໄດ້ມີການປະດິດແຕ່ງຮ່ວມ ໃນຜົນງານການສະແດງ ຫຼື ຜົນງານດ້ານຮູບເງົາ.

ຜູ້ປະກອບສ່ວນໃນການປະດິດແຕ່ງເຫຼົ່ານີ້ ຈະຕ້ອງໄດ້ຮັບການບົ່ງຊື່ຢ່າງຈະແຈ້ງ ໃສ່ໃນຜົນງານທີ່ຕົນເອງໄດ້ມີສ່ວນຮ່ວມສ້າງ ເວັ້ນເສຍແຕ່ມີເງື່ອນໄຂອື່ນ ທີ່ບໍ່ໃຫ້ບົ່ງຊື່ນັ້ນໄດ້.

ເຖິງວ່າໄດ້ກໍານົດໄວ້ໃນວັກ ໜຶ່ງ ຂອງມາດຕານີ້ກໍຕາມ ໃນກໍລະນີທີ່ບໍ່ໄດ້ມີການຕົກລົງກັນໄວ້ຢ່າງເປັນລາຍລັກອັກສອນ ຜູ້ຮ່ວມປະດິດແຕ່ງເຫຼົ່ານີ້ ກໍຈະບໍ່ມີສິດຄັດຄ້ານ ການຜະລິດຊໍ້າ, ການແຈກຢາຍ, ການສະແດງ, ການສື່ສານຜົນງານຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ, ການອອກອາກາດ ຫຼື ການສື່ສານ ໃນຮູບແບບອື່ນໆ ຫຼື ການແປເນື້ອໃນຄໍາເວົ້າ ຫຼື ການພາກສຽງເຂົ້າໃນຜົນງານ. ເນື້ອໃນຂອງວັກນີ້ ບໍ່ໃຫ້ນໍາໃຊ້ຕໍ່ຜູ້ສ້າງບົດຮູບເງົາ, ຜູ້ໃຫ້ສຽງປະກອບ ແລະ ຜູ້ສ້າງຜົນງານດ້ານດົນຕີ ເພື່ອປະກອບເຂົ້າໃນຮູບເງົາ ຫຼື ຕໍ່ຜູ້ອໍານວຍການສ້າງຮູບເງົາ.

**ມາດຕາ 101 ສິດດ້ານຈາລິຍະທໍາ**

ເຖິງວ່າ ຜູ້ປະດິດຄິດແຕ່ງ ຈະບໍ່ໄດ້ເປັນເຈົ້າຂອງສິດດ້ານເສດຖະກິດກໍຕາມ ແຕ່ຜູ້ປະດິດແຕ່ງນັ້ນ ຍັງມີສິດດ້ານຈາລິຍະທໍາ ດັ່ງນີ້:

1. ເປີດເຜີຍ ແລະ ເຜີຍແຜ່ຜົນງານ ຄັ້ງທໍາອິດ;
2. ອ້າງອີງດ້ວຍເຫດຜົນ:
   - 2.1 ເປັນຜູ້ປະດິດຄິດແຕ່ງຜົນງານ;
   - 2.2 ມີຊື່ ຂອງຕົນເອງ ເພື່ອສະແດງໃຫ້ເຫັນເວລາມີການນໍາໃຊ້ ຫຼື ຈັດພິມຜົນງານດັ່ງກ່າວ;
   - 2.3 ໃຊ້ນາມແຝງ ຫຼື ນາມປາກກາ ຫຼື ຈັດພິມຜົນງານ ໂດຍບໍ່ໃສ່ຊື່ຂອງຕົນ;
   - 2.4 ຄັດຄ້ານການໃສ່ຊື່ຜູ້ອື່ນ ໃນຜົນງານຂອງຕົນ;
   - 2.5 ຄັດຄ້ານການແອບອ້າງນໍາໃຊ້ຊື່ຂອງຕົນ ໄປໃສ່ຜົນງານອື່ນ ທີ່ຕົນບໍ່ໄດ້ເປັນຜູ້ປະດິດຄິດແຕ່ງ ຫຼື ຜົນງານທີ່ຜູ້ອື່ນໄດ້ດັດແກ້;
3. ຄັດຄ້ານການບິດເບືອນ, ການຕັດຕອນ, ການດັດແກ້ ຫຼື ການກະທໍາອື່ນຕໍ່ຜົນງານ ຊຶ່ງກໍ່ໃຫ້ເກີດຜົນເສຍຫາຍ ຕໍ່ກຽດ ຫຼື ຊື່ສຽງ ຂອງຜູ້ປະດິດຄິດແຕ່ງ.

ຜູ້ທີ່ບໍ່ແມ່ນຜູ້ປະດິດຄິດແຕ່ງຜົນງານ ແຕ່ໄດ້ນໍາໃຊ້ຊື່ຂອງຜູ້ກ່ຽວ ກໍຈະມີສິດເຊັ່ນດຽວກັນຕາມທີ່ໄດ້ກໍານົດໄວ້ໃນຂໍ້ 3 ຂອງມາດຕານີ້.

ສິດໃນການເປີດເຜີຍ ແລະ ເຜີຍແຜ່ຄັ້ງທໍາອິດ ເປັນຂອງຜູ້ປະດິດຄິດແຕ່ງຕະຫຼອດຊີວິດ ເວັ້ນເສຍແຕ່ຜູ້ກ່ຽວ ຫາກໄດ້ມອບສິດນີ້ຢ່າງເປັນລາຍລັກອັກສອນ ໃຫ້ຜູ້ອື່ນນໍາໃຊ້ຫຼັງຈາກການເສຍຊີວິດຂອງຕົນ. ສິດທີ່ໄດ້ກໍານົດໄວ້ໃນຂໍ້ 2.1, 2.2, 2.3 ແລະ ຂໍ້ 3 ຂອງມາດຕານີ້ ຈະສືບຕໍ່ໄປຈົນກວ່າສິດດ້ານເສດຖະກິດ ຂອງຜູ້ປະດິດຄິດແຕ່ງສິ້ນສຸດລົງ. ສ່ວນສິດທີ່ໄດ້ກໍານົດໄວ້ໃນຂໍ້ 2.4, 2.5 ແລະ ວັກ 2 ຂອງມາດຕານີ້ ບຸກຄົນທີ່ມີສ່ວນກ່ຽວຂ້ອງກັບສິດດັ່ງກ່າວ ສາມາດນໍາໃຊ້ສິດນັ້ນ ໂດຍບໍ່ມີກໍານົດເວລາ.

**ມາດຕາ 102 ສິດດ້ານເສດຖະກິດ**

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ໃນຜົນງານດ້ານສິລະປະກຳ ຫຼື ວັນນະກຳ ມີສິດແຕ່ພຽງຜູ້ດຽວ ໃນການດຳເນີນ ຫຼື ການອະນຸຍາດ ໃຫ້ດຳເນີນການຕ່າງໆ ກ່ຽວກັບຜົນງານຂອງຕົນ ດັ່ງນີ້:

1. ສະສົມ ທ້ອນໂຮມຜົນງານ;

2. ຜະລິດຊ້ຳຜົນງານ ບໍ່ວ່າໃນລັກສະນະ ຫຼື ໃນຮູບແບບໃດກໍຕາມ ລວມທັງຈໍລະຈອນແຈກຢາຍສຳເນົາຜົນງານດັ່ງກ່າວ;

3. ແປຜົນງານ;

4. ກະຈາຍສຽງ-ແຜ່ພາບ ຂອງຜົນງານ;

5. ສື່ສານຜົນງານ ຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ຫຼື ດ້ວຍການກະຈາຍສຽງ-ແຜ່ພາບຊ້ຳ ຜົນງານ;

6. ສື່ສານ ຜົນງານການກະຈາຍສຽງ-ແຜ່ພາບ ຕໍ່ສາທາລະນະຊົນ ດ້ວຍໂທລະໂຄ່ງ ຫຼື ເຄື່ອງມືຮັບສັນຍານ ດ້ວຍລະບົບທີ່ຄ້າຍຄືກັນ, ດ້ວຍສັນຍານ, ດ້ວຍສຽງ ຫຼື ພາບ.

ໃນກໍລະນີ ບໍ່ມີການກຳນົດໃນທາງກົງກັນຂ້າມ ການອະນຸຍາດທີ່ໄດ້ໃຫ້ຕາມຂໍ້ 4 ຂອງມາດຕານີ້ ຈະບໍ່ຖືວ່າເປັນການອະນຸຍາດໃຫ້ບັນທຶກ ດ້ວຍເຄື່ອງບັນທຶກສຽງ ຫຼື ພາບ ຕໍ່ຜົນງານການກະຈາຍສຽງ-ແຜ່ພາບ.

ສຳລັບຜົນງານດ້ານວັນນະກຳ ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດແຕ່ພຽງຜູ້ດຽວ ໃນການດຳເນີນ ຫຼື ການອະນຸຍາດ ໃຫ້ດຳເນີນການຕ່າງໆ ກ່ຽວກັບຜົນງານຂອງຕົນ ດັ່ງນີ້:

1. ເລົ່າຜົນງານ ຕໍ່ສາທາລະນະຊົນ ດ້ວຍວິທີການ ຫຼື ຂະບວນການໃດໜຶ່ງ;

2. ສື່ສານຜົນງານ ຕໍ່ສາທາລະນະຊົນ ດ້ວຍການເລົ່າຄືນຜົນງານ ຫຼື ດ້ວຍວິທີການສື່ສານອື່ນໃດໜຶ່ງ;

3. ແປການເລົ່າຄືນຜົນງານ.

ສຳລັບການສະແດງລະຄອນ, ລະຄອນ-ດົນຕີ ແລະ ຜົນງານດ້ານດົນຕີນັ້ນ ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດແຕ່ພຽງຜູ້ດຽວໃນການດຳເນີນ ຫຼື ການອະນຸຍາດ ໃຫ້ດຳເນີນການຕ່າງໆ ກ່ຽວກັບຜົນງານຂອງຕົນ ດັ່ງນີ້:

1. ສະແດງຜົນງານຕໍ່ ສາທາລະນະຊົນ ລວມທັງການສະແດງຜົນງານ ດ້ວຍວິທີການ ຫຼື ຂະບວນການໃດໜຶ່ງ;

2. ສື່ສານຜົນງານການສະແດງ ຕໍ່ສາທາລະນະຊົນ;

3. ແປຜົນງານການສະແດງ.

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດແຕ່ພຽງຜູ້ດຽວໃນການດຳເນີນ ຫຼື ການອະນຸຍາດ ໃຫ້ດັດແກ້, ປັບປຸງ ຫຼື ຈັດລຽງຜົນງານຂອງຕົນ ດັ່ງນີ້:

1. ດັດແກ້ຜົນງານດ້ານຮູບເງົາ-ລະຄອນ ແລະ ຜະລິດຊ້ຳຜົນງານດ້ານສິລະປະກຳ ຫຼື ວັນນະກຳ ແລະ ແຈກຢາຍຜົນງານ ທີ່ໄດ້ດັດແກ້ ຫຼື ໄດ້ຜະລິດຊ້ຳ;

2. ສະແດງ ຫຼື ສື່ສານ ຕໍ່ສາທາລະນະຊົນ ດ້ວຍລະບົບການສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ຫຼື ຜົນງານທີ່ໄດ້ຮັບການດັດແກ້ ຫຼື ໄດ້ຜະລິດຊ້ຳ.

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດແຕ່ພຽງຜູ້ດຽວໃນການດຳເນີນ ຫຼື ການອະນຸຍາດ ຫຼື ບໍ່ອະນຸຍາດໃຫ້:

1. ຜະລິດຊ້ຳ ທັງທາງກົງ ແລະ ທາງອ້ອມ ທັງໝົດ ຫຼື ບາງສ່ວນ ຂອງຜົນງານການບັນທຶກສຽງ, ໂປຣແກຣມຄອມພິວເຕີ ຫຼື ການລວບລວມຂໍ້ມູນ ຫຼື ສິ່ງອື່ນໆ;

2. ນຳເຂົ້າມາຍັງ ສປປ ລາວ ສຳເນົາຜົນງານການບັນທຶກສຽງ ເຖິງວ່າຜູ້ຖືສິດທີ່ກ່ຽວຂ້ອງ ໄດ້ຈຳໜ່າຍສຳເນົາດັ່ງກ່າວ ຢູ່ຕ່າງປະເທດແລ້ວກໍຕາມ;

3. ແຈກຢາຍຜົນງານຕົ້ນສະບັບ ແລະ ສຳເນົາການບັນທຶກສຽງແຕ່ລະອັນ ໃຫ້ສາທາລະນະຊົນດ້ວຍທຳລິດ ດ້ວຍການຂາຍ, ການໃຫ້ເຊົ່າ ຫຼື ດ້ວຍວິທີການອື່ນ;

4. ໃຫ້ເຊົ່າ ຫຼື ໃຫ້ຢືມ ຕົ້ນສະບັບ ຫຼື ສຳເນົາ ຜົນງານດ້ານສຽງ-ພາບ, ຜົນງານການບັນທຶກສຽງ ຫຼື ຜົນງານດ້ານດົນຕີທີ່ຢູ່ໃນຮູບແບບຂອງໂນດເພງ ເພື່ອຜົນປະໂຫຍດທັງທາງກົງ ແລະ ທາງອ້ອມ ດ້ານການຄ້າ;

5. ນຳໃຊ້ສິດທີ່ໄດ້ກຳນົດໄວ້ໃນຂໍ້ 4 ຂອງວັກນີ້ ສຳລັບໂປຣແກຣມຄອມພິວເຕີ ຫຼື ຖານຂໍ້ມູນ ຍົກເວັ້ນໃນກໍລະນີ ສຳເນົາໂປຣແກຣມຄອມພິວເຕີ ຫາກບໍ່ແມ່ນເປົ້າໝາຍຕົ້ນຕໍຂອງການໃຫ້ເຊົ່າ. ການເອົາຕົ້ນສະບັບ ຫຼື ສຳເນົາໂປຣແກຣມຄອມພິວເຕີໄປຕ່າງປະເທດ ດ້ວຍການເຫັນດີຂອງຜູ້ຖືສິດ ຈະບໍ່ເຮັດໃຫ້ສິດໃນການໃຫ້ເຊົ່ານັ້ນ ໝົດໄປ.

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດແຕ່ພຽງຜູ້ດຽວໃນການດຳເນີນ ຫຼື ການອະນຸຍາດ ໃຫ້ນຳເຂົ້າ ຫຼື ສົ່ງອອກຜົນງານຕົ້ນສະບັບ ຫຼື ສຳເນົາຜົນງານໃດໜຶ່ງ. ສິດດັ່ງກ່າວ ບໍ່ສາມາດສະກັດກັ້ນການນຳເຂົ້າ ຫຼື ການສົ່ງອອກຜົນງານຕົ້ນສະບັບ ຫຼື ສຳເນົາຜົນງານ ຊຶ່ງໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ດ້ວຍການອະນຸຍາດຈາກເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ;

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ຜົນງານດ້ານສິລະປະກຳ ຫຼື ວັນນະກຳ ມີສິດແຕ່ພຽງຜູ້ດຽວໃນການດຳເນີນ ຫຼື ການອະນຸຍາດໃຫ້:

1. ດັດແກ້ ຫຼື ຜະລິດຊ້ຳຜົນງານດ້ານຮູບເງົາ ແລະ ສິດໃນການແຈກຢາຍຜົນງານດັ່ງກ່າວ ທີ່ໄດ້ມີການດັດແກ້ ຫຼື ໄດ້ຜະລິດຊ້ຳ;

2. ສະແດງ ຫຼື ສື່ສານຜົນງານທີ່ໄດ້ດັດແກ້ ຫຼື ຜະລິດຊ້ຳຜົນງານດ້ານຮູບເງົາ ຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ.

ການດັດແກ້ການຜະລິດຜົນງານດ້ານຮູບເງົາ ໃຫ້ເປັນຮູບແບບດ້ານສິລະປະກຳອື່ນ ທີ່ໄດ້ມາຈາກຜົນງານດ້ານສິລະປະກຳ ຫຼື ວັນນະກຳ ໂດຍບໍ່ສ້າງຄວາມເສຍຫາຍຕໍ່ສິດຂອງຜູ້ໃຫ້ອະນຸຍາດຜົນງານການສ້າງຮູບເງົາ ຕ້ອງຂໍອະນຸຍາດນຳເຈົ້າຂອງຜົນງານຕົ້ນສະບັບ.

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ຂອງຜົນງານດ້ານວັນນະກຳ, ລະຄອນ, ລະຄອນ-ດົນຕີ, ຜົນງານດ້ານດົນຕີ, ການເຕັ້ນ, ລະຄອນກິກ, ພາບບໍ່ເຄື່ອນໄຫວ ຫຼື ຜົນງານດ້ານສຽງ-ພາບ ລວມທັງຮູບພາບ, ພາບບໍ່ເຄື່ອນໄຫວ ຫຼື ຜົນງານດ້ານສຽງ-ພາບອື່ນໆ ຂອງບຸກຄົນ ມີສິດແຕ່ພຽງຜູ້ດຽວ ໃນການດຳເນີນ ຫຼື ການອະນຸຍາດໃຫ້:

1. ສະແດງຜົນງານ ຕໍ່ສາທາລະນະຊົນດ້ວຍວິທີການ ຫຼື ຂະບວນການໃດໜຶ່ງ ໂດຍສະເພາະ ເມື່ອມີການບັນທຶກສຽງ ເພື່ອສະແດງຜົນງານທີ່ມີລິຂະສິດ ດ້ວຍວິທີການຖ່າຍທອດສຽງທາງລະບົບດິຈິຕອນ;

2. ສື່ສານຜົນງານຕໍ່ສາທາລະນະຊົນດ້ວຍວິທີການໃດໜຶ່ງ;

3. ແປຜົນງານການສະແດງ.

### ມາດຕາ 103 ການລະເມີດສິດດ້ານຈາລິຍະທຳ ແລະ ສິດດ້ານເສດຖະກິດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ບໍ່ສາມາດດຳເນີນການໃດໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 101 ຂອງກົດໝາຍສະບັບນີ້ ຖ້າບໍ່ໄດ້ຮັບອະນຸຍາດ ຈາກຜູ້ປະດິດຄິດແຕ່ງ, ການດຳເນີນການທີ່ບໍ່ໄດ້ຮັບອະນຸຍາດ ຈະຖືເປັນການລະເມີດສິດດ້ານຈາລິຍະທຳ ຂອງຜູ້ປະດິດຄິດແຕ່ງ ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ເປັນຢ່າງອື່ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ບໍ່ສາມາດດຳເນີນການໃດໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 102 ຂອງກົດໝາຍສະບັບນີ້ ຖ້າບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງລິຂະສິດ. ການດຳເນີນການທີ່ບໍ່ໄດ້ຮັບອະນຸຍາດ ຈະຖືເປັນການລະເມີດສິດດ້ານເສດຖະກິດຂອງເຈົ້າຂອງລິຂະສິດ ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ເປັນຢ່າງອື່ນ.

ຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ມີສິດປົກປ້ອງຜົນປະໂຫຍດຂອງຕົນ ຕາມກົດໝາຍ ຈາກການລະເມີດສິດ ດ້ານຈາລິຍະທຳ ຫຼື ດ້ານເສດຖະກິດ ເຊັ່ນ ສິດໃນການຮ້ອງຟ້ອງ, ສິດໃນການໄດ້ຮັບການຊົດເຊີຍຈາກຄວາມເສຍຫາຍ ທີ່ຜູ້ອື່ນໄດ້ກໍ່ຂຶ້ນ.

## ມາດຕາ 104 ລິຂະສິດຕໍ່ໂປຣແກຣມຄອມພິວເຕີ ແລະ ການລວບລວມຂໍ້ມູນ

ໂປຣແກຣມຄອມພິວເຕີ ແມ່ນ ຊຸດຄຳສັ່ງ ຫຼື ສິ່ງໃດໜຶ່ງ ທີ່ນຳໄປໃຊ້ກັບເຄື່ອງຄອມພິວເຕີ ເພື່ອຮັດໃຫ້ເຄື່ອງນັ້ນທຳງານ ຫຼື ເພື່ອໃຫ້ໄດ້ຮັບຜົນຢ່າງໃດຢ່າງໜຶ່ງ ບໍ່ວ່າພາສາໂປຣແກຣມຄອມພິວເຕີ ຈະມີລັກສະນະໃດກໍຕາມ ຈະໄດ້ຮັບການປົກປ້ອງຄືກັນກັບຜົນງານດ້ານວັນນະກຳ ຈະຢູ່ໃນຮູບແບບພາສາຕົ້ນກຳເນີດ (Source code) ຫຼື ພາສາວັດຖຸ (Object code) ກໍໄດ້.

ການລວບລວມຂໍ້ມູນ ແມ່ນ ການທ້ອນໂຮມຂໍ້ມູນ ຫຼື ວັດຖຸອື່ນ ບໍ່ວ່າຈະອ່ານດ້ວຍເຄື່ອງຈັກ ຫຼື ໃນຮູບແບບອື່ນ ຊຶ່ງເຫດຜົນໃນການຄັດເລືອກ ຫຼື ການຈັດລຽງເນື້ອໃນ ແມ່ນເພື່ອປະກອບເຂົ້າກັນໃຫ້ເປັນການປະດິດແຕ່ງທາງປັນຍາ ທີ່ຈະໄດ້ຮັບການປົກປ້ອງຄືກັນກັບຜົນງານດ້ານວັນນະກຳ. ການປົກປ້ອງລິຂະສິດຂອງການລວບລວມຂໍ້ມູນ ບໍ່ໃຫ້ກວມເອົາຂໍ້ມູນ ຫຼື ວັດຖຸນັ້ນເອງ ແລະ ບໍ່ສ້າງຜົນເສຍຫາຍ ຕໍ່ລິຂະສິດຂອງຂໍ້ມູນ ຫຼື ວັດຖຸນັ້ນ.

## ມາດຕາ 105 ຜົນງານທີ່ໄດ້ມາຈາກຜົນງານດ້ານ ສິລະປະກຳ ຫຼື ວັນນະກຳພື້ນເມືອງ

ຜົນງານທີ່ໄດ້ມາຈາກຜົນງານດ້ານສິລະປະກຳ ຫຼື ວັນນະກຳພື້ນເມືອງ ຈະໄດ້ຮັບການປົກປ້ອງລິຂະສິດ ໂດຍບໍ່ແຕະຕ້ອງສິດຂອງຜູ້ອື່ນ ໃນການສ້າງຜົນງານຕົ້ນສະບັບ ຈາກຜົນງານດ້ານສິລະປະກຳ ຫຼື ວັນນະກຳພື້ນເມືອງອັນດຽວກັນ ແລະ ໃນການສືບຕໍ່ສະແຫວງຫາຜົນປະໂຫຍດ ຈາກຜົນງານດ້ານສິລະປະກຳ ຫຼື ວັນນະກຳພື້ນເມືອງດັ່ງກ່າວ.

ການສະສົມຜົນງານດ້ານສິລະປະກຳ ຫຼື ວັນນະກຳພື້ນເມືອງ ຈະໄດ້ຮັບການປົກປ້ອງລິຂະສິດ ໂດຍບໍ່ແຕະຕ້ອງສິດຂອງຜູ້ອື່ນ ໃນການສະສົມຜົນງານ ທີ່ຄ້າຍຄືກັນ ຫຼື ສືບຕໍ່ບອກເລົ່າເລື່ອງ ຫຼື ຜະລິດຊ້ຳ, ປັບປຸງ ຫຼື ຂາຍຜົນງານພື້ນເມືອງ ຢູ່ໃນການສະສົມດັ່ງກ່າວ.

# ໝວດທີ 5
# ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ

## ມາດຕາ 106 ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ

ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ຜູ້ສະແດງ;
2. ຜູ້ຜະລິດການບັນທຶກສຽງ;
3. ຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ.

**ມາດຕາ 107 ສິດດ້ານຈາລິຍະທຳຂອງຜູ້ສະແດງ**

ໂດຍບໍ່ຂຶ້ນກັບສິດດ້ານເສດຖະກິດຂອງຜູ້ສະແດງ ເຖິງວ່າຫຼັງຈາກຜູ້ສະແດງໄດ້ໂອນສິດດັ່ງກ່າວແລ້ວກໍຕາມ ໂດຍອີງໃສ່ການສະແດງສົດ ຂອງຜູ້ກ່ຽວ ຫຼື ການສະແດງທີ່ມີການບັນທຶກສຽງ, ຜູ້ກ່ຽວຍັງມີສິດ ທີ່ຈະອ້າງເຖິງສິດໃນການສະແດງຂອງຕົນ, ເວັ້ນເສຍແຕ່ບໍ່ສາມາດບົ່ງຊີ້ຜູ້ສະແດງໄດ້ ແລະ ຄັດຄ້ານການບິດເບືອນ, ການຕັດອອກ ຫຼື ການດັດແກ້ອື່ນ ຕໍ່ການສະແດງຂອງຕົນ ຊຶ່ງຈະສ້າງຄວາມເສື່ອມເສຍຕໍ່ກຽດ ແລະ ຊື່ສຽງ ຂອງຜູ້ສະແດງ.

ພາຍຫຼັງຜູ້ສະແດງໄດ້ເສຍຊີວິດແລ້ວ ສິດດ້ານຈາລິຍະທຳຂອງຜູ້ກ່ຽວ ກໍຈະຮັກສາໄວ້ຈົນກວ່າສິດດ້ານເສດຖະກິດຈະສິ້ນສຸດລົງ ແລະ ຜູ້ສືບທອດຂອງຜູ້ກ່ຽວ ກໍຈະສາມາດນຳໃຊ້ໄດ້ ຖ້າຫາກຜູ້ກ່ຽວບໍ່ໄດ້ມອບສິດດັ່ງກ່າວໃຫ້ຄົນອື່ນ.

**ມາດຕາ 108 ສິດດ້ານເສດຖະກິດຂອງຜູ້ສະແດງ**

ຜູ້ສະແດງ ມີສິດແຕ່ພຽງຜູ້ດຽວ ໃນການກະທຳ ດັ່ງນີ້:

1. ການສະແດງສົດ:

1.1. ການກະຈາຍສຽງ-ແຜ່ພາບ ແລະ ການສື່ສານ ການສະແດງສົດ ຕໍ່ສາທາລະນະຊົນ, ເວັ້ນເສຍແຕ່ການສະແດງນັ້ນ ໄດ້ມີການກະຈາຍສຽງ-ແຜ່ພາບ ແລ້ວ;

1.2. ການບັນທຶກ ການສະແດງສົດ.

2. ການຜະລິດຊ້ຳການສະແດງ ທີ່ໄດ້ບັນທຶກສຽງ ທັງທາງກົງ ແລະ ທາງອ້ອມ ດ້ວຍລັກສະນະ ຫຼື ຮູບແບບໃດໜຶ່ງ;

3. ການເຮັດໃຫ້ສາທາລະນະຊົນ ສາມາດເຂົ້າເຖິງການສະແດງທີ່ໄດ້ບັນທຶກສຽງ ສະບັບຕົ້ນ ຫຼື ສະບັບສຳເນົາ ໂດຍຜ່ານການຂາຍ ຫຼື ໂອນກຳມະສິດ ແຕ່ສິດດັ່ງກ່າວບໍ່ກວມເອົາການຂາຍ ຫຼື ການໂອນກຳມະສິດ ຕໍ່ການສະແດງທີ່ເປັນສະບັບຕົ້ນ ແລະ ສະບັບສຳເນົາອັນດຽວກັນ ພາຍຫຼັງທີ່ໄດ້ຂາຍຢ່າງຖືກຕ້ອງຕາມກົດໝາຍ ຫຼື ໄດ້ຖືກໂອນຕາມການອະນຸຍາດຂອງຜູ້ສະແດງ;

4. ການໃຫ້ເຊົ່າ ສະບັບຕົ້ນ ແລະ ສະບັບສຳເນົາຂອງການສະແດງ ທີ່ໄດ້ບັນທຶກສຽງ ແກ່ສາທາລະນະຊົນ ເພື່ອຜົນປະໂຫຍດທາງການຄ້າ ເຖິງວ່າຜູ້ສະແດງໄດ້ແຈກຢາຍ ຫຼື ອະນຸຍາດໃຫ້ແຈກຢາຍ ການບັນທຶກສຽງແລ້ວກໍຕາມ;

5. ການເຮັດໃຫ້ສາທາລະນະຊົນ ສາມາດເຂົ້າເຖິງການສະແດງ ທີ່ໄດ້ບັນທຶກສຽງ ໂດຍຜ່ານລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ຈາກສະຖານທີ່ ແລະ ໃນເວລາທີ່ສາທາລະນະຊົນ ສາມາດເລືອກເອົາເອງໄດ້;

6. ການໂອນສິດ ກ່ຽວກັບຜົນງານການສະແດງຂອງຕົນຢ່າງເສລີ ດ້ວຍສັນຍາ ຫຼື ການສືບທອດມູນມໍລະດົກ.

**ມາດຕາ 109 ສິດຂອງຜູ້ຜະລິດການບັນທຶກສຽງ**

ຜູ້ຜະລິດການບັນທຶກສຽງ ມີສິດແຕ່ພຽງຜູ້ດຽວ ໃນການກະທຳ ດັ່ງນີ້:

1. ການຜະລິດຊ້ຳການບັນທຶກສຽງ ທັງທາງກົງ ແລະ ທາງອ້ອມ ດ້ວຍລັກສະນະ ຫຼື ຮູບແບບໃດໜຶ່ງ;

2. ການເຮັດໃຫ້ສາທາລະນະຊົນ ສາມາດເຂົ້າເຖິງການບັນທຶກສຽງ ສະບັບຕົ້ນ ຫຼື ສະບັບສຳເນົາ ໂດຍຜ່ານການຂາຍ ຫຼື ໂອນກຳມະສິດ ແຕ່ສິດດັ່ງກ່າວບໍ່ກວມເອົາການຂາຍ ຫຼື ການໂອນກຳມະສິດ ຕໍ່ການບັນທຶກ

ສຽງ ທີ່ເປັນສະບັບຕົ້ນ ແລະ ສະບັບສຳເນົາ ອັນດຽວກັນ ພາຍຫຼັງທີ່ໄດ້ຂາຍຢ່າງຖືກຕ້ອງຕາມກົດໝາຍ ຫຼື ໄດ້ໂອນຕາມການອະນຸຍາດຂອງຜູ້ຜະລິດການບັນທຶກສຽງ;

3. ການໃຫ້ເຊົ່າ ສະບັບຕົ້ນ ແລະ ສະບັບສຳເນົາ ຂອງການບັນທຶກສຽງ ແກ່ສາທາລະນະຊົນ ເພື່ອຜົນປະໂຫຍດທາງການຄ້າ ເຖິງວ່າຜູ້ຜະລິດການບັນທຶກສຽງ ໄດ້ແຈກຢາຍ ຫຼື ອະນຸຍາດໃຫ້ແຈກຢາຍ ການບັນທຶກສຽງ ແລ້ວກໍຕາມ;

4. ການເຮັດໃຫ້ສາທາລະນະຊົນ ສາມາດເຂົ້າເຖິງການບັນທຶກສຽງ ໂດຍຜ່ານລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ຈາກສະຖານທີ່ ແລະ ໃນເວລາທີ່ສາທາລະນະຊົນ ສາມາດເລືອກເອົາເອງໄດ້;

5. ການໂອນສິດ ກ່ຽວກັບການບັນທຶກສຽງ ຂອງຕົນຢ່າງເສລີ ດ້ວຍສັນຍາ ຫຼື ການສືບທອດມູນມໍລະດົກ.

## ມາດຕາ 110 ສິດຂອງຜູ້ສະແດງ ແລະ ຜູ້ຜະລິດການບັນທຶກສຽງ ໃນການໄດ້ຮັບຄ່າຕອບແທນ

ຜູ້ສະແດງ ແລະ ຜູ້ຜະລິດການບັນທຶກສຽງ ມີສິດໄດ້ຮັບຄ່າຕອບແທນຢ່າງເໝາະສົມຄັ້ງດຽວ ສໍາລັບການນໍາໃຊ້ການບັນທຶກສຽງ ທັງທາງກົງ ແລະ ທາງອ້ອມ ທີ່ໄດ້ນໍາອອກເຜີຍແຜ່ ເພື່ອຈຸດປະສົງທາງການຄ້າ ກ່ຽວກັບການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານໃດໜຶ່ງ ຕໍ່ສາທາລະນະຊົນ. ການບັນທຶກສຽງ ທີ່ສາມາດເຂົ້າເຖິງໄດ້ໂດຍຜ່ານລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ຈາກສະຖານທີ່ ແລະ ໃນເວລາທີ່ສາທາລະນະຊົນ ສາມາດເລືອກເອົາເອງໄດ້ ຈະຖືວ່າເປັນການເຜີຍແຜ່ ເພື່ອຈຸດປະສົງທາງການຄ້າ.

ສໍາລັບຄ່າຕອບແທນນັ້ນ ແມ່ນ ຂຶ້ນກັບການຕົກລົງລະຫວ່າງ ຜູ້ສະແດງກັບຜູ້ຜະລິດການບັນທຶກສຽງ.

## ມາດຕາ 111 (ປັບປຸງ) ສິດຂອງຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ

ຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ ມີສິດແຕ່ພຽງຜູ້ດຽວ ໃນການອະນຸຍາດໃຫ້ດໍາເນີນການຕ່າງໆ ດັ່ງນີ້:

1. ການບັນທຶກ ການກະຈາຍສຽງ-ແຜ່ພາບຂອງຕົນ;
2. ການຜະລິດຊໍ້າ ການບັນທຶກຂອງການກະຈາຍສຽງ-ແຜ່ພາບຂອງຕົນ;
3. ການກະຈາຍສຽງ-ແຜ່ພາບຊໍ້າ ຂອງການກະຈາຍສຽງ-ແຜ່ພາບ ດ້ວຍລະບົບສື່ສານທີ່ບໍ່ໃຊ້ສາຍ;
4. ການສື່ສານ ການກະຈາຍສຽງ-ແຜ່ພາບ ຕໍ່ສາທາລະນະຊົນທາງໂທລະພາບ;
5. ການໂອນສິດ ຕໍ່ການກະຈາຍສຽງ-ແຜ່ພາບ ຂອງຕົນຢ່າງເສລີ ດ້ວຍສັນຍາ ຫຼື ການສືບທອດມູນມໍລະດົກ.

ສໍາລັບຄ່າຕອບແທນນັ້ນ ແມ່ນ ຂຶ້ນກັບການຕົກລົງລະຫວ່າງຜູ້ຜະລິດການບັນທຶກສຽງ ແລະ ຜູ້ກະຈາຍສຽງ-ແຜ່ພາບ ຫຼື ອົງການກະຈາຍສຽງ-ແຜ່ພາບ.

## ມາດຕາ 112 ການລະເມີດສິດກ່ຽວຂ້ອງກັບລິຂະສິດ

ຂໍ້ບັງຄັບ ທີ່ໄດ້ກໍານົດໄວ້ໃນມາດຕາ 103 ຂອງກົດໝາຍສະບັບນີ້ ສາມາດປະຕິບັດຄືກັນກັບສິດກ່ຽວຂ້ອງກັບລິຂະສິດຂອງຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ-ພາບ, ຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 107, 108, 109, 110 ແລະ 111 ຂອງກົດໝາຍສະບັບນີ້.

## ໝວດທີ 6
## ອາຍຸການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 113 ອາຍຸການປົກປ້ອງລິຂະສິດ

ອາຍຸການປົກປ້ອງລິຂະສິດ ໃຫ້ນັບແຕ່ວັນປະດິດຄິດແຕ່ງຜົນງານຂຶ້ນ ແລະ ສືບຕໍ່ໄປຈົນຮອດວັນສຸດທ້າຍ ຂອງປີປະຕິທິນ ດັ່ງນີ້:

1. ຫ້າສິບປີ ຫຼັງຈາກວັນເສຍຊີວິດຂອງຜູ້ປະດິດຄິດແຕ່ງ ຫຼື ໃນກໍລະນີ ທີ່ຜູ້ປະດິດຄິດແຕ່ງ ມີຫຼາຍຄົນຮ່ວມກັນ ແມ່ນ ຫ້າສິບປີ ຫຼັງຈາກວັນເສຍຊີວິດຂອງຜູ້ຮ່ວມປະດິດຄິດແຕ່ງຜູ້ສຸດທ້າຍ, ເວັ້ນເສຍແຕ່ໄດ້ກຳນົດໄວ້ເປັນຢ່າງອື່ນ;

2. ຫ້າສິບປີ ນັບແຕ່ວັນທີ່ຜົນງານໄດ້ມີການເຜີຍແຜ່ ຢ່າງຖືກຕ້ອງຕາມກົດໝາຍເປັນຕົ້ນໄປ ສຳລັບຜົນງານທີ່ໃຊ້ນາມແຝງ ຫຼື ນາມປາກກາ, ແຕ່ອາຍຸການປົກປ້ອງນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຖ້າຫາກວ່າ:

2.1 ນາມແຝງ ຫຼື ນາມປາກກາ ໄດ້ຖືກນຳໃຊ້ ໂດຍຜູ້ປະດິດຄິດແຕ່ງ ຊຶ່ງຮູ້ແນ່ນອນວ່າແມ່ນຜູ້ກ່ຽວເອງ;

2.2 ເຈົ້າຂອງຜົນງານ ທີ່ໃຊ້ນາມແຝງ ຫຼື ນາມປາກກາ ໄດ້ເປີດເຜີຍຕົນເອງ ໃນໄລຍະທີ່ໄດ້ກຳນົດໄວ້ນັ້ນ.

3. ຫ້າສິບປີ ນັບແຕ່ວັນທີ່ຜົນງານໄດ້ຖືກເຜີຍແຜ່ສູ່ສາທາລະນະຊົນຄັ້ງທຳອິດ ສຳລັບຜົນງານທາງດ້ານຮູບເງົາ ໂດຍການເຫັນດີຂອງເຈົ້າຂອງຜົນງານ, ແຕ່ຖ້າຫາກບໍ່ໄດ້ມີການເຜີຍແຜ່ຜົນງານນັ້ນ ພາຍໃນໄລຍະເວລາຫ້າສິບປີ ນັບແຕ່ວັນທີ່ສ້າງຜົນງານ ອາຍຸການປົກປ້ອງ ແມ່ນ ຫ້າສິບປີ ນັບແຕ່ວັນທີ່ສ້າງຜົນງານດັ່ງກ່າວ;

4. ຊາວຫ້າປີ ນັບແຕ່ວັນສ້າງຜົນງານ ສຳລັບສິລະປະນຳໃຊ້ ແລະ ຮູບຖ່າຍ.

ໃນກໍລະນີ ທີ່ມີສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫຼື ສັນຍາ ທີ່ໄດ້ຮ່ວມເຊັນນຳກັນ ອາຍຸການປົກປ້ອງລິຂະສິດແມ່ນໃຫ້ປະຕິບັດຕາມສົນທິສັນຍາ ຫຼື ສັນຍານັ້ນ.

### ມາດຕາ 114 (ປັບປຸງ) ອາຍຸການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ

ອາຍຸການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ຫ້າສິບປີ ນັບແຕ່ວັນມີການສະແດງເປັນຕົ້ນໄປ ສຳລັບຜູ້ສະແດງ ຊຶ່ງການສະແດງນັ້ນໄດ້ບັນທຶກສຽງ ແລະ ຈະສິ້ນສຸດລົງພາຍໃນວັນສຸດທ້າຍ ຂອງປີປະຕິທິນ;

2. ຫ້າສິບປີ ນັບແຕ່ວັນມີການບັນທຶກສຽງ ຄັ້ງທຳອິດເປັນຕົ້ນໄປ ສຳລັບຜູ້ຜະລິດ ການບັນທຶກສຽງ ແລະ ຈະສິ້ນສຸດລົງພາຍໃນວັນສຸດທ້າຍຂອງປີປະຕິທິນ ຊຶ່ງການບັນທຶກສຽງນັ້ນໄດ້ມີການເຜີຍແຜ່ ຫຼື ໃນກໍລະນີ ທີ່ບໍ່ໄດ້ມີການເຜີຍແຜ່ຜົນງານນັ້ນ ໃນໄລຍະ ຫ້າສິບປີ ຈາກວັນບັນທຶກສຽງ, ອາຍຸການປົກປ້ອງການບັນທຶກສຽງນັ້ນ ຈະສິ້ນສຸດລົງພາຍໃນວັນສຸດທ້າຍ ຂອງປີປະຕິທິນຂອງປີທີ ຫ້າສິບ ຊຶ່ງໄດ້ມີການບັນທຶກສຽງແລ້ວ;

3. ຫ້າສິບປີ ນັບແຕ່ວັນກະຈາຍສຽງ-ແຜ່ພາບ ສຳລັບຜູ້ກະຈາຍສຽງ-ແຜ່ພາບ ແລະ ອົງການກະຈາຍສຽງ-ແຜ່ພາບ ແລະ ຈະສິ້ນສຸດລົງໃນວັນສຸດທ້າຍຂອງປີປະຕິທິນ ຂອງປີທີ ຫ້າສິບ ຊຶ່ງລາຍການໄດ້ມີການກະຈາຍສຽງ-ແຜ່ພາບ ຄັ້ງທຳອິດແລ້ວ.

## ໝວດທີ 7
## ການຈຳກັດ ແລະ ພັນທະ ຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ມາດຕາ 115 (ປັບປຸງ) ການກະທຳ ທີ່ສອດຄ່ອງກັບການນຳໃຊ້ທີ່ເໝາະສົມ

ການກະທຳ ທີ່ສາມາດດຳເນີນການໄດ້ ໂດຍບໍ່ຈຳເປັນຕ້ອງໃຫ້ເຈົ້າຂອງຜົນງານເຫັນດີ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ ມີ ດັ່ງນີ້:

1. ການອ້າງອີງຜົນງານ ທີ່ໄດ້ເປີດເຜີຍສູ່ສາທາລະນະຊົນແລ້ວ ຊຶ່ງສອດຄ່ອງກັບ ການນຳໃຊ້ທີ່ເໝາະສົມ ແລະ ຂອບເຂດ ຂອງການອ້າງອີງນັ້ນ ບໍ່ເໜືອຈາກເຫດຜົນທີ່ໄດ້ຊີ້ແຈງ ໃນຈຸດປະສົງ ລວມທັງການອ້າງອີງ ໃນໜັງສືພິມ ແລະ ວາລະສານຕ່າງໆ ໃນຮູບແບບການສະຫຼຸບຂ່າວ;

2. ການໃຊ້ປະໂຫຍດ ຂອງຜົນງານດ້ານ ສິລະປະກຳ ຫຼື ວັນນະກຳ ຢ່າງເໝາະສົມ ເພື່ອປະກອບໃສ່ສິ່ງພິມ, ການກະຈາຍສຽງ-ແຜ່ພາບ ຫຼື ການບັນທຶກສຽງ ຫຼື ພາບ ເພື່ອການສິດສອນ ຫຼື ການຄົ້ນຄວ້າວິທະຍາສາດ ແຕ່ການນຳໃຊ້ດັ່ງກ່າວ ບໍ່ໃຫ້ຂັດກັບທຳນຽມປະຕິບັດ;

3. ການຜະລິດຊ້ຳ ຮູບພາບຂອງຜົນງານດ້ານວິຈິດສິນ, ພາບຖ່າຍ ແລະ ຜົນງານ ດ້ານສິລະປະອື່ນໆ ແລະ ຜົນງານດ້ານສິລະປະປັບໃຊ້ ດ້ວຍການຖ່າຍຮູບ ຫຼື ການຖ່າຍຮູບເງົາ ແຕ່ຜົນງານດັ່ງກ່າວ ຕ້ອງໄດ້ຖືກເຜີຍແຜ່, ຖືກນຳສະເໜີສູ່ສາທາລະນະຊົນ ຫຼື ສື່ສານຕໍ່ສາທາລະນະຊົນໄດ້ຮູ້ກ່ອນແລ້ວ ຊຶ່ງການຜະລິດຊ້ຳດັ່ງກ່າວ ມີຜົນກະທົບໜ້ອຍທີ່ສຸດ ຕໍ່ຜົນງານດ້ານການຖ່າຍຮູບ ຫຼື ການຖ່າຍຮູບເງົາ ແລະ ບໍ່ແມ່ນຈຸດປະສົງ ຂອງຜົນງານດ້ານການຖ່າຍຮູບ ຫຼື ການຖ່າຍຮູບເງົາ;

4. ການແປຜົນງານດ້ານວັນນະກຳ ເປັນຕົວໜັງສືນູນ ຫຼື ເປັນຕົວໜັງສືອື່ນໆ ສຳລັບ ຄົນພິການທາງສາຍຕາ;

5. ການຜະລິດຊ້ຳໂປຣແກຣມຄອມພິວເຕີ ຊຶ່ງເກີດຂຶ້ນໃນໄລຍະການນຳໃຊ້ປົກກະຕິ ຂອງໂປຣແກຣມຄອມພິວເຕີ ແຕ່ການນຳໃຊ້ໂປຣແກຣມນັ້ນ ຕ້ອງສອດຄ່ອງກັບເງື່ອນໄຂ ກ່ຽວກັບການອະນຸຍາດ ຈາກເຈົ້າຂອງລິຂະສິດ;

6. ການຜະລິດຊ້ຳຜົນງານ ທີ່ໄດ້ບັນທຶກໄວ້ໃນສື່ເອເລັກໂຕຣນິກ ເພື່ອສຳຮອງ ຫຼື ເກັບຮັກສາຂໍ້ມູນ ຫຼື ເພື່ອປ່ຽນແທນຜົນງານ ທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ ທີ່ສູນຫາຍ, ຖືກທຳລາຍ ຫຼື ໃຊ້ບໍ່ໄດ້.

ໃນການນຳໃຊ້ຜົນງານ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ 2 ຂອງມາດຕານີ້ ຕ້ອງໄດ້ບົ່ງບອກທີ່ມາ ແລະ ຊື່ຂອງເຈົ້າຂອງຜົນງານ.

ການກະທຳ ທີ່ສາມາດດຳເນີນການໄດ້ ໂດຍບໍ່ຈຳເປັນຕ້ອງໃຫ້ເຈົ້າຂອງຜົນງານເຫັນດີ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ ແຕ່ຕ້ອງໃຫ້ສອດຄ່ອງກັບການນຳໃຊ້ທີ່ເໝາະສົມ ພ້ອມທັງບົ່ງບອກທີ່ມາຂອງການຜະລິດຊ້ຳ ບົດຄວາມຕ່າງໆ ກ່ຽວກັບເສດຖະກິດ, ການເມືອງ ຫຼື ສາສະໜາ ໂດຍສື່, ດ້ວຍການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານຕໍ່ສາທາລະນະຊົນ ດ້ວຍການໃຊ້ສາຍທີ່ໄດ້ເຜີຍແຜ່ໃນໜັງສືພິມ ຫຼື ວາລະສານ.

ຜົນງານດ້ານສິລະປະກຳ ຫຼື ວັນນະກຳ ທີ່ໄດ້ເຫັນ ຫຼື ໄດ້ຍິນໃນເຫດການກຳລັງເກີດຂຶ້ນ ສາມາດຜະລິດຊ້ຳ ແລະ ເຜີຍແຜ່ ຕໍ່ສາທາລະນະຊົນໄດ້ ເພື່ອລາຍງານເຫດການດັ່ງກ່າວ ດ້ວຍການຖ່າຍຮູບ, ການຖ່າຍຮູບເງົາ, ການກະຈາຍສຽງ-ແຜ່ພາບ ຫຼື ການສື່ສານຕໍ່ສາທາລະນະຊົນ ດ້ວຍການໃຊ້ສາຍ.

ການກະທຳເຫຼົ່ານີ້ ຕ້ອງບໍ່ຂັດກັບການສະແຫວງຫາຜົນປະໂຫຍດປົກກະຕິຂອງຜົນງານ ແລະ ຕ້ອງບໍ່ສ້າງຜົນເສຍຫາຍຢ່າງບໍ່ເໝາະສົມ ຕໍ່ຜົນປະໂຫຍດອັນຊອບທຳຂອງຜູ້ຖືສິດ.

ການຈະກຳນົດວ່າ ການນຳໃຊ້ໃດໜຶ່ງ ເປັນການນຳໃຊ້ທີ່ເໝາະສົມ ຫຼື ບໍ່ນັ້ນ ຕ້ອງອີງຕາມສະພາບການຕົວຈິງ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ການກຳນົດໃນມາດຕານີ້ ບໍ່ສາມາດປະຕິບັດໄດ້ ສຳລັບ:

1. ການຜະລິດຊໍ້າ ຂອງຜົນງານດ້ານສະຖາປັດຕະຍະກຳ ລວມທັງການສ້າງຜົນງານ ດັ່ງກ່າວ;

2. ການຜະລິດຊໍ້າ ດ້ວຍການຫຼີກຍ້ອນມາດຕະການທາງດ້ານເຕັກໂນໂລຊີ ທີ່ໃຊ້ປົກປ້ອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຫຼື ຖອນ ຫຼື ດັດແປງ ຂໍ້ມູນເອເລັກໂຕຣນິກ ກ່ຽວກັບການຄຸ້ມຄອງສິດ ໂດຍບໍ່ໄດ້ຮັບອະນຸຍາດ.

### ມາດຕາ 116 ການຈຳກັດ ແລະ ການຍົກເວັ້ນຕໍ່ສິດກ່ຽວຂ້ອງກັບລິຂະສິດ

ການຈຳກັດ ແລະ ການຍົກເວັ້ນຕໍ່ສິດກ່ຽວຂ້ອງກັບລິຂະສິດ ມີຄືກັນກັບການຈຳກັດ ແລະ ການຍົກເວັ້ນຕໍ່ລິຂະສິດ.

### ມາດຕາ 117 ພັນທະ ຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

ພັນທະ ຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນໃຫ້ປະຕິບັດຕາມມາດຕາ 63 ຂອງກົດໝາຍສະບັບນີ້.

## ໝວດທີ 8
## ອົງການຈັດຕັ້ງລິຂະສິດແບບລວມໝູ່

### ມາດຕາ 118 (ປັບປຸງ) ອົງການຈັດຕັ້ງລິຂະສິດແບບລວມໝູ່

ອົງການຈັດຕັ້ງລິຂະສິດແບບລວມໝູ່ ແມ່ນ ການຈັດຕັ້ງ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດທີ່ສ້າງຕັ້ງຂຶ້ນຕາມການຕົກລົງໃນກຸ່ມຂອງບັນດາເຈົ້າຂອງຜົນງານ, ເຈົ້າຂອງລິຂະສິດ, ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ ເພື່ອດຳເນີນກິດຈະກຳຕ່າງໆ ໂດຍສອດຄ່ອງກັບກົດໝາຍ ເພື່ອປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດຂອງຕົນ ແລະ ອຸ່ຍາຍໃຫ້ການຄຸ້ມຄອງຂອງ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ.

### ມາດຕາ 119 (ປັບປຸງ) ພາລະບົດບາດຂອງອົງການຈັດຕັ້ງລິຂະສິດແບບລວມໝູ່

ອົງການຈັດຕັ້ງລິຂະສິດ ແບບລວມໝູ່ ມີພາລະບົດບາດ ດັ່ງນີ້:

1. ຄຸ້ມຄອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໃນນາມເຈົ້າຂອງຜົນງານ, ເຈົ້າຂອງລິຂະສິດ, ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ, ເຈລະຈາການໃຫ້ອະນຸຍາດນຳໃຊ້, ເກັບຄ່າຕອບແທນໃນນາມຂອງບຸກຄົນດັ່ງກ່າວ, ແບ່ງປັນ ແລະ ແຈກຢາຍຄ່າລິຂະສິດ, ຄ່າຕອບແທນ ລວມທັງຜົນປະໂຫຍດອື່ນທີ່ເປັນວັດຖຸ ຊຶ່ງໄດ້ຈາກການອະນຸຍາດໃຫ້ນຳໃຊ້ສິດເຫຼົ່ານັ້ນ;

2. ປົກປ້ອງສິດ ແລະ ຜົນປະໂຫຍດທາງດ້ານກົດໝາຍຂອງສະມາຊິກ ລວມທັງເປັນຕົວແທນໃຫ້ບຸກຄົນທີ່ໄດ້ກ່າວໄວ້ໃນຂໍ້ 1 ເທິງນີ້ ໃນການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການດຳເນີນຄະດີ ໃນນາມຂອງບຸກຄົນເຫຼົ່ານັ້ນ.

**ມາດຕາ 120 (ປັບປຸງ) ສິດ ແລະ ພັນທະ ຂອງອົງການຈັດຕັ້ງລິຂະສິດແບບລວມໝູ່**

ອົງການຈັດຕັ້ງລິຂະສິດແບບລວມໝູ່ ມີ ສິດ ແລະ ພັນທະ ດັ່ງນີ້:

1. ສ້າງກິດຈະກໍາທີ່ສົ່ງເສີມການປະດິດຄິດແຕ່ງ ແລະ ກິດຈະກໍາອື່ນ ທາງສັງຄົມ;

2. ຮ່ວມມື ກັບອົງການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນຊຶ່ງກັນ ແລະ ກັນໃນວຽກງານປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ;

3. ເຮັດບົດລາຍງານ ກ່ຽວກັບການຄຸ້ມຄອງແບບລວມໝູ່ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;

4. ມີສິດ ແລະ ພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

# ພາກທີ VI

# ການລະເມີດຊັບສິນທາງປັນຍາ ແລະ ການແຂ່ງຂັນທີ່ບໍ່ເປັນທໍາ

## ໝວດທີ 1

## ການລະເມີດຊັບສິນທາງປັນຍາ

**ມາດຕາ 121 ການລະເມີດສິດຊັບສິນອຸດສາຫະກໍາ**

ການລະເມີດສິດຊັບສິນອຸດສາຫະກໍາ ແມ່ນ ການກະທໍາໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 56 ຫາ 62 ຂອງກົດໝາຍສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດຊັບສິນອຸດສາຫະກໍາ.

ການກະທໍາທີ່ໄດ້ກໍານົດໄວ້ໃນວັກ ໜຶ່ງ ເທິງນີ້ ຈະບໍ່ຖືວ່າເປັນການລະເມີດສິດຊັບສິນອຸດສາຫະກໍາ ໃນກໍລະນີ ດັ່ງນີ້:

1. ສິດທີ່ຮ້ອງຂໍເອົານັ້ນ ໃຊ້ບໍ່ໄດ້ຍ້ອນບໍ່ມີເງື່ອນໄຂຄົບຖ້ວນໃນການປົກປ້ອງ;

2. ອາຍຸການປົກປ້ອງ ຫຼື ສິດນັ້ນໄດ້ໝົດ ຫຼື ສິ້ນສຸດແລ້ວ;

3. ໃນກໍລະນີ ທີ່ຕ້ອງມີການອະນຸຍາດຈາກເຈົ້າຂອງ, ເຈົ້າຂອງໄດ້ອະນຸຍາດ ຫຼື ມີການໃຫ້ອະນຸຍາດຕາມຄໍາສັ່ງແລ້ວ ສໍາລັບສິດທິບັດ ຫຼື ອະນຸສິດທິບັດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້;

4. ການນໍາໃຊ້ບັນດາສິ່ງປະດິດ ທີ່ປະກອບເປັນສິດທິບັດ ໃນລໍາເຮືອ, ເຄື່ອງຈັກ, ເຄື່ອງບິນ, ໜ່ວຍເກຍ ແລະ ເຄື່ອງອຸປະກອນອື່ນ ຢູ່ເທິງລໍາເຮືອ ຂອງຕ່າງປະເທດ, ເມື່ອເຮືອດັ່ງກ່າວເຂົ້າມາໃນນໍ້າ ຂອງ ສປປ ລາວ ເປັນການຊົ່ວຄາວ ຫຼື ໂດຍອຸບັດເຫດ ໂດຍມີເງື່ອນໄຂວ່າ ສິ່ງປະດິດດັ່ງກ່າວຖືກນໍາໃຊ້ໃນປະເທດນີ້ ສະເພາະສໍາລັບຄວາມຕ້ອງການຂອງເຮືອແຕ່ຢ່າງດຽວ;

5. ການນໍາໃຊ້ສິ່ງປະດິດຕ່າງໆ ທີ່ປະກອບເປັນສິດທິບັດ ໃນການສ້າງ ຫຼື ການຂັບເຄື່ອນເຮືອບິນ ຫຼື ຍານພາຫະນະທາງບົກ, ເມື່ອເຮືອບິນ ຫຼື ຍານພາຫະນະທາງບົກ ຂອງຕ່າງປະເທດ ຫຼື ອຸປະກອນຂອງເຮືອບິນ ຫຼື ຂອງຍານພາຫະນະທາງບົກດັ່ງກ່າວຫາກເຂົ້າມາ ສປປ ລາວ ເປັນການຊົ່ວຄາວ ຫຼື ໂດຍອຸບັດເຫດ;

6. ຂໍ້ຈໍາກັດ ຫຼື ຂໍ້ຍົກເວັ້ນ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 122 (ປັບປຸງ) ການລະເມີດສິດໃນພັນພືດໃໝ່**

ການລະເມີດສິດໃນພັນພືດໃໝ່ ມີ ດັ່ງນີ້:

1. ດໍາເນີນການກະທໍາໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດໃນພັນພືດ ທີ່ຍັງຢູ່ໃນໄລຍະການປົກປ້ອງ;

2. ດຳເນີນການກະທຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງວັກນີ້ ໂດຍໄດ້ຮັບອະນຸຍາດຈາກເຈົ້າຂອງສິດ ແຕ່ບໍ່ຈ່າຍຄ່າຕອບແທນໃຫ້ເຈົ້າຂອງສິດ ຕາມເງື່ອນໄຂຂອງການອະນຸຍາດ ຫຼື ລະເມີດເງື່ອນໄຂໃດໜຶ່ງຂອງການອະນຸຍາດ;

3. ນຳໃຊ້ຊື່ພັນພືດ ກັບພັນພືດທີ່ແຕກຕ່າງກັນ ໂດຍມີຊື່ພັນພືດຄືກັນ ຫຼື ຄ້າຍຄືກັນກັບຊື່ພັນພືດໃໝ່ ທີ່ຢູ່ໃນກຸ່ມດຽວກັນ ທີ່ໄດ້ຮັບການປົກປ້ອງ;

4. ນຳໃຊ້ຊື່ທີ່ຖືກລົບຮອງແລ້ວ ກັບພັນພືດທີ່ແຕກຕ່າງກັນ.

ການກະທຳທີ່ໄດ້ກຳນົດໄວ້ໃນມາດຕາ 82 ຂອງກົດໝາຍສະບັບນີ້ ຈະບໍ່ຖືວ່າເປັນການລະເມີດສິດໃນພັນພືດ ໃນກໍລະນີ ດັ່ງນີ້:

1. ການກະທຳ ທີ່ໄດ້ຮັບອະນຸຍາດຕາມຄຳສັ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 91 ຂອງກົດໝາຍສະບັບນີ້;

2. ສິດຂອງນັກປະສົມພັນພືດໃນສ່ວນຂະຫຍາຍພັນ ຫຼື ຜົນເກັບກ່ຽວສິ້ນສຸດລົງຕາມມາດຕາ 87 ຂອງກົດໝາຍສະບັບນີ້;

3. ການກະທຳ ເປັນການປະຕິບັດຕາມຂໍ້ຈຳກັດ ເພື່ອສາທາລະນະປະໂຫຍດດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 91 ຂອງກົດໝາຍສະບັບນີ້;

4. ສິດຂອງນັກປະສົມພັນພືດ ຖືກສານຕັດສິນໃຫ້ເປັນໂມຄະຕາມມາດຕາ 89 ຂອງກົດໝາຍສະບັບນີ້ ແລະ ໃນເວລາສິ້ນສຸດການອຸທອນ;

5. ການຍົກເລີກສິດ ຕາມມາດຕາ 90 ຂອງກົດໝາຍສະບັບນີ້.

**ມາດຕາ 123 ການລະເມີດລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ການລະເມີດລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ດຳເນີນການກະທຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 103 ຫຼື 112 ຂອງກົດໝາຍສະບັບນີ້;

2. ຫຼົບຫຼີກມາດຕະການທາງດ້ານເຕັກໂນໂລຊີ ທີ່ນຳໃຊ້ໂດຍຜູ້ສະແດງ ຫຼື ຜູ້ຜະລິດການບັນທຶກສຽງ ໃນການນຳໃຊ້ສິດຂອງຜູ້ກ່ຽວ ແລະ ທີ່ຈຳກັດການກະທຳທີ່ບໍ່ໄດ້ຮັບອະນຸຍາດຈາກຜູ້ສະແດງ ຫຼື ຜູ້ຜະລິດການບັນທຶກສຽງ ທີ່ກ່ຽວຂ້ອງ ຫຼື ໄດ້ຮັບອະນຸຍາດຕາມກົດໝາຍ ໃນການສະແດງ ຫຼື ການບັນທຶກການສະແດງ;

3. ກະທຳໂດຍເຈດຕະນາ ຫຼື ສາມາດຮູ້ໄດ້ວ່າ ການກະທຳນັ້ນ ຈະພາໃຫ້ເກີດການລະເມີດລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ໃນກໍລະນີ ດັ່ງນີ້:

3.1. ຖອນ ຫຼື ດັດແປງ ຂໍ້ມູນການຄຸ້ມຄອງສິດທາງເອເລັກໂຕຼນິກ ໂດຍບໍ່ໄດ້ຮັບອະນຸຍາດ;

3.2. ແຈກຢາຍ, ນຳເຂົ້າເພື່ອແຈກຢາຍ, ກະຈາຍສຽງ-ແຜ່ພາບ, ສື່ສານ ຫຼື ເຜີຍແຜ່ຕໍ່ສາທາລະນະຊົນ ໂດຍບໍ່ໄດ້ຮັບອະນຸຍາດ, ສະແດງ, ສຳເນົາການສະແດງ ຫຼື ບັນທຶກສຽງ ໂດຍທີ່ຮູ້ວ່າຂໍ້ມູນການຄຸ້ມຄອງສິດທາງເອເລັກໂຕຣນິກ ຖືກຖອນ ຫຼື ດັດແປງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ບັນທຶກ ຫຼື ເຜີຍແຜ່ລາຍການຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ ຫຼື ບໍ່ເຂົ້າລະຫັດ ເພື່ອຈຸດປະສົງທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ຈຳໜ່າຍທີ່ຖືກຕ້ອງຕາມກົດໝາຍ.

## ໝວດທີ 2
## ການແຂ່ງຂັນທີ່ບໍ່ເປັນທຳ

### ມາດຕາ 124 ການແຂ່ງຂັນທີ່ບໍ່ເປັນທຳ

ການແຂ່ງຂັນ ທີ່ຂັດກັບທຳນຽມປະຕິບັດດ້ວຍຄວາມສຸດຈະລິດ ໃນຂົງເຂດອຸດສາຫະກຳ ຫຼື ການຄ້າ ຖືວ່າເປັນການແຂ່ງຂັນທີ່ບໍ່ເປັນທຳ.

ການກະທຳທີ່ຖືວ່າເປັນການແຂ່ງຂັນທີ່ບໍ່ເປັນທຳ ແລະ ຕ້ອງໄດ້ເກືອດຫ້າມ ມີ ດັ່ງນີ້:

1. ນຳໃຊ້ ທີ່ມາຂອງສິນຄ້າ ຫຼື ຊື່ຂອງຜູ້ຜະລິດ, ຜູ້ປະກອບການຜະລິດ ຫຼື ຜູ້ຄ້າຂາຍ ໂດຍທາງກົງ ຫຼື ທາງອ້ອມ ແບບບໍ່ຖືກຕ້ອງ;
2. ສ້າງຄວາມສັບສົນ ດ້ວຍວິທີການໃດໜຶ່ງ ກ່ຽວກັບວິສາຫະກິດ, ສິນຄ້າ ຫຼື ກິດຈະກຳທາງດ້ານອຸດສາຫະກຳ ຫຼື ການຄ້າຂອງຄູ່ແຂ່ງ;
3. ກ່າວຫາໂດຍບໍ່ມີມູນຄວາມຈິງ ເພື່ອທຳລາຍຄວາມໜ້າເຊື່ອຖື ຂອງວິສາຫະກິດ, ສິນຄ້າ ຫຼື ກິດຈະກຳທາງດ້ານອຸດສາຫະກຳ ຫຼື ການຄ້າຂອງຄູ່ແຂ່ງ;
4. ໃຊ້ສິ່ງຊີ້ບອກ ຫຼື ກ່າວຫາ ຊຶ່ງພາໃຫ້ສາທາລະນະຊົນເຂົ້າໃຈຜິດ ຕໍ່ປະເພດ, ຂະບວນການຜະລິດ, ຄຸນລັກສະນະ, ຄວາມເໝາະສົມກັບຈຸດປະສົງ ຫຼື ປະລິມານຂອງສິນຄ້າ.

### ມາດຕາ 125 ສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ

ສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ ແມ່ນ ສິນຄ້າໃດໜຶ່ງ ລວມທັງການຫຸ້ມຫໍ່ ທີ່ໃສ່ເຄື່ອງໝາຍການຄ້າທີ່ຄືກັນ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ທີ່ບໍ່ສາມາດຈຳແນກຄວາມແຕກຕ່າງລັກສະນະສະເພາະ ກັບເຄື່ອງໝາຍການຄ້າ ທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງ ແລະ ຈະຖືວ່າເປັນການລະເມີດສິດຂອງເຈົ້າຂອງເຄື່ອງໝາຍການຄ້າດັ່ງກ່າວ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ການສ້າງ, ການຂາຍ, ການສະເໜີຂາຍ, ການໂຄສະນາ, ການຕະຫຼາດ, ການສົ່ງອອກ ຫຼື ການນຳເຂົ້າສິນຄ້າທີ່ປອມແປງເຄື່ອງໝາຍການຄ້າ ຖືວ່າເປັນການລະເມີດກົດໝາຍສະບັບນີ້.

### ມາດຕາ 126 ສິນຄ້າທີ່ລະເມີດລິຂະສິດ

ສິນຄ້າທີ່ລະເມີດລິຂະສິດ ແມ່ນ ສິນຄ້າໃດໜຶ່ງ ທີ່ສຳເນົາຜົນງານທີ່ມີລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ຊຶ່ງການສຳເນົາດັ່ງກ່າວ:

1. ເຮັດຂຶ້ນໂດຍບໍ່ໄດ້ຮັບການເຫັນດີ ຈາກຜູ້ຖືສິດ ຫຼື ຈາກຜູ້ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກເຈົ້າຂອງສິດ ໃນປະເທດທີ່ມີການຜະລິດສິນຄ້າດັ່ງກ່າວ;
2. ເຮັດຂຶ້ນໂດຍກົງ ຫຼື ທາງອ້ອມ ຈາກຜົນງານໃດໜຶ່ງ ລວມທັງການໃຊ້ອຸປະກອນຕ່າງໆ ເພື່ອບັນທຶກສຽງ-ພາບ ຂອງຜົນງານທາງດ້ານຮູບເງົາ ຢູ່ໃນໂຮງຮູບເງົາ.

ການຜະລິດ, ການຂາຍ, ການສະເໜີຂາຍ, ການໂຄສະນາ, ການຕະຫຼາດ, ການສົ່ງອອກ ຫຼື ການນຳເຂົ້າສິນຄ້າທີ່ລະເມີດລິຂະສິດ ຖືວ່າເປັນການລະເມີດກົດໝາຍສະບັບນີ້.

# ພາກທີ VII
# ການແກ້ໄຂຂໍ້ຂັດແຍ່ງ, ການດຳເນີນຄະດີ ແລະ ການນຳໃຊ້ມາດຕະການ
## ໝວດທີ 1
## ຮູບການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 127 ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບຊັບສິນທາງປັນຍາ ສາມາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການປະນີປະນອມ;
2. ການໄກ່ເກ່ຍ;
3. ການແກ້ໄຂທາງດ້ານບໍລິຫານ;
4. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
5. ການຮ້ອງຟ້ອງຕໍ່ສານປະຊາຊົນ;
6. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 128 ການປະນີປະນອມ

ຄູ່ກໍລະນີ ສາມາດປະນີປະນອມກັນ ກ່ຽວກັບ ການລະເມີດສິດຕໍ່ຊັບສິນທາງປັນຍາ.

ການຕົກລົງຈາກການປະນີປະນອມ ໃຫ້ປະຕິບັດຕາມຫຼັກການຂອງການເຮັດສັນຍາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

### ມາດຕາ 129 ການໄກ່ເກ່ຍ

ຄູ່ກໍລະນີ ສາມາດເລືອກເອົາຮູບການແກ້ໄຂຂໍ້ຂັດແຍ່ງ ດ້ວຍການໄກ່ເກ່ຍໄດ້ທຸກເວລາ ໂດຍສອດຄ່ອງກັບກົດໝາຍ.

### ມາດຕາ 130 (ປັບປຸງ) ການແກ້ໄຂທາງດ້ານບໍລິຫານ

ຄູ່ກໍລະນີ ສາມາດສະເໜີຕໍ່ອົງການຄຸ້ມຄອງຊັບສິນທາງປັນຍາ ເພື່ອແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບຊັບສິນທາງປັນຍາ ໂດຍສອດຄ່ອງກັບກົດໝາຍ.

ຂໍ້ຂັດແຍ່ງທີ່ນຳມາແກ້ໄຂທາງດ້ານບໍລິຫານ ແມ່ນ ຂໍ້ຂັດແຍ່ງ ກ່ຽວກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່ ແລະ ການແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

ສຳລັບວິທີການ ແລະ ຂັ້ນຕອນ ການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 131 ການແກ້ໄຂທາງດ້ານບໍລິຫານກ່ຽວກັບຂໍ້ຂັດແຍ່ງຊັບສິນທາງປັນຍາຕາມຊາຍແດນ

ຄູ່ກໍລະນີ ສາມາດຍື່ນຄຳຮ້ອງຕໍ່ລັດຖະການພາສີ ກ່ຽວກັບຂໍ້ຂັດແຍ່ງຊັບສິນທາງປັນຍາ ຕາມຊາຍແດນ ໂດຍສອດຄ່ອງກັບກົດໝາຍ.

ຂັ້ນຕອນການແກ້ໄຂທາງດ້ານບໍລິຫານ ກ່ຽວກັບ ຂໍ້ຂັດແຍ່ງຊັບສິນທາງປັນຍາ ຕາມຊາຍແດນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 132 ການແກ້ໄຂໂດຍອີງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຄູ່ກໍລະນີ ສາມາດຮ້ອງຂໍຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ທຸກເວລາ ເພື່ອໃຫ້ແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊັບສິນທາງປັນຍາ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 133 ການຮ້ອງຟ້ອງຕໍ່ສານປະຊາຊົນ**

ຄູ່ກໍລະນີ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອຕັດສິນຄະດີກ່ຽວກັບຊັບສິນທາງປັນຍາຕາມກົດໝາຍ.

**ມາດຕາ 134 ການແກ້ໄຂທີ່ມີລັກສະນະສາກົນ**

ການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບຊັບສິນທາງປັນຍາ ທີ່ມີລັກສະນະສາກົນ ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ໝວດທີ 2
## ການດຳເນີນຄະດີ ແລະ ການນຳໃຊ້ມາດຕະການ

**ມາດຕາ 135 ການດຳເນີນຄະດີກ່ຽວກັບການລະເມີດສິດຕໍ່ຊັບສິນທາງປັນຍາ**

ຜູ້ຖືກເສຍຫາຍຈາກການລະເມີດສິດຕໍ່ຊັບສິນທາງປັນຍາຂອງຕົນ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອດຳເນີນຄະດີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 136 (ປັບປຸງ) ຜູ້ຖືກເສຍຫາຍ**

ຜູ້ຖືກເສຍຫາຍໃນຄວາມໝາຍຂອງມາດຕາ 135 ຂອງກົດໝາຍສະບັບນີ້ ແມ່ນເຈົ້າຂອງຊັບສິນທາງປັນຍາ, ສະຫະພັນ ຫຼື ສະມາຄົມ ທີ່ທາງໜ້າໃຫ້ບັນດາຂະແໜງອຸດສາຫະກຳ, ຜູ້ຜະລິດ, ຜູ້ຄ້າຂາຍ ແລະ ອົງການຈັດຕັ້ງຜະລິດແບບລວມໝູ່ ຫຼື ຜູ້ອື່ນໆ ທີ່ໄດ້ຮັບຄວາມເສຍຫາຍ ຈາກການລະເມີດສິດຕໍ່ຊັບສິນທາງປັນຍາ.

**ມາດຕາ 137 ສິດອຳນາດຂອງສານປະຊາຊົນ ກ່ຽວກັບການລະເມີດສິດຕໍ່ຊັບສິນທາງປັນຍາ**

ສານປະຊາຊົນ ມີສິດອຳນາດຕັດສິນຄະດີ ກ່ຽວກັບການລະເມີດສິດຕໍ່ຊັບສິນທາງປັນຍາ ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຕາມແຕ່ລະກໍລະນີ.

**ມາດຕາ 138 ຫຼັກຖານພິເສດສຳລັບການດຳເນີນຄະດີ ກ່ຽວກັບຊັບສິນທາງປັນຍາ**

ໃນການດຳເນີນຄະດີຕໍ່ການລະເມີດສິດທິບັດ ກ່ຽວກັບກຳມະວິທີ ເພື່ອໃຫ້ໄດ້ຮັບຜະລິດຕະພັນໃໝ່ ຊຶ່ງບຸກຄົນອື່ນທີ່ບໍ່ແມ່ນເຈົ້າຂອງສິດທິບັດ ຫຼື ບໍ່ແມ່ນຜູ້ທີ່ໄດ້ຮັບອະນຸຍາດຈາກຜູ້ກ່ຽວ ໄດ້ຜະລິດຕະພັນອັນດຽວກັນ ຈະຖືວ່າຜະລິດຕະພັນດັ່ງກ່າວໄດ້ມາຈາກກຳມະວິທີ ທີ່ໄດ້ຮັບສິດທິບັດ ເວັ້ນເສຍແຕ່ມີຫຼັກຖານກົງກັນຂ້າມ ແຕ່ໃນການສະໜອງຫຼັກຖານກົງກັນຂ້າມດັ່ງກ່າວ ບໍ່ໃຫ້ແຕະຕ້ອງເຖິງຜົນປະໂຫຍດອັນຊອບທຳໃນການປົກປ້ອງຄວາມລັບດ້ານການຜະລິດ ແລະ ທຸລະກິດຂອງຈຳເລີຍ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຊື່ໃນຜົນງານທາງວັນນະກຳ ໂດຍທົ່ວໄປແລ້ວ ຖືວ່າເປັນເຈົ້າຂອງຜົນງານນັ້ນ ເວັ້ນເສຍແຕ່ມີຫຼັກຖານກົງກັນຂ້າມ ແລະ ມີສິດໃນການດຳເນີນຄະດີຕໍ່ຜູ້ລະເມີດ. ເນື້ອໃນຂອງວັກນີ້ ສາມາດປະຕິບັດໄດ້ ລວມທັງກໍລະນີທີ່ຊື່ໃນຜົນງານເປັນນາມປາກກາ ຊຶ່ງບໍ່ມີຂໍ້ສົງໄສອັນໃດ ກ່ຽວກັບຊື່ແທ້ຂອງເຈົ້າຂອງຜົນງານ.

ໃນກໍລະນີ ທີ່ຜົນງານບໍ່ໄດ້ບົ່ງບອກຊື່ ແລະ ບໍ່ໃສ່ນາມປາກກາ, ນອກຈາກຜູ້ທີ່ໄດ້ກຳນົດໄວ້ໃນວັກ ສອງ ຂອງມາດຕານີ້, ຜູ້ເຜີຍແຜ່ທີ່ມີຊື່ໃນຜົນງານ ຈະຖືວ່າເປັນຕົວແທນຂອງເຈົ້າຂອງຜົນງານ ແລະ ຈະມີສິດປົກປ້ອງ ແລະ ນຳໃຊ້ສິດຂອງເຈົ້າຂອງ ເວັ້ນເສຍແຕ່ມີຫຼັກຖານກົງກັນຂ້າມ. ການກຳນົດໃນວັກນີ້ຈະບໍ່ນຳໃຊ້ ໃນເວລາເຈົ້າຂອງຜົນງານເປີດເຜີຍຊື່ແທ້ ແລະ ຮຽກຮ້ອງສິດໃນການເປັນເຈົ້າຂອງຜົນງານດັ່ງກ່າວຂອງຕົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຊື່ໃນຜົນງານຮູບເງົາ ໂດຍທົ່ວໄປແລ້ວ ເປັນເຈົ້າຂອງຜົນງານ ແລະ ມີສິດດຳເນີນຄະດີຕໍ່ຜູ້ລະເມີດ ເວັ້ນເສຍແຕ່ມີຫຼັກຖານກົງກັນຂ້າມ.

ໃນກໍລະນີ ທີ່ຝ່າຍໃດໜຶ່ງຫາກສະເໜີຫຼັກຖານທີ່ພຽງພໍ ກ່ຽວກັບການຮ້ອງຟ້ອງຂອງຕົນ ແລະ ຫຼັກຖານນັ້ນແມ່ນກ່ຽວກັບເນື້ອໃນຂອງຄຳຮ້ອງຟ້ອງ ທີ່ຍັງຢູ່ໃນການຄອບຄອງຂອງຄູ່ກໍລະນີ, ສານປະຊາຊົນ ມີສິດສັ່ງໃຫ້ຄູ່ກໍລະນີດັ່ງກ່າວ ສະໜອງຫຼັກຖານ ແຕ່ຕ້ອງຮັບປະກັນການຮັກສາຄວາມລັບ ຕາມຄວາມເໝາະສົມ. ໃນກໍລະນີທີ່ຄູ່ກໍລະນີດັ່ງກ່າວ ຫາກມີເຈດຕະນາປະຕິເສດການສະໜອງຂໍ້ມູນທີ່ຈຳເປັນ ໂດຍບໍ່ມີເຫດຜົນພາຍໃນເວລາທີ່ສານປະຊາຊົນກຳນົດໃຫ້ ຫຼື ຂັດຂວາງຢ່າງແຮງ ຂັ້ນຕອນການນຳໃຊ້ສິດ, ສານປະຊາຊົນສາມາດຕັດສິນຄະດີດັ່ງກ່າວ ໂດຍອີງໃສ່ຂໍ້ມູນທີ່ໄດ້ສະເໜີ ລວມທັງຄຳຮ້ອງຟ້ອງ ຫຼື ຄຳອ້າງຂອງຄູ່ກໍລະນີ ທີ່ໄດ້ຮັບຜົນກະທົບທາງລົບ ຈາກການປະຕິເສດຂໍ້ມູນດັ່ງກ່າວ ແຕ່ຕ້ອງໃຫ້ຄູ່ກໍລະນີ ໄດ້ຊີ້ແຈງຄຳອ້າງ ຫຼື ຫຼັກຖານ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ອ້າງວ່າການກະທຳທີ່ເປັນການລະເມີດ ຫຼື ການແຂ່ງຂັນທີ່ບໍ່ເປັນທຳໄດ້ຮັບການຍົກເວັ້ນໃນມາດຕາ 121 ວັກ ສອງ ຂອງກົດໝາຍສະບັບນີ້ ຕ້ອງພິສູດການກ່າວອ້າງດັ່ງກ່າວ. ຂໍ້ບັນຍັດນີ້ ແມ່ນໃຫ້ນຳໃຊ້ເຊັ່ນດຽວກັນກັບການກະທຳທີ່ເປັນການລະເມີດສິດໃນພັນພືດ, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫຼື ການລະເມີດອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

ການລະເມີດສິດທິບັດ ຫຼື ອະນຸສິດທິບັດ ຈະຖືກກຳນົດເປັນຫຼັກຖານ ທີ່ສະແດງໃຫ້ເຫັນວ່າ ສິ່ງທີ່ຖືກອ້າງວ່າລະເມີດນັ້ນ ກວມເອົາ ຫຼື ນຳໃຊ້ ແຕ່ລະອົງປະກອບຂອງຂໍ້ຮຽກຮ້ອງສິດທິບັດ ຫຼື ອະນຸສິດທິບັດ ທີ່ອ້າງວ່າຖືກລະເມີດເທົ່ານັ້ນ. ການລະເມີດຈະບໍ່ຕົກໄປດ້ວຍການເພີ່ມອົງປະກອບໃນສິ່ງທີ່ຖືກອ້າງວ່າລະເມີດ ຫຼື ການມີຂໍ້ຮຽກຮ້ອງໃນສິດທິບັດ ຫຼື ອະນຸສິດທິບັດ ທີ່ບໍ່ໄດ້ຖືກລະເມີດ. ໃນການຮ້ອງຟ້ອງ ທີ່ອ້າງວ່າມີການລະເມີດເຄື່ອງໝາຍການຄ້າ, ເຄື່ອງໝາຍລວມໝູ່ ຫຼື ເຄື່ອງໝາຍຮັບຮອງນັ້ນ ໂຈດຕ້ອງນຳສິ່ງຕໍ່ໄປນີ້ ມາສະເໜີ:

1. ເຄື່ອງໝາຍ ທີ່ມີຮູບຊົງ, ການອອກສຽງ ຫຼື ຄວາມໝາຍ ຄ້າຍຄືກັນ;
2. ເຄື່ອງໝາຍ ກ່ຽວກັບ ສິນຄ້າ ຫຼື ການບໍລິການແບບດຽວກັນ, ຄ້າຍຄືກັນ ຫຼື ພົວພັນກັນ;
3. ການນຳໃຊ້ເຄື່ອງໝາຍດັ່ງກ່າວ ມີຄວາມເປັນໄປໄດ້ວ່າ ຈະສ້າງຄວາມສັບສົນ ຫຼື ຫຼອກລວງຜູ້ບໍລິໂພກ ກ່ຽວກັບທີ່ມາ, ການອຸປະຖຳ ຫຼື ຄຸນລັກສະນະຂອງສິນຄ້າ ຫຼື ການບໍລິການ ຫຼື ຊີ້ບອກໂດຍບໍ່ມີມູນຄວາມຈິງວ່າ ມີການພົວພັນລະຫວ່າງ ສິນຄ້າ ຫຼື ການບໍລິການ ຂອງໂຈດກັບສິນຄ້າ ຫຼື ການບໍລິການຂອງຈຳເລີຍ.

### ມາດຕາ 139 (ປັບປຸງ) ການເປັນໂມຄະ ແລະ ການຍົກເລີກ ຫຼື ລຶບລ້າງ

ພາຍຫຼັງໄດ້ຮັບຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດ ຂອງສານປະຊາຊົນທີ່ບອກວ່າ ສິດທິບັດ, ອະນຸສິດທິບັດ, ການຈົດທະບຽນແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ ຫຼື ການປົກປ້ອງພັນພືດ ເປັນໂມຄະແລ້ວ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕ້ອງຍົກເລີກ ຫຼື ລຶບລ້າງ ຊັບສິນທາງປັນຍາດັ່ງກ່າວ.

ສຳລັບສິດທິບັດ ຫຼື ອະນຸສິດທິບັດນັ້ນ ຄຳຕັດສິນດັ່ງກ່າວ ຕ້ອງກຳນົດລະອຽດຂໍ້ອ້າງສິດ ໃນສິດທິບັດ ຫຼື ອະນຸສິດທິບັດ ທີ່ຖືກຕັດສິນວ່າເປັນໂມຄະ.

**ມາດຕາ 140 ການແກ້ໄຂທາງແພ່ງ**

ໃນການດຳເນີນຄະດີ ໂຈດສາມາດຮ້ອງຂໍໃຫ້ສານປະຊາຊົນພິຈາລະນາ ດັ່ງນີ້:

1. ໃຫ້ຈຳເລີຍ ຢຸດເຊົາການລະເມີດ;
2. ໃຫ້ໂຈະການແຈ້ງພາສີ;
3. ໃຫ້ຍຶດສິນຄ້າທີ່ລະເມີດສິດຕໍ່ຊັບສິນທາງປັນຍາ ເພື່ອສະກັດກັ້ນການນຳເອົາສິນຄ້າດັ່ງກ່າວ ເຂົ້າສູ່ວົງຈອນການຄ້າ ລວມທັງສິນຄ້າທີ່ລະເມີດສິດຕໍ່ຊັບສິນທາງປັນຍາ ທີ່ນຳເຂົ້າເພື່ອສົ່ງອອກຕໍ່ໃນທັນທີ ພາຍຫຼັງສິ້ນສຸດການແຈ້ງພາສີ;
4. ອອກຄຳຕັດສິນບອກວ່າມີການລະເມີດ;
5. ໃຫ້ຈຳເລີຍ ໃຊ້ແທນຄ່າເສຍຫາຍຢ່າງເໝາະສົມ;
6. ໃຫ້ຈຳເລີຍທົດແທນຄ່າໃຊ້ຈ່າຍຕ່າງໆ ລວມທັງຄ່າວ່າຄວາມຂອງຕົນ;
7. ໃຫ້ທຳລາຍ ແລະ ກຳຈັດສິນຄ້າ ທີ່ຖືກຕັດສິນວ່າມີການລະເມີດ ເພື່ອບໍ່ໃຫ້ເຂົ້າສູ່ວົງຈອນການຄ້າ;
8. ໃຫ້ກຳຈັດວັດຖຸ ແລະ ອຸປະກອນ ທີ່ນຳໃຊ້ເຂົ້າໃນການຜະລິດສິນຄ້າ ທີ່ລະເມີດສິດຕໍ່ຊັບສິນທາງປັນຍາເພື່ອບໍ່ໃຫ້ມີການຜະລິດອີກເທື່ອໃໝ່.

ໃນການພິຈາລະນາຄຳຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 7 ແລະ 8 ເທິງນີ້ ສານປະຊາຊົນ ຕ້ອງຊັ່ງຊາຄວາມເໝາະສົມ ລະຫວ່າງຄວາມຮ້າຍແຮງຂອງການລະເມີດ ແລະ ການແກ້ໄຂ ລວມທັງຜົນປະໂຫຍດຂອງບຸກຄົນທີສາມ.

ສຳລັບສິນຄ້າປອມແປງເຄື່ອງໝາຍການຄ້ານັ້ນ ການນຳເອົາເຄື່ອງໝາຍການຄ້າທີ່ສ້າງຂຶ້ນ ໂດຍບໍ່ຖືກຕ້ອງຕາມກົດໝາຍອອກພຽງຢ່າງດຽວ ເປັນການບໍ່ພຽງພໍ ເພື່ອບໍ່ໃຫ້ສິນຄ້າເຂົ້າສູ່ວົງຈອນ ການຄ້າ ຫຼື ສົ່ງອອກຄືນ.

**ມາດຕາ 141 ການໃຊ້ແທນຄ່າເສຍຫາຍ**

ສານປະຊາຊົນ ເປັນຜູ້ກຳນົດຄ່າໃຊ້ແທນ ຢ່າງພຽງພໍໃຫ້ໂຈດ ຕາມຄວາມເສຍຫາຍຂອງຜູ້ກ່ຽວ ແລະ ເພື່ອສະກັດກັ້ນບໍ່ໃຫ້ຈຳເລີຍໄດ້ຮັບຜົນປະໂຫຍດຈາກການລະເມີດ, ນອກຈາກນີ້ ສານປະຊາຊົນ ກໍຍັງສາມາດສັ່ງໃຫ້ຈ່າຍຜົນກຳໄລ ແລະ ຄ່າໃຊ້ແທນ ເຖິງວ່າຈຳເລີຍບໍ່ໄດ້ມີສ່ວນຮ່ວມ ໃນການລະເມີດຊັບສິນທາງປັນຍາແຕ່ຮູ້ ຫຼື ມີເຫດຜົນທີ່ຈະຮູ້ວ່າເປັນການລະເມີດ.

**ມາດຕາ 142 ສິດໃນການຮັບຂໍ້ມູນ ຂ່າວສານ**

ເມື່ອມີການລະເມີດທີ່ຮ້າຍແຮງ ໂຈດສາມາດຂໍໃຫ້ສານສັ່ງໃຫ້ຈຳເລີຍ ສະໜອງຂໍ້ມູນໃຫ້ຕົນ ກ່ຽວກັບບຸກຄົນທີສາມ ທີ່ມີສ່ວນຮ່ວມໃນການຜະລິດ ແລະ ການແຈກຢາຍສິນຄ້າ ຫຼື ການບໍລິການ ທີ່ລະເມີດສິດຕໍ່ຊັບສິນທາງປັນຍາ ພ້ອມທັງວົງຈອນການແຈກຢາຍ.

### ມາດຕາ 143 ການໃຊ້ແທນຄ່າເສຍຫາຍໃຫ້ແກ່ຈຳເລີຍ

ຈຳເລີຍ ສາມາດຮ້ອງຂໍໃຫ້ສານປະຊາຊົນ ພິຈາລະນາໃຫ້ໂຈດທີ່ໄດ້ດຳເນີນມາດຕະການ ແລະ ລວຍໃຊ້ຂັ້ນຕອນການບັງຄັບໃຊ້ສິດຂອງໂຈດ ໃຊ້ແທນຄ່າເສຍຫາຍໃຫ້ແກ່ຕົນ ຈາກການລວຍໃຊ້ສິດດັ່ງກ່າວ ລວມທັງຄ່າໃຊ້ຈ່າຍຕ່າງໆ ແລະ ຄ່າວ່າຄວາມຂອງທະນາຍຄວາມຕົນ.

### ມາດຕາ 144 ມາດຕະການຊົ່ວຄາວ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີສິດຮ້ອງຂໍໃຫ້ສານປະຊາຊົນ ພິຈາລະນາອອກມາດຕະການຊົ່ວຄາວ ແບບມີປະສິດທິຜົນ ແລະ ທັນການ ເພື່ອ:

1. ສະກັດກັ້ນການລະເມີດສິດຕໍ່ຊັບສິນທາງປັນຍາ;
2. ສະກັດກັ້ນ ການນຳເອົາສິນຄ້າທີ່ລະເມີດສິດຕໍ່ຊັບສິນທາງປັນຍາ ເຂົ້າສູ່ວົງຈອນການຄ້າ ລວມທັງສິນຄ້ານຳເຂົ້າໃນທັນທີ ພາຍຫຼັງສິ້ນສຸດການແຈ້ງພາສີ;
3. ຮັກສາຫຼັກຖານ ທີ່ກ່ຽວຂ້ອງກັບການລະເມີດທີ່ຖືກກ່າວອ້າງ.

### ມາດຕາ 145 ເງື່ອນໄຂການຮ້ອງຂໍມາດຕະການຊົ່ວຄາວ

ການຮ້ອງຂໍມາດຕະການຊົ່ວຄາວ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ຫຼັກຖານ ທີ່ສົມເຫດສົມຜົນ ເພື່ອໃຫ້ສານປະຊາຊົນເຊື່ອວ່າ ຜູ້ຍື່ນຄຳຮ້ອງເປັນຜູ້ຖືສິດ ແລະ ສິດຂອງຕົນ ຖືກລະເມີດ ແລະ ການລະເມີດໃກ້ຈະເກີດຂຶ້ນ;
2. ເງິນຄໍ້າປະກັນທີ່ພຽງພໍ ຫຼື ສິ່ງຄໍ້າປະກັນອື່ນທີ່ມີມູນຄ່າທຽບເທົ່າ ເພື່ອປົກປ້ອງຈຳເລີຍ ແລະ ສະກັດກັ້ນການສວຍໃຊ້ສິດ;
3. ຂໍ້ມູນທີ່ຈຳເປັນ ແລະ ສາມາດຈຳແນກສິນຄ້າທີ່ກ່ຽວຂ້ອງໄດ້ ເພື່ອໃຫ້ເຈົ້າໜ້າທີ່ປະຕິບັດມາດຕະການຊົ່ວຄາວ.

### ມາດຕາ 146 ມາດຕະການຊົ່ວຄາວໂດຍບໍ່ມີການແຈ້ງຈຳເລີຍ

ໂຈດສາມາດຮ້ອງຂໍໃຫ້ສານປະຊາຊົນ ອອກມາດຕະການຊົ່ວຄາວ ໂດຍບໍ່ຈຳເປັນຕ້ອງແຈ້ງໃຫ້ຈຳເລີຍຊາບ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍສະເພາະອາດຈະມີຄວາມຊັກຊ້າ ຊຶ່ງຈະສົ່ງຜົນເສຍຫາຍທີ່ບໍ່ສາມາດແກ້ໄຂໄດ້ຕໍ່ຕົນ ຫຼື ເຫັນວ່າຫຼັກຖານກຳລັງຖືກທຳລາຍ.

ພາຍຫຼັງໄດ້ນຳໃຊ້ມາດຕະການດັ່ງກ່າວ ສານປະຊາຊົນ ຕ້ອງແຈ້ງໃຫ້ຝ່າຍທີ່ໄດ້ຮັບຜົນກະທົບຊາບໃນທັນທີ. ສານປະຊາຊົນ ຕ້ອງພິຈາລະນາຄືນ ແລະ ໃຫ້ສິດແກ່ຈຳເລີຍ ໃນການຊີ້ແຈງຕາມຄຳຮ້ອງຂໍຂອງຜູ້ກ່ຽວ ແລ້ວພິຈາລະນາຕັດສິນພາຍໃນເວລາທີ່ເໝາະສົມວ່າ ມາດຕະການຊົ່ວຄາວດັ່ງກ່າວ ຄວນຖືກປ່ຽນແປງ, ຍົກເລີກ ຫຼື ໃຫ້ປະຕິບັດ.

### ມາດຕາ 147 ການພິຈາລະນາຄືນມາດຕະການຊົ່ວຄາວ

ອີງຕາມຄຳຮ້ອງຂໍຂອງຈຳເລີຍ ສານປະຊາຊົນ ຕ້ອງພິຈາລະນາ ການຍົກເລີກ ຫຼື ການຢຸດເຊົາ ມາດຕະການຊົ່ວຄາວ ທີ່ນຳໃຊ້ຕາມມາດຕາ 144 ແລະ 145 ຂອງກົດໝາຍສະບັບນີ້ ຖ້າບໍ່ມີການພິຈາລະນາຕັດສິນໃນເນື້ອຄະດີ ພາຍໃນເວລາທີ່ສານປະຊາຊົນໄດ້ກຳນົດ ແຕ່ບໍ່ໃຫ້ກາຍ ຊາວວັນ ລັດຖະການ ຫຼື ສາມສິບເອັດວັນປະຕິທິນ ແລ້ວແຕ່ເວລາໃດຈະດົນກວ່າ.

ໃນກໍລະນີ ທີ່ມາດຕະການຊົ່ວຄາວ ຖືກຍົກເລີກ ຫຼື ບຸດເຊົາ ຍ້ອນການກະທຳ ຫຼື ບໍ່ກະທຳຂອງໂຈດ ຫຼື ພາຍຫຼັງໄດ້ກົດສິນວ່າ ບໍ່ມີການລະເມີດ ຫຼື ບໍ່ມີຄວາມສ່ຽງໃນການລະເມີດສິດຕໍ່ຊັບສິນທາງປັນຍາແລ້ວ ສານປະຊາຊົນກໍມີສິດພິຈາລະນາຕັດສິນ ໃຫ້ໂຈດໃຊ້ແທນຄ່າເສຍຫາຍທີ່ເໝາະສົມທີ່ເກີດຂຶ້ນຈາກການນຳໃຊ້ມາດຕະການດັ່ງກ່າວ ແກ່ຈຳເລີຍ ຕາມການຮ້ອງຂໍຂອງຜູ້ກ່ຽວ.

**ມາດຕາ 148 (ປັບປຸງ) ການກະທຳຜິດທາງອາຍາຕໍ່ຊັບສິນທາງປັນຍາ**

ການກະທຳຜິດທາງອາຍາຕໍ່ຊັບສິນທາງປັນຍາ ແມ່ນ ການລະເມີດ ມາດຕາ 121, 122, 123, 124, 125 ແລະ/ຫຼື ມາດຕາ 126 ຂອງກົດໝາຍສະບັບນີ້ ໂດຍເຈດຕະນາ.

# ພາກທີ VIII
# ການຄຸ້ມຄອງ ແລະ ກວດກາ
## ໝວດທີ 1
## ການຄຸ້ມຄອງ

**ມາດຕາ 149 (ປັບປຸງ) ອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຊັບສິນທາງປັນຍາ ຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ ໂດຍມອບໃຫ້ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການ ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ສຶກສາທິການ ແລະ ກິລາ, ສາທາລະນະສຸກ, ການເງິນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ ປະກອບດ້ວຍ:

1. ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ;
2. ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ;
3. ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 150 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ**

ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບການພັດທະນາວຽກງານຊັບສິນທາງປັນຍາ ເພື່ອສະເໜີລັດຖະບານພິຈາລະນາ;
2. ຫັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ກົດໝາຍ ເປັນ ແຜນການ, ແຜນງານ ແລະ ໂຄງການລະອຽດ ແລ້ວຈັດຕັ້ງປະຕິບັດ;
3. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຊັບສິນທາງປັນຍາ;
4. ໂຄສະນາ, ເຜີຍແຜ່ ແລະ ສ້າງຈິດສຳນຶກ ກ່ຽວກັບວຽກງານຊັບສິນທາງປັນຍາ ໃຫ້ແກ່ສັງຄົມ;

5. ຊີ້ນຳ, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາໃນຂອບເຂດທົ່ວປະເທດ;

6. ຈົດທະບຽນ ແລະ ໃຫ້ການບໍລິການວຽກງານຊັບສິນທາງປັນຍາ;

7. ອອກ ຫຼື ລຶບລ້າງໃບຢັ້ງຢືນ ກ່ຽວກັບການຈົດທະບຽນຊັບສິນທາງປັນຍາ ແລະ ອອກໃບອະນຸຍາດ ຫຼື ຖອນໃບອະນຸຍາດຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ດຳເນີນການບໍລິການທາງດ້ານຊັບສິນທາງປັນຍາ;

8. ແກ້ໄຂຄຳສະເໜີ, ຂໍ້ຂັດແຍ່ງ ທາງດ້ານບໍລິຫານກ່ຽວກັບຊັບສິນທາງປັນຍາ;

9. ສ້າງຕັ້ງ ຄະນະກຳມະການ ກ່ຽວກັບວຽກງານຊັບສິນທາງປັນຍາ;

10. ກໍ່ສ້າງ ແລະ ຍົກລະດັບພະນັກງານ ທັງພາກລັດ ແລະ ເອກະຊົນ ໃນຂົງເຂດວຽກງານຊັບສິນທາງປັນຍາ;

11. ປະສານສົມທົບ ກັບບັນດາຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງຄຸ້ມຄອງວຽກງານຊັບສິນທາງປັນຍາ;

12. ພົວພັນ ແລະ ຮ່ວມມືກັບສາກົນ ໃນຂົງເຂດວຽກງານຊັບສິນທາງປັນຍາ;

13. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 151 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຊັບສິນທາງປັນຍາ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ສ້າງຈິດສຳນຶກ ກ່ຽວກັບວຽກງານຊັບສິນທາງປັນຍາ ໃຫ້ແກ່ສັງຄົມ;

3. ໃຫ້ການບໍລິການວຽກງານຊັບສິນທາງປັນຍາ;

4. ສະເໜີສ້າງຕັ້ງ ຄະນະກຳມະການ ກ່ຽວກັບວຽກງານຊັບສິນທາງປັນຍາ;

5. ປະສານສົມທົບ ກັບບັນດາພະແນກການອື່ນ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ;

6. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ;

7. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍຂອງຂັ້ນເທິງ;

8. ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ວຽກງານຊັບສິນທາງປັນຍາ ຕໍ່ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 152 (ໃໝ່) ສິດ ແລະ ໜ້າທີ່ ຂອງຫ້ອງການ ວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນງານ, ແຜນການ ແລະ ໂຄງການ ກ່ຽວກັບການພັດທະນາວຽກງານຊັບສິນທາງປັນຍາ;
2. ເຜີຍແຜ່, ສ້າງຈິດສໍານຶກ, ສຶກສາອົບຮົມ ກົດໝາຍ ແລະ ນິຕິກໍາອື່ນ ກ່ຽວກັບວຽກງານຊັບສິນທາງປັນຍາ;
3. ໃຫ້ການບໍລິການວຽກງານຊັບສິນທາງປັນຍາ;
4. ສະເໜີສ້າງຕັ້ງ ຄະນະກໍາມະການ ກ່ຽວກັບວຽກງານຊັບສິນທາງປັນຍາ;
5. ປະສານສົມທົບ ກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ;
6. ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ວຽກງານຊັບສິນທາງປັນຍາ;
7. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຊັບສິນທາງປັນຍາ ຕໍ່ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;
8. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 153 (ໃໝ່) ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ປະສານສົມທົບ ແລະ ໃຫ້ການຮ່ວມມື ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ຕາມພາລະບົດບາດຂອງຕົນ.

**ມາດຕາ 154 (ປັບປຸງ) ຂໍ້ຫ້າມ ສໍາລັບພະນັກງານ-ລັດຖະກອນທີ່ຮັບຜິດຊອບວຽກງານຊັບສິນທາງປັນຍາ**

ຫ້າມພະນັກງານ-ລັດຖະກອນ ທີ່ຮັບຜິດຊອບວຽກງານຊັບສິນທາງປັນຍາ ມີພຶດຕິກໍາ ດັ່ງນີ້:

1. ຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່;
2. ປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທໍາ ຫຼື ລໍາອຽງຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ເປີດເຜີຍຂໍ້ມູນ ກ່ຽວກັບຊັບສິນທາງປັນຍາໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງ;
4. ສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ໝວດທີ 2

## ການກວດກາ

**ມາດຕາ 155 (ປັບປຸງ) ອົງການກວດກາວຽກງານຊັບສິນທາງປັນຍາ**

ອົງການກວດກາ ວຽກງານຊັບສິນທາງປັນຍາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 149 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 156 ສິດ ແລະ ໜ້າທີ່ ຂອງອົງການກວດກາ**

ອົງການກວດກາພາຍໃນ ແລະ ພາຍນອກ ມີ ສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 157 ຮູບການການກວດກາວຽກງານຊັບສິນທາງປັນຍາ**

ການກວດກາວຽກງານຊັບສິນທາງປັນຍາ ດຳເນີນດ້ວຍສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ;
2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມແຜນການປົກກະຕິ ແມ່ນ ການກວດກາ ທີ່ດຳເນີນຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ແມ່ນ ການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

**ມາດຕາ 158 (ປັບປຸງ) ການກວດກາດ້ານຊັບສິນທາງປັນຍາຕາມຊາຍແດນ**

ເພື່ອສະກັດກັ້ນການລະເມີດຊັບສິນທາງປັນຍາ ເຈົ້າໜ້າທີ່ພາສີ ປະຈຳດ່ານຊາຍແດນ ມີສິດໂດຍໜ້າທີ່ (ex-officio) ໃນການກວດກາສິນຄ້າທີ່ສົ່ງອອກ, ນຳເຂົ້າ, ຍຶດ ແລະ ກັກສິນຄ້າ ທີ່ລະເມີດເຄື່ອງໝາຍການຄ້າ, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຕາມກົດໝາຍ.

**ມາດຕາ 159 ການກວດກາຂອງອົງການອື່ນ**

ອົງການອື່ນ ມີສິດ ແລະ ໜ້າທີ່ ກວດກາວຽກງານຊັບສິນທາງປັນຍາ ຕາມພາລະບົດບາດຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IX
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 160 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການຄຸ້ມຄອງ ແລະ ປົກປ້ອງຊັບສິນທາງປັນຍາ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 161 ນະໂຍບາຍຕໍ່ຜູ້ປະດິດສ້າງ ຫຼື ຜູ້ປະດິດຄິດແຕ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການປະດິດສ້າງ ຫຼື ປະດິດຄິດແຕ່ງ ຈະໄດ້ຮັບການຍ້ອງຍໍ, ລາງວັນ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 162 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ແລະ/ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ ເບົາ ຫຼື ໜັກ.

**ມາດຕາ 163 ມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຄັ້ງທຳອິດ ໂດຍບໍ່ເຈດຕະນາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າຕໍ່າກວ່າ 500.000 ກີບ ຈະຖືກສຶກສາອົບຮົມ ຫຼື ກ່າວເຕືອນ.

**ມາດຕາ 164 (ປັບປຸງ) ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 165 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ກ່ຽວກັບຊັບສິນທາງປັນຍາ ໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ໜຶ່ງສ່ວນຮ້ອຍ ຂອງມູນຄ່າຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດເປັນຄັ້ງທີສອງ ໂດຍເຈດຕະນາ ຫຼື ເປັນອາຈິນ ຈະຖືກປັບໃໝ ຫ້າສ່ວນຮ້ອຍ ຂອງມູນຄ່າຄວາມເສຍຫາຍທີ່ໄດ້ກໍ່ຂຶ້ນໃນການລະເມີດແຕ່ລະຄັ້ງ.

**ມາດຕາ 166 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 167 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດສິດຕໍ່ຊັບສິນທາງປັນຍາ ເປັນຕົ້ນ ປອມແປງ, ຕົວະຍົວະຫຼອກລວງ, ແຂ່ງຂັນທີ່ບໍ່ເປັນທຳ ຊຶ່ງກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ, ຜະລິດ, ຂາຍສິນຄ້າປອມ ຫຼື ປອມແປງເຄື່ອງໝາຍການຄ້າ ຫຼື ລະເມີດລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ລະເມີດລະບຽບການອະນຸຍາດການປົກປ້ອງຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ ຈະຖືກລົງໂທດຕາມກົດໝາຍອາຍາ ຫຼື ໜັກ.

**ມາດຕາ 168 ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນມາດຕາ 167 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດອາດຈະໄດ້ຮັບໂທດເພີ່ມ ເຊັ່ນ ໃຈະ, ຖອນໃບອະນຸຍາດ ດຳເນີນກິດຈະການ, ຮິບສິນຄ້າ, ຊັບສິນ ແລະ ພາຫະນະອຸປະກອນ ທີ່ພົວພັນກັບການກະທຳຜິດ ຕາມການຕັດສິນຂອງສານ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 169 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 170 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບເລກທີ 01/ສພຊ, ວັນທີ 20 ທັນວາ 2011.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້